LIBRARIES
UNIVERSITY OF WISCONSIN–MADISON

# Peace talks (Royal Lao Government and Neo Lao Hak Xat). 1973-01

[s.l.]: [s.n.], 1973-01

https://digital.library.wisc.edu/1711.dl/JGE6ZSFWB5V6X8K

This material may be protected by copyright law (Title 17, US Code).

For information on re-use see:
http://digital.library.wisc.edu/1711.dl/Copyright

The libraries provide public access to a wide range of material, including online exhibits, digitized collections, archival finding aids, our catalog, online articles, and a growing range of materials in many media.

When possible, we provide rights information in catalog records, finding aids, and other metadata that accompanies collections or items. However, it is always the user's obligation to evaluate copyright and rights issues in light of their own use.

ບົດປະກອບຄຳເຫັນ

ຂອງ ທ່ານ ພູມ ສີປະເສີດ, ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໒ (ໃນວັນທີ ໒/໑/໑໙໗໓).

---

ບັນດາທ່ານ,

ໃນວາລະປະຊຸມເທື່ອທີ ໑໑ ແລ້ວນີ້, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ສະຫຼຸບສະພາບ ທີ່ພັນແປປ່ຽນ ໄປ ໃນເວລາ ໒ ເດືອນກວ່າ ເຊິ່ງເປັນສິບວາລະປະຊຸມ ທີ່ຜ່ານມາ ແລະ ໄດ້ຊີ້ແຈ້ງໃຫ້ເຫັນວ່າ ຝ່າຍພວກທ່ານ ເວລາໃດ ກໍມີທ່າທີ ຂາດເຈຕະນາດີ ແລະ ມີຫຼັກໝັ້ນອັນດື້ດ້ານ, ພວກທ່ານ ບໍ່ພຽງແຕ່ ບໍ່ລົດລະ ໃນການເດີນຕາມ ບັນດາກົນອຸບາຍວັນສີ້ໂກງຄົດລ້ຽວ ເພື່ອແນໃສ່ກີດຂວາງ, ແກ່ຍາວການເຈລະຈາ, ໜ່ວງໜ່ຽວການແກ້ໄຂ ບັນດາບັນຫາ ຂອງປະເທດຊາດບ້ານເມືອງ ປະຈຸບັນນີ້ເທົ່ານັ້ນ, ຈ້ຳພັດໄດ້ຫາທຸກວິທີທາງ ເພື່ອປິດບັງ ແລະ ຫຼອກລວງຕາງ ສຽງ ວິພາກວິຈານອີກຕື່ມ.

ຕໍ່ຈາກການທີ່ພວກທ່ານ ໃຊ້ເລ່ຫຼ່ຽມ ກ່າວເອົາຄຳສັບ ແລະ ຖ້ອຍຄຳສຳນວນ ໃນຂໍ້ສະເໜີ ໕ ຂໍ້ ຂອງຄະນະຜູ້ແທນ ບັນດາກຳລັງຮັກຊາດ, ໃນວາລະປະຊຸມທີ ໑໐ ເມື່ອວັນທີ ໑໙/໑໒/໑໙໗໒, ຝ່າຍພວກທ່ານ ກໍໄດ້ວາງ ຮ່າງຂໍ້ຕົກລົງ ທີ່ເອົາຕາມແບບ ຮ່າງຂໍ້ຕົກລົງ ທີ່ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ສະເໜີອອກ ໃນວາລະປະຊຸມເທື່ອທີ ໙ ເມື່ອວັນທີ ໑໒/໑໒/໑໙໗໒, ແລ້ວພວກທ່ານ ໄດ້ເວົ້າວ່າ ບັນດາຂໍ້ສະເໜີ ຂອງຝ່າຍພວກທ່ານ ມີບາງຂໍ້ຄ້າຍຄືກັນກັບ ບັນດາຂໍ້ສະເໜີ ຂອງຄະນະຜູ້ແທນ ບັນດາກຳລັງຮັກຊາດ. ອັນນັ້ນ ແມ່ນເລ່ກົນຫຼອກລວງ ທີ່ເລິກແລບທີ່ສຸດ. ໂດຍສະເພາະແມ່ນ ໃນວາລະປະຊຸມເທື່ອທີ ໑໑ ແລ້ວນີ້, ພວກທ່ານ ໄດ້ເວົ້າເຖິງ ບັນດາຂໍ້ຄວາມ ທີ່ເອີ້ນວ່າ "ທັງສອງຝ່າຍ ໄດ້ເປັນເອກະສັນກັນ ໃນດ້ານຫຼັກການ", ບັນດາຂໍ້ທີ່ "ທັງສອງຝ່າຍ ໄດ້ເຫັນດີນຳກັນ ແຕ່ມີທັດສະນະຕ່າງກັນ" ແລະ ບັນດາຂໍ້ທີ່ວ່າ "ທັງສອງຝ່າຍ ຍັງຂັດແຍ້ງກັນ". ຈ້ຳບໍ່ໜຳ, ພວກທ່ານ ໄດ້ກ່າວອ້າງວ່າ ພວກທ່ານ ໄດ້ມີການຜ່ອນສັ້ນຜ່ອນຍາວ ແລ້ວຕ້ອງໃຫ້ຝ່າຍ ບັນດາກຳລັງຮັກຊາດ ກໍຕ້ອງຜ່ອນສັ້ນຜ່ອນຍາວ ເຊັ່ນດຽວກັນ. ດ້ວຍວິທີທາງອັນນັ້ນ ພວກທ່ານ ໄດ້ຕັ້ງແຕ່ວ່າ ຝ່າຍຕົນເປັນຜູ້ທີ່ ພ້ອມເຈລະຈາຢ່າງເຂັ້ມງວດ, ກອງປະຊຸມພ້ອມກ້າວເຂົ້າ ໃນການປຶກສາຫາລື ບັນດາບັນຫາ ຢ່າງເຂັ້ມງວດ.

ໃນວາລະປະຊຸມເທື່ອນີ້, ອີກເທື່ອໜຶ່ງ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ເຫັນຈຳເປັນ ຕ້ອງເປີດໃຫ້ເຫັນແຈ້ງວ່າ ທີ່ຈິງ ພວກທ່ານ ບໍ່ຍອມເຈລະຈາ ຢ່າງເຂັ້ມງວດ, ບໍ່ຍອມຕອບສະໜອງ ບັນດາຂໍ້ສະເໜີ ຂອງບັນດາກຳລັງຮັກຊາດ ແຕ່ຈ້ຳພັດຍັງ ຄົງຮັກສາທ່າທີ, ຫຼັກໝັ້ນ ອັນດື້ດ້ານ ແລະ ບໍ່ຍອມປະລະ ບັນດາກົນອຸບາຍ ວັນສີ້ໂກງ ຄົດລ້ຽວ ແລະ ເລ່ຫຼ່ຽມ ອັນມືດມົນ ເຊິ່ງສະແດງອອກ ໃນຂໍ້ຕ່າງໆ ດັ່ງນີ້:

໑/. ຝ່າຍພວກທ່ານ ຈຳເປັນຕ້ອງເວົ້າເຖິງ ຫຼັກການຈຳນວນໜຶ່ງ ເຊິ່ງແມ່ນບັນດາຂໍ້ສະເໜີ ທີ່ບັນດາກຳລັງຮັກຊາດ ໄດ້ວາງອອກ, ແຕ່ຈ້ຳພັດປະຕິເສດ ເງື່ອນໄຂອັນພື້ນຖານ ເພື່ອປະຕິບັດ ບັນດາຫຼັກການເຫຼົ່ານັ້ນ ແລະ ໃຊ້ການບິດເບືອນ ທັງໃສ່ຮ້າຍປ້າຍສີ ຂໍ້ສະເໜີດັ່ງກ່າວ:

ບັນດາຂໍ້ສະເໜີຂອງຕົນ, ບັນດາກຳລັງຮັກຊາດ ໄດ້ຢືນຢັນ ຄຸນຄ່າການເມືອງ ແລະ ກົດໝາຍ ຂອງສັນຍາເຈນີວ ປີ ໑໙໖໒ ທີ່ໄດ້ຮັບຮູ້ ເອກະລາດ, ອຳນາດອະທິປະໄຕ, ຄວາມເປັນກາງ, ເອກະພາບ ແລະ ພື້ນແຜ່ນ

ດິນອັນຄົບຖ້ວນ ຂອງ ພະລາຊະອານາຈັກລາວ, ໄດ້ວາງອອກ ບັນດາບັນຫາ ປຸກເຊົາການສູ້ຮົບ, ປະຕິບັດການຢຸດຍິງ, ຟື້ນຟູສັນຕິພາບຄືນໃໝ່, ເຄົາລົບນັບຖື ແລະ ຮັບຮອງ ບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຮົາ. ບັນດາກຳລັງຮັກຊາດ ໄດ້ເພີຣໃຫ້ເຫັນແຈ້ງວ່າ ການແຊກແຊງ ແລະ ຮຸກຮານ ດຳເນີນລ່າເມືອງຂຶ້ນແບບໃໝ່ ກໍຄືການພົວພັນ ທາງການທະຫານ ຂອງຈັກກະພັດອາເມລິກາຢູ່ລາວ ເປັນສາຣເຫດຕົ້ນຕໍ ໂດຍກົງ ທີ່ທຳລາຍ ສັນຍາເຈນີວ ປີ ໑໙໖໒, ທຳລາຍຄວາມເປັນ ເອກະລາດ. ອະທິປະໄຕ, ຄວາມເປັນກາງ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບ ຖ້ວນ ຂອງປະເທດເຮົາ. ໂດຍອີງໃສ່ການຊ່ອຍເຫຼືອ ດ້ວຍເງິນໂດລາ ແລະ ອາວຸດ, ດ້ວຍກຳລັງ ທີ່ປຶກສາ ແລະ ພະນັກງານ ທະຫານ ທີ່ນຸ່ງເຄື່ອງແບບສາມັນຊົນ ອັນຫຼວງຫຼາຍ ໄດ້ກາຍເປັນກົງຈັກ ບັນຊາການສົງຄາມ ອັນເຊື່ອງໜ້າ ເຊິ່ງສະຖານທູດອາເມລິກາ ປະຈຳຢູ່ວຽງຈັນ ເປັນຫົວສະໝອງນັ້ນ, ຈັກກະພັດອາເມລິກາ ໄດ້ລ້ຽງເກືອ, ໃຊ້ກອງທະຫານຝ່າຍຂວາ ກໍຄື "ກຳລັງພິເສດ" ວາງປາວ, ແລະ ໃຊ້ກອງທະຫານຫຼວງໄທ ເປັນເຄື່ອງມື ເພື່ອດຳເນີນ ແລະ ຊຸກຍູ້ "ສົງຄາມພິເສດ" ອັນປ່າເຖື່ອນທີ່ສຸດ ຢູ່ໃນປະເທດເຮົາ ແນໃສ່ ດັບສູນບັນດາກຳລັງຮັກຊາດ, ບັງຄັບໃຫ້ປະຊາຊົນເຮົາຕ້ອງຍອມເປັນຂ້ອຍຂ້າ ມ້າຕ່າງ, ເອົາປະເທດເຮົາ ເປັນ ເມືອງຂຶ້ນແບບໃໝ່ ແລະ ຖານທັບກໍ່ສົງຄາມ ຂອງອາເມລິກາ. ໂດຍໝູນໃຊ້ ຫຼັກຕຳລາ "ກຳລັງໄຟ ອັນແຮງທີ່ສຸດ ຂອງອາເມລິກາ ບວກກັບ ກອງທະຫານລູກມື" ຂອງ "ທິດສະດີ ນິກຊັນ", ພວກມັນ ໄດ້ເພີ່ມທະວີ ບັນດາການໂຈມຕີໃສ່ປະເທດເຮົາ ແຕ່ເໜືອຮອດໃຕ້ ຢ່າງຮ້າຍແຮງທີ່ສຸດ ດ້ວຍກຳລັງທັບອາກາດ, ນັບທັງກອງທັບອາກາດ ຍຸດທະສາດ, ໄດ້ກໍ່ໂທດກຳອັນປ່າເຖື່ອນ ຢ່າງຫຼວງຫຼາຍກ່າຍກອງ ຕໍ່ປະຊາຊົນເຮົາ. ຊາວລາວທຸກຄົນ ທີ່ມີສະຕິຕໍ່ຊາດ, ມີນ້ຳໃຈຮັກຊາດ ຮັກແພງປະຊາຊົນ ລ້ວນແຕ່ຂົດແຄ້ນ ແລະ ຮູ້ສຶກເຈັບຊ້ຳໜ້າໃຈ ຕໍ່ພາບ ອັນເສົ້າສະຫຼົດໃຈ ຂອງປະເທດຊາດ ກໍຄື ພີ່ນ້ອງຮ່ວມຊາດເຮົາ ເຊິ່ງແມ່ນ ພວກຈັກກະພັດ ອາເມລິກາ ແລະ ລູກມື ເປັນຜູ້ກໍ່ຂຶ້ນ.

ອັນນັ້ນ ແມ່ນຄວາມຈິງ ແຫ່ງສະພາບການ ຂອງປະເທດເຮົາ ໃນປະຈຸບັນ. ດ້ວຍເຫດນັ້ນ, ເພື່ອໃຫ້ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຄວາມເປັນກາງ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນ ຂອງປະເທດເຮົາ ໄດ້ຮັບການເຄົາລົບນັບຖື ຢ່າງສຸດຂີດ ຕາມບັນດາຫຼັກການ ສັນຍາເຈນີວປີ ໑໙໖໒ ເພື່ອຟື້ນຟູ ສັນຕິພາບຄືນໃໝ່, ປະຕິບັດ ແລະ ຮັບປະກັນ ບັນດາສິດປະໂຫຍດ ແລະ ບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຮົາ, ອາເມລິກາຕ້ອງຢຸດເຊົາການແຊກແຊງ ແລະ ຮຸກຮານ ພ້ອມດ້ວຍການກ່ຽວຂ້ອງ ການທະຫານຢູ່ປະເທດເຮົາ. ອັນນັ້ນ ແມ່ນເງື່ອນໄຂ ອັນພື້ນຖານຕົ້ນຕໍ ເພື່ອຟື້ນຟູ ສັນຕິພາບ ແລະ ແກ້ໄຂ ບັນດາບັນຫາ ປະຈຸບັນນີ້ ຂອງບ້ານເມືອງເຮົາ.

ພວກທ່ານ ຈຳເປັນຕ້ອງເວົ້າເຖິງການເຄົາລົບ ນັບຖື ສັນຍາເຈນີວປີ ໑໙໖໒, ເຄົາລົບນັບຖື ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນ ຂອງປະເທດເຮົາ, ປຸກເຊົາ ການສູ້ຮົບ, ປະຕິບັດການຢຸດຍິງ, ສ້າງສັນຕິພາບຄືນໃໝ່, ປະຕິບັດ ແລະ ຮັບປະກັນ ບັນດາສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຮົາ ດັ່ງທີ່ ບັນດາກຳລັງຮັກຊາດ ໄດ້ສະເໜີແລ້ວນັ້ນ, ແຕ່ວ່າ ພວກທ່ານ ບໍ່ແຕະຕ້ອງຫັງ ເຖິງການແຊກແຊງ ແລະ ຮຸກຮານ ພ້ອມດ້ວຍການກ່ຽວຂ້ອງ ທາງທະຫານ ຂອງ ອາເມລິກາເລີຍ. ພວກທ່ານ ໄດ້ຕັ້ງໃຈປະຕິເສດ ຄວາມເປັນຈິງ ແຫ່ງສະພາບການ ຂອງ ປະເທດເຮົາ ໃນປະຈຸບັນນີ້, ປະຕິເສດເງື່ອນໄຂພື້ນຖານ ເພື່ອແກ້ໄຂບັນດາບັນຫາ ຂອງປະເທດເຮົາ ປະຈຸບັນນີ້. ສິ່ງເຫຼົ່ານັ້ນ ໄດ້ສະແດງໃຫ້ເຫັນວ່າ ຝ່າຍພວກທ່ານ ບໍ່ຈິງໃຈຢາກແກ້ໄຂບັນຫາ ຂອງບ້ານເມືອງເຮົາໃນຄຣາວນີ້.

ພວກທ່ານ ບໍ່ກ້າຮັບຮູ້ ຢ່າງເປີດເຜີຍ ການແຊກແຊງ ແລະ ຮຸກຮານ ພ້ອມດ້ວຍການກ້ຽວຂ້ອງ ທາງການທະຫານ ຂອງອາເມລິກາ ຢູ່ປະເທດເຮົານັ້ນ, ກໍ່ຍອມວ່າ ການຮັບຮູ້ເຊັ່ນນັ້ນ ຈະເປັນການລົບກຳສີ ທຸກຈຸ້ມ ກ່ຽວກັບ "ເອກະລາດ", "ເປັນກາງ", "ຖືກຕ້ອງຕາມກົດໝາຍ", "ຖືກຕ້ອງຕາມລັດຖະທຳມະນູນ", "ປະຊາທິປະໄຕ" ອັນປອມແປງ ທີ່ພວກທ່ານ ໄດ້ທ່າໃຫ້ແກ່ກົງຈັກປົກຄອງ ລູກມືຂອງຈັນ ປະຈຸບັນນັ້ນ, ພວກທ່ານ ຈຳຕ້ອງ ຫາວິທີ ເພື່ອປົກປິດການແຊກແຊງ ແລະ ຮຸກຮານ ຂອງອາເມລິກາ, ມີແຕ່ວິທີອັນດຽວ ທີ່ບອກທ່ານ ອາດຈະເຮັດໄດ້ນັ້ນ ແມ່ນບິດເບືອນ ແລະ ໃສ່ຮ້າຍປ້າຍສີ ບັນດາກຳລັງຮັກຊາດ ແລະ ປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ. ເຖິງວ່າ ພວກທ່ານບໍ່ໄດ້ລົດລະ ໃນການໃຊ້ບັນດາຖ້ອຍທຳນອງ ໃສ່ຮ້າຍປ້າຍສີ ອັນຈິນເດີ ຂອງອາເມລິກາ ແລະ ລູກມື, ແຕ່ ກໍ່ບໍ່ສາມາດຈະຫຼອກລວງຜູ້ໃດໄດ້ດອກ. ຄວາມຈິງ ການທີ່ພວກທ່ານ ສືບຕໍ່ບິດເບືອນ ແລະ ໃສ່ຮ້າຍປ້າຍສີ ຢ່າງບໍ່ອາດເປີດແປນນັ້ນ ກໍ່ບໍ່ສາມາດ ຈະຖົມຂຸມລູກລະເບີດ ຂອງອາເມລິກາ ນັບເປັນໝື່ນໆຂຸມ ທີ່ຢາດຢາຍ ໃນທົ່ວປະເທດເຮົາ ເຊິ່ງເປັນບັນດາຫຼັກຖານ ອັນແຈ້ງຈັດ ກ່ຽວກັບ ການຮຸກຮານ ຂອງອາເມລິກາ ໃຫ້ເຕັມໄດ້.

ມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງເພີ່ມໃຫ້ເຫັນແຈ້ງຕື່ມອີກວ່າ ບັນດາຖ້ອຍທຳນອງ ເສກສົມປັ້ນແຕ່ງ ຂອງຝ່າຍພວກທ່ານນັ້ນ ບໍ່ມີນັບມີລັກສະນະ ຫຍາບຊ້າ ແລະ ຈອງຫອງ. ຖ້າວ່າ ພວກທ່ານ ຫາກຢາກສະແດງວ່າ ຕົນເປັນຝ່າຍໜຶ່ງ ທີ່ຮ່ວມເຈລະຈາ ມີໜ້າທີ່ຮັບຜິດຊອບຕົນເອງ ແລະ ເຂັ້ມງວດແລ້ວ ພວກທ່ານ ຈົ່ງຢຸດຕິບັນດາ ຖ້ອຍທຳນອງອັນຫຍາບຊ້າ ທີ່ພວກທ່ານເຄີຍເວົ້າ ໃນທຸກວາລະ ກອງປະຊຸມນັ້ນເສຍ.

໒/. <u>ຝ່າຍພວກທ່ານ ກໍ່ເວົ້າເຖິງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ເຄົາລົບນັບຖື ລັດຖະທຳມະນູນ, ພ້ອມກັນນັ້ນ ກໍ່ໃສ່ຮ້າຍປ້າຍສີວ່າ ບັນດາກຳລັງຮັກຊາດ ຕັ້ງໃຈແບ່ງແຍກ ປະເທດ, ລະເມີດ ລັດຖະທຳມະນູນ, ແຕ່ວ່າ ຝ່າຍພວກທ່ານ ຈຳພັດປະຕິເສດ ການສ້າງຕັ້ງ ວິງການຈັດຕັ້ງການເມືອງໃໝ່ ອັນໜຶ່ງ ທີ່ສອດຄ່ອງກັບສະພາບການຕົວຈິງ ຂອງປະເທດເຮົາ ໃນປະຈຸບັນ ເພື່ອປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ.</u>

ບັນດາກຳລັງຮັກຊາດ ໄດ້ເພີ່ມໃຫ້ເຫັນແຈ້ງຫຼາຍເທື່ອແລ້ວວ່າ ສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ ແມ່ນສາຍເຫດຕົ້ນຕໍໂດຍກົງ ທີ່ກໍ່ໃຫ້ສະພາບການ ຂອງປະເທດເຮົາ ປະຈຸບັນນີ້ເກີດມີ ສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ແລະ ກຳລັງປະກອບອາວຸດ. ນັ້ນ ແມ່ນຕົວຈິງອີກອັນໜຶ່ງ ຂອງສະພາບການຢູ່ລາວປະຈຸບັນນີ້.

ມີເຫດໜຶ່ງ, ໃນຂໍ້ສະເໜີ ກ ຂ ເມື່ອວັນທີ ໒໔/໑໐/໑໙໖໒ ຝ່າຍພວກທ່ານ ກໍ່ໄດ້ຮັບຮູ້ ໃນລະດັບອັນຈຳກັດ ຕໍ່ຄວາມເປັນຈິງ ພາວະວິໄສອັນນັ້ນ. ຂໍ້ທີ່ ໔ ໃນຂໍ້ສະເໜີດັ່ງກ່າວ ຂອງຝ່າຍພວກທ່ານ ໄດ້ເວົ້າເຖິງຄວາມພົວພັນ ໃນການໄປມາຢ້ຽມຢາມຂ່າວ ລະຫວ່າງ ປະຊາຊົນໃນສອງເຂດ, ເຂດໜຶ່ງ ພວກທ່ານເອີ້ນວ່າ ເຂດຄວບຄຸມຂອງແນວລາວຮັກຊາດ ແລະ ອີກເຂດໜຶ່ງ ພວກທ່ານເອີ້ນວ່າ ຂອງ "ຝ່າຍລັດຖະບານ", ແຕ່ວ່າ ລຸນມາ, ພວກທ່ານ ບໍ່ພຽງແຕ່ ໄດ້ຕັ້ງແກ້ວບໍ່ຮັບຮູ້ຄວາມເປັນຈິງ ອັນໜັກແໜ້ນນັ້ນ ຫາກຍັງໃສ່ຮ້າຍປ້າຍສີວ່າ ບັນດາກຳລັງຮັກຊາດ ຕັ້ງໃຈຈະແບ່ງແຍກປະເທດ, ລ່ວງລະເມີດ ລັດຖະທຳມະນູນ. ອັນນັ້ນ ແມ່ນການພິກປີ້ນ ແລະ ສໍ້ໂກງຄົດລ້ຽວ ຂອງພວກທ່ານ. ຍິ່ງກວ່ານັ້ນອີກ, ພວກທ່ານ ຍັງຮ້ອງໂຮ ຫວງໃຫ້ບັນດາກຳລັງຮັກຊາດ ຕ້ອງເຂົ້າຮ່ວມ ວົງສາຕະນາຍາດແຫ່ງຊາດ. ທັງໝົດແລ້ວ ພວກທ່ານ ໄດ້ລົມດົນຖ້ອຍທຳນອງ ອັນຈິນເດີຍ ຂອງອາເມລິກາ ແລະ ລູກມື. ພວກມັນເອງເປັນຜູ້ທຳລາຍ ຄວາມເປັນເອກະພາບ ແຕ່ຈຳພັດ ໄດ້ເຄີຍຮ້ອງໂຮໃຫ້ຜູ້ອື່ນ ຕ້ອງຮ່ວມກັບເຂົາ ເປັນອັນໜຶ່ງອັນດຽວ.

ບັນດາກຳລັງຮັກຊາດ ຮັບຮູ້ໄດ້ຢ່າງຖືກຕ້ອງວ່າ ຂຸມແຫ່ງຄວາມແບ່ງແຍກ ໂດຍພວກອາເມລິກາ ແລະ ລູກມື ເປັນຜູ້ກໍ່ຂຶ້ນ ຢູ່ໃນປະເທດເຮົານັ້ນ ບໍ່ອາດຈະຖົມໃຫ້ເຕັມ ໃນມື້ໜຶ່ງຍາມດຽວໄດ້, ແຕ່ຕ້ອງມີເວລາ ແລະ ເງື່ອນໄຂ ອັນເໝາະສົມ ເພື່ອປະຕິບັດ ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ໄປແຕ່ລະກ້າວໆ. ອີງໃສ່ບົດຮຽນ ແຫ່ງປະຫວັດສາດ ແລະ ສະພາບການຕົວຈິງ ຢູ່ປະເທດເຮົາ ໃນປະຈຸບັນ, ດ້ວຍເຈດຈຳນົງ ອັນແຮງກ້າ ຕໍ່ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ບັນດາກຳລັງຮັກຊາດ ໄດ້ສະເໜີການສ້າງຕັ້ງ ອົງການຈັດຕັ້ງການເມືອງໃໝ່ ອັນໜຶ່ງ ທີ່ປະກອບດ້ວຍ ສະພາປະສົມການເມືອງ ແລະ ລັດຖະບານປະສົມ ຊົ່ວຄາວແຫ່ງຊາດ ຊຸດໃໝ່ ເພື່ອສ້າງບັນດາເງື່ອນໄຂການເມືອງ ອັນຈຳເປັນ ທີ່ຮັກສາສັນຕິພາບ ແລະ ຄວາມສະຫງົບໄວ້ໄດ້, ປະຕິບັດໄປແຕ່ລະກ້າວ ຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ໃນສະໄໝ ສັນຕິພາບ ຫາກໍ່ກັບຄືນມາ ຈົນຮອດເມື່ອສຳເລັດການເລືອກຕັ້ງ ລັດຖະສະພາ ແລະ ສ້າງຕັ້ງ ລັດຖະບານປະສົມແຫ່ງຊາດ ເປັນທາງການ. ສະພາປະສົມການເມືອງ ປະກອບດ້ວຍ ພາກສ່ວນອັນກວ້າງຂວາງ ນັບທັງຜູ້ຕາງໜ້າຂອງ ພະບໍລົມມະວົງສານຸວົງ ແມ່ນອົງການສູງສຸດ ຂອງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ ໃນສະໄໝຫົວລ້ຽວຕົວຕໍ່ ທີ່ຍັງມີສອງເຂດ, ສອງອຳນາດການປົກຄອງ ຄົງຕົວຢູ່ຊົ່ວຄາວ, ມີຫຼາຍບັນຫາ ທີ່ຍັງຄ້າງຄາ ທີ່ມີຄວາມພົວພັນເຖິງສອງເຂດ ທີ່ຈຳເປັນຕ້ອງໃຫ້ ບັນດາຝ່າຍທີ່ກ່ຽວຂ້ອງ ສືບຕໍ່ປຶກສາຫາລືກັນ ເພື່ອແກ້ໄຂ ບົນພື້ນຖານ ແຫ່ງຄວາມສະເໝີພາບ, ບໍ່ໄດ້ບີບບັງຄັບກັນ.

ເລີ່ມແຕ່ ການປະຕິເສດ ຄວາມເປັນຈິງ ຂອງສະພາບການຢູ່ປະເທດເຮົາ ໃນປະຈຸບັນນີ້ ເຊິ່ງກ່າວມາຂ້າງເທິງນັ້ນ, ຝ່າຍພວກທ່ານ ໄດ້ກ້າວໄປເຖິງ ຂັ້ນປະຕິເສດ ການສ້າງຕັ້ງ ສະພາປະສົມການເມືອງ ໂດຍ ໄດ້ອ້າງວ່າ ອັນນັ້ນ ແມ່ນນອກເໜືອຈາກບັນດາ ຂໍ້ບັນຍັດ ແຫ່ງ ລັດຖະທຳມະນູນ. ພວກທ່ານ ຍັງໄດ້ບິດເບືອນ ວ່າ ຂໍ້ສະເໜີ ດັ່ງກ່າວ ຂອງບັນດາກຳລັງຮັກຊາດ ແມ່ນເອົາຕາມແບບ ຂອງຫວຽດນາມ, ຄຳກ່າວອ້າງ ຂອງພວກທ່ານ ແມ່ນບໍ່ມີມູນຄວາມຈິງຈັກດັ່ງເລີຍ, ຖ້ອຍຄຳນອງ ເສກສັນປັ້ນແຕ່ງ ຂອງພວກທ່ານ ແມ່ນຍັງກາດເປີດແປນ ແລະ ຕຣາບຊາ ຢ່າງທີ່ສຸດ.

ຕາມຄວາມຈິງແລ້ວ, ໃນປະຫວັດສາດ ກໍ່ໄດ້ເຄີຍມີ ກໍລະນີ ອັນນອກເໜືອ ຈາກຂອບເຂດ ຂອງລັດຖະທຳມະນູນ ເຊັ່ນ ການສ້າງຕັ້ງລັດຖະບານປະສົມ ຊົ່ວຄາວແຫ່ງຊາດປີ ໑໙໖໒ ຕາມລະບຽບການ ອັນພິເສດ ໂດຍບໍ່ໄດ້ຜ່ານ "ລັດຖະສະພາ", ແລະ ເລື່ອງນັ້ນ ກໍ່ບໍ່ຝືນຕໍ່ ລັດຖະທຳມະນູນ ແຕ່ຢ່າງໃດເລີຍ. ຍິ່ງກວ່ານັ້ນ, ສະພາປະສົມການເມືອງ ແມ່ນຜະລິດຕະພັນ ອັນພິເສດ ອັນໜຶ່ງ ຂອງສະພາບການ ພິເສດອັນໜຶ່ງ ຢູ່ປະເທດເຮົາ ໃນປະຈຸບັນ ເຊິ່ງບໍ່ໄດ້ມີມາ ຈັກເທື່ອ ແລະ ກໍ່ບໍ່ຄືກັບ ອົງການ ນິຕິບັນຍັດ ຫຼືອົງການ ບໍລິຫານໃດໆ ທີ່ບົ່ງໄວ້ໃນລັດຖະທຳມະນູນເລີຍ, ດັ່ງນັ້ນ ມັນຈິ່ງບໍ່ມີ ຄວາມກ່ຽວຂ້ອງ ເຖິງບັນດາ ບົດບັນຍັດ ລັດຖະທຳມະນູນ.

ການສ້າງຕັ້ງ ສະພາປະສົມການເມືອງ ຕາມຂໍ້ສະເໜີ ຂອງບັນດາກຳລັງຮັກຊາດ ແມ່ນສອດຄ່ອງກັບ ພົນປະໂຫຍດ ຂອງຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ສອດຄ່ອງກັບ ພົນປະໂຫຍດ ອັນແທ້ຈິງ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວ ທົ່ວຊາດທຸກປະການ, ດັ່ງນັ້ນ ມັນຈິ່ງໄດ້ຮັບຄວາມເຫັນດີ ເຫັນພ້ອມ ແລະ ຊົມເຊີຍ ຢ່າງສຸດອົກສຸດໃຈ ຈາກປະຊາຊົນເຮົາ ທຸກຊັ້ນຄົນ, ນັບທັງບັນດາຜູ້ຄົນໃນກົງຈັກ ອຳນາດການປົກຄອງວຽງຈັນປະຈຸບັນ ທີ່ ມີສະຕິຊາດ ສ່ວນໃດສ່ວນໜຶ່ງ, ມີແຕ່ບັນດາບຸກຄົນ ທີ່ຍອມຕົວ ເປັນລູກມື ຜູ້ບວກໄດ້ໃຈປີ້ນ ໃຫ້ແກ່ອາເມລິກາທີ່ພວມມີ ຖານະຕຳແໜ່ງ ໃນກົງຈັກ ອຳນາດການປົກຄອງວຽງຈັນ, ພະຍາຍາມເກາະຫ້ອຍ ໃສ່ບັນດາສິດປະໂຫຍດພິເສດອັນນັ້ນ ຈິ່ງຫາທຸກວິທີທາງ ຄັດຄ້ານຕ້ານຄືນ ການສ້າງຕັ້ງ ສະພາປະສົມການເມືອງ.

ຄ/. <u>ພວກທ່ານ ໃນຂັ້ນຕົ້ນ ໄດ້ປະຕິເສດແລ້ວ ຕໍ່ມາ ກໍ່ໄດ້ເອົາເຖິງການ ສ້າງຕັ້ງ ລັດຖະບານປະສົມ ຊົ່ວຄາວແຫ່ງຊາດຊຸດໃໝ່, ແຕ່ໃນພາກຕົວຈິງແລ້ວ ຝ່າຍພວກທ່ານ ຍັງມີກົນອຸບາຍ ບັງລັບຈັບຍຶດກົງຈັກອຳນາດ ການປົກ</u>

**ຄວາມຫມື່ນວຽງຈັນ ປະຈຸບັນນີ້ ເຂົ້າໃນ ການແກ້ໄຂບັນຫາບັນຫາການເມືອງ:**

ບັນດາກຳລັງຮັກຊາດ ໄດ້ສະເໜີການສ້າງຕັ້ງ ລັດຖະບານປະສົມ ຈົ່ວຄາວແຫ່ງຊາດຊຸດໃໝ່ ດ້ວຍພາກສ່ວນປະກອບຮ່ວມມີ ແນວລາວຮັກຊາດ, ກຳລັງເປັນກາງຮັກຊາດ, ບັນດາຜູ້ຊົງຄຸນວຸດທິ ທີ່ເຫັນດີເຫັນພ້ອມ ນຳສັນຕິພາບ, ຄວາມເປັນກາງ, ເອກະລາດ, ປະຊາທິປະໄຕ, ແລະ ຝ່າຍວຽງຈັນ.

ທຸກຄົນ ລ້ວນຮູ້ດີແລ້ວວ່າ, ໃນຂະບວນການຕໍ່ສູ້ບາດກ້າວໄກ ຮ່ວມໄມ້ຮ່ວມມືກັບ ແນວລາວຮັກຊາດ ເພື່ອຕໍ່ສູ້ກູ້ຊາດ ຕ້ານອາເມລິການັ້ນ; ກຳລັງເປັນກາງຮັກຊາດ ໄດ້ກາຍເປັນ ກຳລັງການເມືອງຫນຶ່ງ ອັນສຳຄັນ, ມີອົງການນຳແມ່ນຄະນະຮ່ວມສຳພັນ ໂດຍແມ່ນ ທ່ານ ຄຳສຸກ ແກ້ວລາ ເປັນປະທານ, ມີກຳລັງປະກອບອາວຸດຕ່າງຫາກ ຂອງຕົນ, ກຳລັງເປັນກາງຮັກຊາດ ຕ້ອງມີບົດບາດ ຖານະ ອັນບໍ່ອາດຈະຂາດໄດ້ ໃນການແກ້ໄຂບັນຫາປະຈຸບັນນີ້ ຂອງປະເທດຊາດ ບ້ານເມືອງ ແລະ ເປັນຝ່າຍກຳລັງຂອງຝ່າຍຫນຶ່ງ ທີ່ຈຳເປັນຕ້ອງມີຜູ້ຕາງຫນ້າ ໃນອົງການຈັດຕັ້ງການເມືອງໃໝ່. ນອກຈາກນັ້ນ, ຄຽງຂ້າງກັບກຳລັງເປັນກາງຮັກຊາດ ຍັງມີບຸກຄົນຊົງຄຸນວຸດທິ, ນັກຮຽນຜູ້ຮັກຊາດ ອັນຫນາແຫນ້ນ ທີ່ເຫັນດີເຫັນພ້ອມນຳສັນຕິພາບ, ຄວາມເປັນກາງ, ເອກະລາດ ແລະ ປະຊາທິປະໄຕ ຢູ່ທັງສອງເຂດ ກໍ່ຕ້ອງມີຜູ້ຕາງຫນ້າໃນລັດຖະບານປະສົມ ຈົ່ວຄາວແຫ່ງຊາດຊຸດໃໝ່.

ລັດຖະບານປະສົມ ຈົ່ວຄາວແຫ່ງຊາດ ປະກອບດ້ວຍ ພາກສ່ວນ ຜູ້ຕາງຫນ້າທຸກກຳລັງ ກຳລັງການເມືອງ ດັ່ງກ່າວນີ້ ຕາມຄຳສະເໜີ ຂອງບັນດາກຳລັງຮັກຊາດ ແມ່ນສົມເຫດສົມຜົນທີ່ສຸດ, ມັນສິ່ງແສງເຖິງສະພາບການຕົວຈິງ ຢູ່ປະເທດເຮົາ ໃນປະຈຸບັນນີ້ ຢ່າງຖືກຕ້ອງ.

ເພື່ອປະຕິເສດ ຂໍ້ສະເໜີ ຂອງບັນດາກຳລັງຮັກຊາດ, ຝ່າຍພວກທ່ານ ໄດ້ສະເໜີ ຫຼັກຕຳລາ "ລັດຖະບານປັບປຸງໃໝ່" ແລະ "ສະພາ ຂະຫຍາຍສ່ວນ", ໃນມື້ນີ້, ຝ່າຍພວກທ່ານ ຈຳຕ້ອງເວົ້າເຖິງ ລັດຖະບານປະສົມຈົ່ວຄາວແຫ່ງຊາດຊຸດໃໝ່, ແຕ່ຈຳພັກຫລວງໃຫ້ ລັດຖະບານປະສົມ ຈົ່ວຄາວແຫ່ງຊາດຊຸດໃໝ່ ຕ້ອງໄດ້ຮັບການສ້າງຕັ້ງຂຶ້ນ ໃນຂອບເຂດສາມຝ່າຍຄື ປີ ໑໙໖໔, ຫມາຍຄວາມວ່າ ພວກທ່ານ ຫວັງຈະແກ້ດັ່ງເວົ້າ ປະຫວັດສາດ ໃຫ້ກັບຄືນມາຫາສະໄຫມກ່ອນຫນ້ານີ້ ໑໐ ປີ ໂດຍບໍ່ເອົາຕົວຈາດບັນດາການຫັນປ່ຽນອັນໃຫຍ່ຫຼວງ ຂອງສະພາບການ ໃນປະຈຸບັນນີ້, ພວກທ່ານ ໄດ້ຫຼັບຕາ ແລ້ວເວົ້າມະລຸມມະເລືອຍວ່າ ອັນທີ່ເອີ້ນວ່າ "ຝ່າຍກາງ ຂອງສະເດັດເຈົ້າສຸວັນນະພູມາ" ນັ້ນ ຍັງຍືນຍົງຄົງຕົວຢູ່ ແລະ ມັນແມ່ນຝ່າຍກາງທີ່ແທ້ຈິງ.

ໃນເວລານັ້ນ ຝ່າຍພວກທ່ານ ຍັງຄົງຕິດປ້າຍປອມແປງ "ລັດຖະບານປະສົມຈົ່ວຄາວແຫ່ງຊາດສາມຝ່າຍ" ໃຫ້ແກ່ອຳນາດການປົກຄອງວຽງຈັນ ປະຈຸບັນນີ້ ແລະ ອອກແຮງ ແຕ່ງແຕ້ມໃຫ້ມັນດ້ວຍ ບັນດາເຄື່ອງປະດັບ "ເປັນກາງ", "ເອກະລາດ", "ຖືກຕ້ອງຕາມກົດຫມາຍ", "ຖືກຕ້ອງຕາມ ລັດຖະທຳມະນູນ", "ປະຊາທິປະໄຕ"ແລະ ອື່ນໆ.

ບັນດາກຳລັງຮັກຊາດ ໄດ້ຊີ້ອອກຫຼາຍເທື່ອແລ້ວວ່າ ອຳນາດການປົກຄອງວຽງຈັນປະຈຸບັນ ເປັນພຽງແຕ່ອຳນາດການປົກຄອງລູກມື ໂດຍແມ່ນອາເມລິກາ ປັ້ນແຕ່ງຂຶ້ນ ຈາກການລັດຖະປະຫານ ວັນທີ ໑໙/໔/໑໙໖໔, ເປັນເຄື່ອງມືລ່າເມືອງຂຶ້ນແບບໃໝ່ ອັນຫນຶ່ງ ເພື່ອປົກຄອງປະຊາຊົນເຮົາ ແລະ ດຳເນີນສົງຄາມຮຸກຮານ ຢູ່ປະເທດເຮົາ. ເພື່ອແນໃສ່ຈຸດປະສົງຫຼອກລວງ, ອາເມລິກາ ແລະ ພວກລູກມື ຍັງຄົງຮັກສາ ສະເດັດເຈົ້າສຸວັນນະພູມາໄວ້ເປັນ "ນາຍົກລັດຖະມົນຕີ" ພາຍຫຸ່ນ ທີ່ພວກລູກມື ປັ່ນຫົວເພິ່ນ, ແລະ ຍັງຄົງເອີ້ນອຳນາດການປົກຄອງອັນນີ້ວ່າ "ລັດຖະບານປະສົມ ຈົ່ວຄາວແຫ່ງຊາດສາມຝ່າຍ". ອຳນາດການປົກຄອງນີ້ ໄດ້ອວກແຮງ ຕໍ່ແຄ່ງຕໍ່ຂາ ໃຫ້ອາເມລິກາ ດຳເນີນ ບັນດາການເຄື່ອນທັບບຸກໂຈມຕີຍາດຍຶດເຂດປົດປ່ອຍ ບັນດາກຳລັງຮັກຊາດ ແລະ ບັນດາການໂຈມຕີ ລ້າງຜານ ດ້ວຍກອງທັບອາກາດຕະຫຼອດໃນໄລຍະ ໙ ປີ ທີ່ຜ່ານມາ, ໄດ້ໃຫ້ອາເມລິກາ ນຳເອົາກອງທະຫານຫຸ່ນໄຊ່ງ່ອນ ແລະ ກອງທະຫານຫຼວງໄທ

ເຂົ້າຫາລາວ ເພົ້າພານປະເທດເຮົາ, ໄດ້ ປະຕິບັດແຜນການ ກວາດຕ້ອນ ເອົາປະຊາຊົນເຂົ້າໃນບັນດາ "ເຂດອົບພະຍົບຫຼົບໄພ" ຢ່າງຊຸ້ນຊ້ອນ ເພື່ອເພີ່ມທະວີ ການກອບໂກຍ ເອົາຈັບສົມເງິນທອງ ເຫື່ອແຮງ ຂອງປະຊາຊົນເຮົາ ຮັບໃຊ້ໃຫ້ແກ່ "ສົງຄາມພິເສດ" ຂອງອາເມລິກາ. ພຽງແຕ່ ການກະທຳຂາຍຊາດ, ທຳຮ້າຍປະຊາຊົນເຫຼົ່ານັ້ນ ຂອງອຳນາດການປົກຄອງວຽງຈັນ ກໍໄດ້ກໍໂທດກຳ ອັນໃຫຍ່ຫຼວງຕ່າງໆ ຕໍ່ປະຊາຊົນ ແລະ ຕໍ່ຊາດເຮົາ. ຂໍຖາມເບິ່ງວ່າ, ເມື່ອເປັນເຊັ່ນນັ້ນແລ້ວ ຄວາມເປັນ ເອກະລາດ, ອຳນາດອະທິປະໄຕ, ຄວາມເປັນກາງ ແລະ ປະຊາທິປະໄຕ ມັນໄປໃສໝົດແລ້ວ, ຫຼືວ່າໄດ້ສູນເສຍ ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ໄດ້ກາຍເປັນຂ້ອຍຂ້າມ້າໃຊ້ ແລະ ໄດ້ຟື້ນຕໍ່ປະຊາທິປະໄຕແລ້ວ?. ຝ່າຍວຽງຈັນ ຍັງຈະແລ່ນຕາມເງິນໂດລາ, ຍັງຈະຍອມເປັນລູກມືໃຫ້ອາເມລິກາຫຼູ້ຊຸກຮານ ເພື່ອຫາຄວາມລ້ຳລວຍ ເທິງກອງກະດູກ ແລະ ເລືອດເນື້ອເຫື່ອແຮງ ຂອງປະຊາຊົນເຮົາ ໄປຮອດໃສອີກ ?.

ບັນດາກຳລັງຮັກຊາດ ກໍໄດ້ເພີ່ຍແຜ່ໃຫ້ເຫັນແຈ້ງແລ້ວວ່າ ພາຍຫຼັງຈາກການລັດຖະປະຫານເດືອນ ໔/໑໙໖໔, ພາກສ່ວນປະກອບສາມຝ່າຍ ປີ ໑໙໖໒ ໄດ້ຖືກອາເມລິກາ ແລະ ຝ່າຍຂວາ ທຳລາຍ ແລະ ດັບສູນແລ້ວ. ກົນອຸບາຍ ຂອງອາເມລິກາ ແລະ ຝ່າຍຂວາ ກົນກົນຝ່າຍເປັນກາງ ໄດ້ຮີດໃຫ້ ຫຼັ້ນເປັນກາງຮັກຊາດ ຈຳຕ້ອງລຸກຂຶ້ນຕໍ່າໂຮມກັນເຂົ້າ ເປັນກຳລັງ ເປັນກາງຮັກຊາດ ໂດຍແມ່ນ ທ່ານ ຄຳສຸກ ແກ້ວລາ ເປັນຫົວໜ້າ. ສ່ວນ ສະເດັດເຈົ້າ ສຸວັນນະພູມາ ພ້ອມດ້ວຍຜູ້ຕິດສອຍໂອກາດ ທີ່ລະຍົດ ຈຳນວນໜຶ່ງ ໃນຝ່າຍເປັນກາງ ໄດ້ກາຍເປັນຫາງອັນໜຶ່ງ ຂອງຝ່າຍຂວາ, ເປັນລູກມືທີ່ນັບມື້ນັບເອົາການເອົາງານ ໃຫ້ພວກອາເມລິກາຫຼູ້ຊຸກຮານ. ສະເດັດເຈົ້າ ສຸວັນນະພູມາເອງ ກໍໄດ້ປະກາດ ຢ່າງເປີດເຜີຍວ່າ ຝ່າຍຂວາ ແລະ ພັກຝ່າຍຂອງເພິ່ນ ໄດ້ຮວມກັນເຂົ້າເປັນຝ່າຍດຽວ ໂດຍແມ່ນເພິ່ນເອງ ເປັນຕົວແທນ. ເພາະສະນັ້ນ, ການເອີ້ນວ່າ ພວກທ່ານ ເປັນຝ່າຍວຽງຈັນ ໂດຍແມ່ນ ສະເດັດເຈົ້າ ສຸວັນນະພູມາ ເປັນຫົວໜ້ານັ້ນ ແມ່ນຖືກຕ້ອງເໝາະສົມທີ່ສຸດແລ້ວ.

ດ້ວຍເຫດນັ້ນ, ຝ່າຍພວກທ່ານ ບໍ່ອາດຈະຫວງໃຫ້ ຂ້າງຕົວລັດຖະບານປະສົມ ຊົ່ວຄາວແຫ່ງຊາດຊຸດໃໝ່ ໃນຂອບເຂດສາມຝ່າຍ ປີ ໑໙໖໒ ໄດ້. ຄຳປະທ້ວງດັ່ງກ່າວນັ້ນ ຂອງຝ່າຍພວກທ່ານ ບໍ່ມີມູນຖານຄວາມຈິງຈັກດີເລີຍແລະ ໄຮ້ເຫດຜົນ ທີ່ສຸດ. ຫຼັກຄຳວ່າ "ລັດຖະບານປະສົມ ຊົ່ວຄາວແຫ່ງຊາດຊຸດໃໝ່ ໃນຂອບເຂດ ສາມຝ່າຍປີ ໑໙໖໒" ແລະ "ສະພາ ຂະຫຍາຍສ່ວນ" ທີ່ພວກທ່ານໄດ້ສະເໜີອອກນັ້ນ ແມ່ນເພື່ອປົກປິດກົນອຸບາຍ ໜ່ວງໜ່ຽວ ຮັກສາກົງຈັກອຳນາດການປົກຄອງລູກມື ອາເມລິກາ ປະຈຸບັນນີ້ ດ້ວຍການ "ດັດແປງແກ້ໄຂ" ບາງຢ່າງ ແລ້ວນຳເອົາກົງຈັກ ອຳນາດການປົກຄອງນັ້ນ ມາຍັດໃສ່ການແກ້ໄຂ ບັນດາບັນຫາການເມືອງ ປະຈຸບັນນີ້. ອັນນັ້ນ ເປັນພຽງການຫຼອກລວງ, ແນ່ນອນ ບໍ່ແມ່ນການພ້ອມສົມພ້ອມຍາວ ດັ່ງທີ່ພວກທ່ານໄດ້ເວົ້າ, ພວກຂ້າພະເຈົ້າ ປະຕິເສດ ຢ່າງເດັດຂາດ.

໔/. <u>ຝ່າຍພວກທ່ານ ບໍ່ພຽງແຕ່ບໍ່ຍອມຕອບສະໜອງ ບັນດາຂໍ້ສະເໜີ ຂອງບັນດາກຳລັງຮັກຊາດ ຫາກຍັງແກ່ຍາວ, ດຶງດານ ບໍ່ຍອມແກ້ໄຂບັນດາບັນຫາ ລະບຽບການ ທີ່ຍັງຄ້າງຄາ ເພື່ອແນໃສ່ຍືດຍາວ ແກ່ຍາວ ໃຫ້ການເຈລະຈາ ຍືດຍາວຕື່ມອີກ:</u>

ເຫັນວ່າ ພວກຂ້າພະເຈົ້າ ໄດ້ຄັດຄ້ານຢ່າງເດັດຂາດ ຫຼາຍເທື່ອແລ້ວ, ແຕ່ມາປະຈຸບັນນີ້ ພວກທ່ານ ຍັງບໍ່ຍອມ ເອົາທຸງ ທີ່ພວກທ່ານປັກໃສ່ໃນຫ້ອງປະຊຸມ ຕາມລຳພັງໃຈນັ້ນ ອອກຈາກຫ້ອງປະຊຸມ, ຍັງບໍ່ຍອມປະລະ ຊື່ ແລະ ຖານະ ອັນປອມແປງ "ຜູ້ຕາງໜ້າ ຂອງລັດຖະບານປະສົມ ຊົ່ວຄາວແຫ່ງຊາດ", ເຊິ່ງເປັນລັດຖະບານ ທີ່ຖືກໂຄ່ນລົ້ມ ແຕ່ກ່ອນໜ້ານີ້ ໒ ປີ.

ສິ່ງທີ່ເປັນອັນຕະລາຍຮ້າຍແຮງ ທີ່ຫາກເກີດຂຶ້ນ ໃນເວລານີ້ນີ້ ແມ່ນໃນວາລະປະຊຸມທີ ໑໑ ແລ້ວນີ້ ພວກທ່ານ ໄດ້ປະກາດວ່າ ຖ້າພວກຂ້າພະເຈົ້າ ຫາກບໍ່ຍອມຮັບຮູ້ ແລະ ຖານະອັນປອມແປງ ຂອງຄະນະຜູ້ແທນພວກທ່ານ

ແລ້ວ ພວກທ່ານ ກໍຈະເຫັນ, ບໍ່ເຈລະຈາອີກ, ຄຳປະກາດດັ່ງກ່າວ ຂອງພວກທ່ານ ບໍ່ອາດຈະນາບຊູ້ ກໍດີ ບໍ່ອາດຈະຖົມຄວາມຮັບຜິດຊອບ ໃຫ້ພວກຂ້າພະເຈົ້າໄດ້ດອກ. ກົງກັນຂ້າມ, ຝ່າຍພວກທ່ານ ຕ້ອງຮັບຜິດຊອບຕໍ່ທັງໝົດ ທຸກຢ່າງທີ່ພວມຂຶ້ນຊູ່ດັ່ງກ່າວ ຂອງພວກທ່ານ ໄດ້ກ່ອນ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຢືນຢັນວ່າ ບໍ່ສາມາດຈະມີການເຈລະຈາ ຢ່າງເຂັ້ມງວດ ໃນເມື່ອຝ່າຍໜຶ່ງທີ່ຮ່ວມເຈລະຈາ ຍັງດື້ງເກາະທ້ອງເວົ້າຈີ້ ແລະ ຖາມະວົນປວນແປງ ຖືຕົນເອງວ່າ ເປັນຕົວແທນ ຂອງສິ່ງທີ່ບໍ່ມີຊີວິດຈິງອີກແລ້ວ, ຍ້ອນວ່າ ເຈລະຈາກັບຝ່າຍໜຶ່ງ ທີ່ຖືຕົນເອງວ່າ ເປັນຕົວແທນໃຫ້ແກ່ເງົາຜີອັນນັ້ນແລ້ວ ກໍບໍ່ອາດຈະແກ້ໄຂບັນຫາຫຍັງໝົດໄດ້.

ຖ້າພວກທ່ານ ຫາກຍັງດື້ດ້ານ, ບໍ່ຍອມປະລະ ຈີ້ ແລະ ຖາມະ ວົນປວນແປງດັ່ງກ່າວແລ້ວ ກໍໝາຍຄວາມວ່າໄດ້ຂັດຂວາງການເຈລະຈາ, ເຮັດໃຫ້ການເຈລະຈາ ບໍ່ອາດຈະບັນລຸເຖິງຜົນສຳເລັດໄດ້, ແລະ ພວກທ່ານເອງ ຕ້ອງເປັນຜູ້ຮັບຜິດຊອບ ຕໍ່ສິ່ງເຫຼົ່ານັ້ນ ຢ່າງເຕັມທີ່.

໔/. <u>ໃນເມື່ອໃຊ້ກົນອຸບາຍ ແກ່ຍາວການເຈລະຈາ, ຝ່າຍພວກທ່ານ ພວມອອກແຮງປະຕິບັດ ແຜນການເພີ່ມທະວີສົງຄາມຮຸກຮານ ຂອງອາເມລິກາ, ຊຸກຍູ້ການເຄື່ອນໄຫວ ທາງການທະຫານ ຢ່າງຂຸ້ນຂຽວ ເພື່ອຫວັງຍາດເອົາທ່າແຮງ ໃນການເຈລະຈາ:</u>

ຕະຫຼອດໃນ ໔ ເດືອນກວ່າ ທີ່ຜ່ານມາ, ໃນເມື່ອກອງປະຊຸມ ຍັງຢືນຢູ່ບ່ອນເກົ່າ ຍ້ອນບັນດາກົນອຸບາຍອັດຂວາງຂອງຝ່າຍພວກທ່ານ, ອາເມລິກາ ແລະ ຝ່າຍພວກທ່ານ ບໍ່ໄດ້ຢຸດລະ ຊຸກຍູ້ບັນດາການເຄື່ອນທັບ ບຸກໂຈມຕີ ບຸກຍຶດເຂດກອດກາ ຂອງບັນດາກຳລັງຮັກຊາດ ຢ່າງຂະໜາດໃຫຍ່, ໂດຍສະເພາະແມ່ນຢູ່ ບໍລິເວນ ທົ່ງໄຫຫີນ-ຊຽງຂວາງແລະ ພາກລາວໃຕ້. ອາເມລິກາ ໄດ້ເພີ່ມທະວີ ບັນດາການໂຈມຕີ ດ້ວຍກອງທັບອາກາດ ນັບທັງເຮືອບິນຍຸດທະສາດບີ-໕໒ ຂຶ້ນເຖິງລະດັບຮ້າຍແຮງ ກວ່າເວລາໃດໝົດ. ໃນເວລານັ້ນ, ອາເມລິກາ ໄດ້ລຳລຽງອາວຸດ, ເຄື່ອງອຸປະກອນສົງຄາມ ເພີ່ມເຕີມ ໃຫ້ກອງທະຫານຝ່າຍຂວາວຽງຈັນ ແລະ "ກຳລັງພິເສດ" ວາງປາວ, ເພີ່ມທະວີກຳລັງຂອງ ບັນດາກອງທະຫານລູກມືເຫຼົ່ານັ້ນ ແລ້ວຈັດຕັ້ງບັນດາກອງທະຫານເຫຼົ່ານັ້ນ ເປັນກົມກອງ ເຄື່ອນທີ່ໃຫຍ່ຫຼາຍກົມກອງຂະໜາດກອງພົນນ້ອຍ ແລະ ກອງພົນ. ພ້ອມກັນນັ້ນ, ອາເມລິກາ ໄດ້ນຳເອົາກອງທະຫານຫຼວງໄທ ຫຼາຍກົມກອງເຂົ້າປະເທດເຮົາຕື່ມອີກ, ໄດ້ຍົກຈຳນວນກົມກອງທະຫານຫຼວງໄທ ທີ່ປະຈຳຢູ່ໃນປະເທດເຮົາ ຂຶ້ນເຖິງ ໓໔ ກອງພັນ ທະຫານຮາບ ແລະ ທະຫານປືນໃຫຍ່.

ຫວ່າງແລ້ວນີ້, ຕາມແຜນການ ຂອງອາເມລິກາ, ອຳນາດການປົກຄອງລູກມື ວຽງຈັນ ໄດ້ແຕ່ງຕັ້ງຄະນະກຳມະການທາງການທະຫານ ແລະ ການເມືອງ ໄປພົບພວກກຳອຳນາດປົກຄອງຫຸ່ນໄຊງ່ອນ, ພະນົມເປັນ ແລະ ພວກກຳອຳນາດປະຕິການບາງກອກ ເພື່ອປຶກສາຫາລື ການປະສານສົມທົບ ໃນການເຄື່ອນໄຫວ ທາງດ້ານການທະຫານ ແລະສ້າງຕັ້ງ "ພັນທະພາບ ທາງການທະຫານ ລະຫວ່າງ ສີ່ປະເທດ" ໃນຂອບເຂດ "ພັນທະພາບ ພາກພື້ນ" ຂອງ "ທິດສະດີ ນິກສັນ". ໄປພ້ອມໆ ກັບບັນດາການເຄື່ອນໄຫວດັ່ງກ່າວ ມາເທື່ອນີ້, ຫວ່າງແລ້ວນີ້, ຫຼັງຈາກໄດ້ໄປໄຊງ່ອນ, ພະນົມເປັນ, ນາຍພົນ ແຮກ ຜູ້ຊ່ວຍທີ່ປຶກສາ ກ່ຽວກັບຄວາມສະຫງົບປອດໄພ ແຫ່ງຊາດ ຂອງນິກສັນ ກໍໄດ້ມາວຽງຈັນ ເພື່ອປຶກສາຫາລືກັບ ຝ່າຍພວກທ່ານ. ເປັນອັນແນ່ນອນວ່າ ນາຍພົນ ແຮກ ມາວຽງຈັນ ບໍ່ແມ່ນຈະນຳມາ ເຊິ່ງຄວາມເປັນ ສັນຕິພາບ ໃຫ້ແກ່ລາວ, ແຕ່ຫາກໄດ້ຂົນເອົາລະເບີດ ລູກປືນ ມາເພີ່ມເຕີມ ເພື່ອຂ້າຟັນ ທຳຮ້າຍ ປະຊາຊົນເຮົາ.

ສະພາບການທັງໝົດເຫຼົ່ານີ້ ໄດ້ສະແດງໃຫ້ເຫັນວ່າ ອາເມລິກາ ແລະ ຝ່າຍພວກທ່ານ ພວມຊຸ້ນຂ້ອງ ກະ ກຽມບັນດາ ບາດກ້າວ ສ່ຽງໄພ ທາງການທະຫານໃໝ່ ທີ່ອັນຕະລາຍທີ່ສຸດ. ເປັນອັນຈະແຈ້ງວ່າ ຝ່າຍພວກທ່ານ ພວມອອກແຮງ ປະຕິບັດແຜນການ ເພີ່ມທະວີສົງຄາມຮຸກຮານ ຂອງອາເມລິກາ, ບໍ່ແມ່ນວ່າ ພວກທ່ານ ຈິງໃຈຢາກ ແກ້ໄຂບັນດາບັນຫາ ປະຈຸບັນນີ້ ຂອງປະເທດ ໂດຍສັນຕິວິທີ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຮຽກຮ້ອງ ຝ່າຍພວກທ່ານ ຈົ່ງແຍກຕົວອອກຈາກ ການຄວບຄຸມ ຂອງອາ ເມລິກາ, ປະລະຄວາມໃຝ່ຝັນ ຢາກເຈລະຈາ ໃນທ່າແຮງ ແລ້ວກ້າວເຂົ້າ ເຈລະຈາ ຢ່າງເຂັ້ມງວດ. ຝ່າຍພວກ ທ່ານ ຈົ່ງຕອບສະໜອງ ບັນດາຂໍ້ສະເໜີ ຂອງບັນດາ ກຳລັງຮັກຊາດ ຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ກ່ອນອື່ນໝົດ ແມ່ນຕອບບັນດາບັນຫາ ອັນຮີບດ່ວນ ດັ່ງລຸ່ມນີ້ :

໑/- ອາເມລິກາ ຕ້ອງຢຸດເຊົາ ການຮຸກຮານ ປະເທດເຮົາ, ເປັນຕົ້ນແມ່ນ ຕ້ອງຢຸດເຊົາ ການຖິ້ມລະເບີດ, ຕ້ອງໃຊ້ຄ່າເສຍຫາຍ ໃຫ້ແກ່ປະຊາຊົນ, ແລະ ປະເທດເຮົາ ເຊິ່ງເກີດມາຈາກສົງຄາມຮຸກຮານ ຂອງຈັກກະພັດອາເມລິກາ.

໒/- ອາເມລິກາ ຕ້ອງຖອນທີ່ປຶກສາ, ພະນັກງານ ທະຫານຂອງອາເມລິກາ ແລະ ປະເທດບໍລິວານ ອອກ ຈາກລາວໃຫ້ໝົດ, ຕ້ອງຖອນກອງທະຫານໄທໃຫ້ໝົດ, ລົບລ້າງກຳລັງພິເສດ ເຊິ່ງແມ່ນອາເມລິກາຈັດຕັ້ງຂຶ້ນ, ລົ້ມ ເລີກ ແລະ ບັງຄັບບັນຊາພັ້ນ ໃນທັນທີ, ຕ້ອງຢຸດເຊົາ ການຕິດພັນທາງທະຫານ ຂອງອາເມລິກາ ຕໍ່ລາວ ຢ່າງຕະຫຼອດການ.

໓/- ຝ່າຍວຽງຈັນ ຕ້ອງຮີບເຕັ້ນດີ ຈັດຕັ້ງ ສະພາປະສົມການເມືອງ ເຊິ່ງແມ່ນ ອົງການຈັດຕັ້ງສູງສຸດ ແຫ່ງ ຄວາມຖືກຕ້ອງປອງດອງຊາດ ໃນທັນທີ.

໔/- ຕ້ອງຈັດຕັ້ງ ລັດຖະບານປະສົມ ແຫ່ງຊາດຊົ່ວຄາວຊຸດໃໝ່ ທີ່ມີສ່ວນປະກອບ ແລະ ກົງຈັກທີ່ເໝາະ ສົມ, ປະກອບດ້ວຍ ສາມຝ່າຍ ຄື:

- ແນວລາວຮັກຊາດ,
- ຄະນະ ຮ່ວມສຳພັນ ກຳລັງເປັນກາງ ຮັກຊາດ ເຊິ່ງແມ່ນ ທ່ານ ຄຳສຸກ ແກ້ວລາ ເປັນຜູ້ ນຳ ແລະ ຜູ້ຊົງຄຸນນະວຸດທິ ປັນຍາຊົນ ທີ່ຮັກຊາດ.
- ຝ່າຍວຽງຈັນ ເຊິ່ງແມ່ນ ສະເດັດ ເຈົ້າສຸວັນນະພູມາ ເປັນຫົວໜ້າ.

໕/- ຕ້ອງເຮັດໃຫ້ເມືອງວຽງຈັນ ເປັນກາງ ເພື່ອເປັນບ່ອນຕັ້ງ ແລະ ເຄື່ອນໄຫວ ຂອງສະພາປະສົມ ການເມືອງ ແລະ ລັດຖະບານປະສົມ ແຫ່ງຊາດຊົ່ວຄາວຊຸດໃໝ່.

໖/- ຕ້ອງກຳນົດ ຖານະ ຂອງຄະນະຜູ້ແທນສອງຝ່າຍ ຢ່າງຈະແຈ້ງ ດັ່ງໄດ້ເວົ້າຢູ່ໃນ ຂໍ້ສະເໜີ ຂອງບັນ ດາກຳລັງຮັກຊາດ, ໝາຍຄວາມວ່າ ຝ່າຍໜຶ່ງແມ່ນ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ແລະ ອີກຝ່າຍໜຶ່ງແມ່ນ ຄະ ນະຜູ້ແທນ ຂອງອຳນາດການປົກຄອງວຽງຈັນ, ຕ້ອງຢຸດເຊົາ ການປັກຫົວໃສ່ໃນຫ້ອງປະຊຸມ. ບັນດາກຳລັງຮັກຊາດ ບໍ່ ຮັບຮູ້ຜູ້ໃດ ທີ່ເອົາຊື່ປອມມາໃສ່ໃຫ້ຕົນວ່າ ເປັນຜູ້ຕາງໜ້າ ໃຫ້ອົງການໃດໜຶ່ງ ທີ່ໄດ້ຖືກໂຄ່ນລົ້ມໄປແລ້ວແຕ່ ປີ ໑໙໖໔, ໝາຍຄວາມວ່າ ໄດ້ຕາຍໄປແລ້ວ; ຜູ້ທີ່ໃຊ້ ຖານະ ອັນທີ່ຕາຍໄປແລ້ວ ບໍ່ອາດຈະແກ້ໄຂຫຍັງໄດ້.

---

13ème séance
9.1.73
9 JAN 1973

# ບົດປະກອບຄຳເຫັນ

ຂອງ ທ່ານ ພູມ ສີປະເສີດ, ຫົວຫນ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ, ກ່າວໃນວາລະປະຊຸມ ເທື່ອທີ ໑໓ (ໃນວັນທີ່ ໙/໑/໑໙໗໓).

---

ບັນດາທ່ານ,

ດ້ວຍເຈດຕະນາດີ ຢາກແກ້ໄຂບັນຫາຕ່າງໆ ຂອງປະເທດຊາດ ໃນປະຈຸບັນ ໂດຍສັນຕິວິທີ, ບັນດາກຳລັງຮັກຊາດ ໄດ້ເປັນເຈົ້າການ ເຮັດໃຫ້ກອງປະຊຸມ ເຈລະຈາ ລະຫວ່າງ ບັນດາຝ່າຍ ທີ່ກ່ຽວຂ້ອງເກີດຂຶ້ນ ຢູ່ທີ່ວຽງຈັນໂດຍໄວ, ອັນເປັນການ ຕອບສະຫນອງ ຄວາມຕ້ອງການ ຂອງປະຊາຊົນເຮົາ ແລະ ທາງສຽງຢູ່ໃນໂລກ. ອັນນັ້ນ ແມ່ນເຈດຕະນາດີ ທີ່ບໍ່ມີຜູ້ໃດ ສາມາດບິດເບືອນໄດ້. ຄຽງຄູ່ກັບທ່າທີອັນເຕັມໄປດ້ວຍ ເຈດຕະນາດີດັ່ງກ່າວມານັ້ນ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຍັງໄດ້ວາງຂໍ້ສະເຫນີຕ່າງໆ ທີ່ຖືກຕ້ອງ, ສົມເຫດສົມຜົນອອກ ແນໃສ່ແກ້ໄຂບັນຫາລາວ ໂດຍສັນຕິວິທີ ບົນພື້ນຖານ ສັນຍາເຈນີວປີ ໑໙໖໒ ແລະ ສະພາບການຕົວຈິງ ຂອງບ້ານເມືອງເຮົາ ໃນປະຈຸບັນ. ບັນດາຂໍ້ສະເຫນີດັ່ງກ່າວ ປະກອບດ້ວຍ ວິທີການຕົວຈິງຕ່າງໆ:

- ຢຸດເຊົາການດຳເນີນສົງຄາມຮຸກຮານ ອັນເຕັມໄປດ້ວຍໂທດກຳ ຂອງອາເມລິກາ ໃນຫຼາຍສິບປີ ຕໍ່ປະຊາຊົນເຮົາ ໂດຍທັນທີ, ຢຸດເຊົາການຕິດພັນທາງທະຫານ ແລະ ທຸກຮູບການ ແຊກແຊງຂອງອາເມລິກາ ຕໍ່ປະເທດເຮົາ ຢ່າງຕະຫຼອດການ, ຮັບປະກັນໃຫ້ຄວາມເປັນ ເອກະລາດ, ອະທິປະໄຕ ແລະ ພືນແຜ່ນດິນ ອັນລົບຖ້ວນຂອງລາວ ໄດ້ຮັບການ ເຄົາລົບນັບຖື ຢ່າງເຖິງທອງ ຖືກຕ້ອງຕາມຫຼັກການຕ່າງໆ ຂອງສັນຍາເຈນີວປີ ໑໙໖໒.

- ແກ້ໄຂຂຸມ ແຫ່ງຄວາມແບ່ງແຍກ ຂວາງຂັ້ນ ລະຫວ່າງຄົນລາວນຳກັນ ເຊິ່ງແມ່ນພວກ ອາເມລິກາຜູ້ຮຸກຮານ ແລະ ພວກລູກແຫຼ່ງຕີນມື ເປັນຜູ້ກໍ່ຂຶ້ນ ໃນສອງເທື່ອກ່ອນນີ້, ປະຕິບັດຄວາມຖືກຕ້ອງ ປອງດອງ ແລະ ເອກະພາບແຫ່ງຊາດ ໄປເທື່ອລະກ້າວ ບົນພື້ນຖານ ສະພາບການຕົວຈິງ ຂອງບ້ານເມືອງເຮົາ ໃນປະຈຸບັນ ທີ່ມີສອງເຂດ, ສອງອຳນາດການປົກຄອງ, ສາມກຳລັງການເມືອງ ເຊິ່ງບໍ່ໃຫ້ຝ່າຍໃດບັງບຽດ ແລະ ກີນກີນກັນ. ໃນວິທີການດັ່ງກ່າວ ມີສອງບັນຫາ ອັນເປັນພື້ນຖານດີ ການສ້າງຕັ້ງ ສະພາປະສົມການເມືອງ ແລະ ລັດຖະບານປະສົມ ຊື່ວຄາວແຫ່ງຊາດຊຸດໃຫມ່ ໂດຍມີບົດບາດ, ພາລະຫນ້າທີ່, ສິດ ແລະ ໂຄງຮ່າງຈັດຕັ້ງ ດັ່ງທີ່ຄະນະຜູ້ແທນ ພວກຂ້າພະເຈົ້າໄດ້ສະເຫນີມາຫຼາຍຄັ້ງຫຼາຍເທື່ອແລ້ວ.

ດ້ວຍເຈດຕະນາດີ ຂອງບັນດາກຳລັງຮັກຊາດ, ພວກຂ້າພະເຈົ້າ ມີເຈດຈຳນົງ ຢາກແກ້ໄຂສົງຄາມຮຸກຮານ ທີ່ອາເມລິກາ ກໍ່ຂຶ້ນຢູ່ໃນປະເທດເຮົາ ໃຫ້ແລ້ວໂດຍໄວ ພ້ອມກັນກັບການແກ້ໄຂ ບັນດາບັນຫາ ທີ່ຍັງຄ້າງຄາ ລະຫວ່າງ ບັນດາຝ່າຍລາວທີ່ກ່ຽວຂ້ອງ ເພື່ອສ້າງສັນຕິພາບຄືນໃຫມ່ ແລະ ປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດໄປເທື່ອລະກ້າວ ບົນພື້ນຖານ ອັນຫມັ້ນຄົງ ຖາວອນ, ບໍ່ອາດຈະປະໃຫ້ ພວກຈັກກະພັດອາເມລິກາ ມາກ່ຽວຂ້ອງ ກັບວຽກງານ ຂອງບ້ານເມືອງເຮົາ ເຊິ່ງອາດຈະເຮັດໃຫ້ສົງຄາມລະເບີດຄືນໃຫມ່ ດີດັ່ງທີ່ເປັນມາແລ້ວໃນ ການໂຮມລາວສອງເທື່ອເມື່ອປີ ໑໙໕໗ ແລະ ໑໙໖໒.

ແຕ່ເປັນຫນ້າເສັຽດາຍທີ່ສຸດ ທີ່ຝ່າຍພວກທ່ານ ບໍ່ໄດ້ຕອບສະຫນອງ ເຈດຕະນາດີດັ່ງກ່າວ ຂອງພວກຂ້າພະເຈົ້າ ແຕ່ຢ່າງໃດເລີຍ, ສະເພາະຢ່າງຍິ່ງ, ໃນຄຳປະກາດຕ່າງໆ ຂອງເພິ່ນ ຫວ່າງມໍ່ໆມານີ້, ສະເດັດເຈົ້າ ສຸວັນນະພູມາ

ຕໍ່ຫນ້າຝ່າຍຈີນ ບໍ່ໄດ້ລົງເລ ໃນການໃສ່ຮ້າຍປ້າຍສີ ຢ່າງໄຮ້ເຫດຜົນທີ່ສຸດ, ໄດ້ສະແດງທ່າທີ ເປັນເຈົ້າໃຫຍ່ນາຍໂຕ ຕໍ່ຝ່າຍ ບັນດາກຳລັງຮັກຊາດ ແລະ ຍັງຄົງດຳເນີນຮັກສາຫຼັກຫມັ້ນ ໃນການແກ້ໄຂບັນດາບັນຫາ ຂອງບ້ານເມືອງ, ພະຍາຍາມເກາະຫາ ອາເມລິກາ ແລະ ອີງໃສ່ລູກລະເບີດ ລູກປືນ ຂອງອາເມລິກາ ເພື່ອມາບຸກຮູກທຳລາຍຊາດທັງຫຼາຍ. ດອຍເຫດນັ້ນ, ໃນວາລະປະຊຸມເທື່ອນີ້, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຈຶ່ງເປັນຕ້ອງຊີ້ແຈງໃຈແຍກ ບັນຫາຕ່າງໆ ທີ່ສະເດັດ ເຈົ້າສຸວັນນະພູມາ ແລະ ພວກທ່ານ ໄດ້ສະເຫນີອອກ ໃນທ່າງນີ້ ໃຫ້ກະຈ່າງແຈ້ງ ຕໍ່ຫນ້າຜູ້ຮັວວິພາກວິຈານ ເພື່ອໃຫ້ຮູ້ວ່າ ອົງການ ກຳອຳນາດວຽງຈັນ ໄດ້ປະຕິບັດກົນອຸບາຍ ຂອງອຳນາດການປົກຄອງ ນິກຊັນ ຕໍ່ປະເທດຊາດວັນແສນຮັກ ແລະ ທວງແຫນ ຂອງພວກເຮົາແນວໃດ.

໑/- ການທີ່ ສະເດັດເຈົ້າ ສຸວັນນະພູມາ ແລະ ພວກທ່ານ ບໍ່ຄືດລະ ໃນການຮ້ອງໂຮ ໃສ່ຮ້າຍປ້າຍສີວ່າ ປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຮຸກຮານລາວ ແລະ ແນວລາວຮັກຊາດເປັນ "ລູກມື ຂອງຫວຽດນາມເຫນືອ" ນັ້ນ, ປະຊາຊົນເຮົາ ທຸກຊັ້ນຄົນ ແລະ ທາງສັງໃນໂລກ ໃຜ ກໍຮູ້ດີແລ້ວວ່າ ອັນນັ້ນ ເປັນພຽງແຕ່ ຖ້ອຍຄຳນອງອັນເກົ່າແກ່ ຫຼາສະໄຫມ ເພື່ອພະຍາຍາມປິດບັງ ການຮຸກຮານ ຂອງອາເມລິກາ ຢູ່ປະເທດເຮົາ ແລະ ບັນດາປະເທດໃນອິນດູຈີນເທົ່ານັ້ນ. ພວກຂ້າພະເຈົ້າ ໄດ້ເຄີຍເປີດແປ ກົນອຸບາຍ ອັນສໍ້ໂກງ ຄືດັ່ງກ່າວ ຂອງຝ່າຍພວກທ່ານ. ຫຼາຍເທື່ອມາແລ້ວ, ນັ້ນ ຂ້າພະເຈົ້າ ເຫັນຈຳເປັນຕ້ອງ ຊີ້ແຈງໃຫ້ເຫັນແຈ້ງຕື່ມອີກ, ໃນຫຼາຍປີມານີ້, ປະຊາຊົນຫວຽດນາມ ກໍດີ ປະຊາຊົນລາວ ແລະ ກຳພູຊາ ແມ່ນຜູ້ທີ່ຖືກເຄາະຮ້າຍ ຈາກການຮຸກຮານ ຂອງລັດທິ ຈັກກະພັດນິຍົມ ເປັນຕົ້ນແມ່ນ ຈັກກະພັດອາເມລິກາ. ພວກເຂົາ ໃຊ້ທຸກຢ່າງກົນອຸບາຍ ອັນປ່າເຖື່ອນ ເພື່ອຂ້າຟັນ ທຳຮ້າຍ ປະຊາຊົນ ທັງສາມປະເທດ, ໃຊ້ທຸກເລ່ຫຼ່ຽມ ອັນເລິກແລບ ເພື່ອແບ່ງແຍກ ກໍຄວາມອາຄາດບາດຫມາງ ລະຫວ່າງປະຊາຊົນສາມຊາດ. ແຕ່ໃນສະໄຫມ ປະຈຸບັນ ປະຊາຊົນສາມປະເທດ ໃນອິນດູຈີນ ໄດ້ຮູ້ຈຳແນກ ຂາວກັບດຳ, ຖືກກັບຜິດ, ຮູ້ວ່າ ໃຜແມ່ນມິດ, ໃຜແມ່ນສັດຕູ, ຮູ້ວ່າ ໃຜແມ່ນຜູ້ຮຸກຮານ, ໃຜແມ່ນຜູ້ຖືກຮຸກຮານ, ດັ່ງນັ້ນ ປະຊາຊົນສາມຊາດ ໃນອິນດູຈີນ ຈຶ່ງໄດ້ພາກັນຄືເປັນປຶກແຜ່ນແຫນນຫນາ ຮ່ວມໃນຮ່ວມມືກັນ ຕ້ານກັບສັດຕູຮ່ວມ ຄື ຈັກກະພັດອາເມລິກາຜູ້ຮຸກຮານ ແລະ ພວກລູກມື, ຍາດເອົາໄຊຊະນະ ອັນໃຫຍ່ຫຼວງຕະຫຼອດມາ. ທົ່ວໂລກ ໄດ້ເຫັນຫນ້າມາຕາ ແລະ ສະຫນັບສະຫນູນ ປະຊາຊົນສາມຊາດ ໃນອິນດູຈີນ ຢ່າງແຂງແຮງ ໃນການຕໍ່ສູ້ ຕ້ານການຮຸກຮານ ຂອງຈັກກະພັດ ອາເມລິກາ.

ຫວ່າງແລ້ວນີ້, ນິກຊັນ ໄດ້ມີການກະທຳ ອັນປ່າເຖື່ອນ ແລະ ກະຫາຍເລືອດ ໂດຍໄດ້ໃຊ້ເຮືອບິນ ບີ-໕໒ ນັບເປັນຮ້ອຍລຳ ມາຖິ້ມລະເບີດ ແບບຫນ້າກະດານລົງໃສ່ ນະຄອນຫຼວງ ຮ່າໂນ້ຍ, ຮ່າຍຟອງ, ແລະ ບ່ອນອື່ນໆ ແຫ່ງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ທຳລາຍລ້າງຜານ ເຂດທີ່ມີພົນລະເມືອງຫນາແຫນ້ນ ນັບທັງຕຶກທີ່ມີພົນລະເມືອງຫນາແຫນ້ນທີ່ສຸດຢູ່ໃນ ນະຄອນຫຼວງ ຮ່າໂນ້ຍ. ການກະທຳດັ່ງກ່າວ ໄດ້ເຮັດໃຫ້ ມວນມະນຸດ ຄົນຄົນ, ປ້ອງກ່າ, ແລະຜູ້ແທນໃນ ລັດຖະສະພາ ອາເມລິກາ ເປັນຈຳນວນຫຼວງຫຼາຍ ກໍໄດ້ຄັດຄ້ານ ການກະທຳ ຂອງນິກຊັນ ດັ່ງກ່າວ ແລະ ທວງໃຫ້ຫຼຸດຜ່ອນ ງົບປະມານ ສົງຄາມລົງ, ແຕ່ເປັນຫຍັງ ອຳນາດການປົກຄອງ ວຽງຈັນ ແລະ ສະເດັດເຈົ້າ ສຸວັນນະພູມາ ຈຶ່ງມິດງຽບແຕ່. ແນ່ນອນວ່າ ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍພວກທ່ານ ຄົງຈະດີໃຈ ຕໍ່ການທີ່ ເຮືອບິນ ບີ-໕໒ ເຊິ່ງເປັນ ໄພ້ພົນຕໍ່ ອັນສຸດທ້າຍ ຂອງອາເມລິກາ ມາຖິ້ມລະເບີດ ແບບຫນ້າກະດານ ລົງໃສ່ ນະຄອນຫຼວງ ຮ່າໂນ້ຍ, ຮ່າຍຟອງ, ແລະ ເຂດທີ່ມີປະຊາຊົນ ຫນາແຫນ້ນ ຕ່າງໆ ຂອງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ຫວັງເຮັດໃຫ້ ປະຊາຊົນຫວຽດນາມ ຕ້ອງຍອມຈຳນົນໂດຍໄວ. ແຕ່ວ່າ ການກະທຳ ອັນປ່າເຖື່ອນດັ່ງກ່າວ ຂອງນິກຊັນ ຜູ້ກະຫາຍເລືອດ ໄດ້ປະສົບກັບ ຄວາມປະລາໄຊ ອັນຫນັກຫນ່ວງທີ່ສຸດ ໃນປະຫວັດສາດ

ແຫ່ງການຮຸກຮານ ຂອງຈັກກະພັດອາເມລິກາ. ດຽວນີ້ ສະພາບການ ໄດ້ກະຈ່າງແຈ້ງ ປານກາງເວັນແລ້ວ, ຄວາມປະລາໄຊ ຂອງຈັກກະພັດອາເມລິກາ ຜູ້ຮຸກຮານ ແມ່ນບໍ່ອາດຈະຫຼີກລ່ຽງໄດ້. ເມື່ອເປັນແນວນັ້ນ, ຝ່າຍພວກທ່ານ ກໍ່ຄື ສະເດັດເຈົ້າ ສຸວັນນະພູມາ ຈະຄວນສືບຕໍ່ ຫຼືວ່າ ຈະຕ້ອງຢຸດເຊົາການຂຶ້ນກັບ ອາເມລິກາໂດຍໄວ ?.

໔/- ການທີ່ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍພວກທ່ານ ຍັງດຶງດັນປະຕິເສດ ການສ້າງຕັ້ງ ສະພາປະສົມການເມືອງ ໂດຍອ້າງວ່າ ມັນຝືນຕໍ່ ລັດຖະທຳມະນູນ, ຝ່າຍພວກທ່ານ ກໍ່ຄື ສະເດັດເຈົ້າ ສຸວັນນະພູມາ ຄວນຮູ້ວ່າ ການທີ່ບັນດາກຳລັງຮັກຊາດ ສະເໜີໃຫ້ ສ້າງຕັ້ງ ສະພາປະສົມການເມືອງ ປະກອບດ້ວຍ ຜູ້ແທນຂອງແນວລາວຮັກຊາດ, ຜູ້ແທນຝ່າຍວຽງຈັນ ແລະ ຜູ້ແທນ ກຳລັງເປັນກາງຮັກຊາດ ພ້ອມດ້ວຍບັນດາ ຜູ້ຊົງຄຸນວຸດທິ ທີ່ຮັກຊາດ ໃນນັ້ນ ມີຜູ້ແທນ ພະບໍຣົມມະວົງສານຸວົງ ແລະ ບັນດາຊັ້ນຄົນ ໃນສັງຄົມ, ແມ່ນອົງການຈັດຕັ້ງອັນໜຶ່ງ ທີ່ເປັນຕົວແທນໃຫ້ແກ່ ເຈດຈຳນົງ ແຫ່ງຄວາມຖືກຕ້ອງປອງດອງຊາດ ອັນສູງສຸດ ຂອງປະຊາຊົນ ບັນດາຊົນຊາດ ໃນປະເທດເຮົາ. ອັນນັ້ນແມ່ນ ຮູບການຈັດຕັ້ງໃໝ່ອັນໜຶ່ງ ທີ່ເໝາະສົມ ກັບພື້ນຖານ ສະພາບການ ໃນປະຈຸບັນ ຂອງປະເທດເຮົາ, ມັນບໍ່ຄືຂອງປະເທດອື່ນໃດ, ແລະ ມັນກໍ່ບໍ່ຄື ສະພາບການໃນຫວຽດນາມໃຕ້ ເຊິ່ງສະເດັດເຈົ້າ ສຸວັນນະພູມາ ໄດ້ບິດເບືອນ ຢ່າງເປີດເຜີຍ ວ່າ "ອັນນີ້ ແມ່ນຮູບການຈັດຕັ້ງ ທີ່ຊອນຕົວຢູ່ໃຕ້ຊື່ ສະພາ ແກ້ໄຂຄວາມຖືກຕ້ອງປອງດອງແຫ່ງຊາດ ເຊິ່ງອາເມລິກາ ແລະ ຫວຽດນາມໃຕ້ ຕົກລົງກັນຢູ່ທີ່ ປາຣີ". ສະພາປະສົມການເມືອງ ທີ່ບັນດາກຳລັງຮັກຊາດສະເໜີອອກນັ້ນ ແມ່ນ ອົງການຈັດຕັ້ງອັນໜຶ່ງ ທີ່ເປັນຕົວແທນໃຫ້ແກ່ ເຈດຈຳນົງ ແຫ່ງຄວາມຖືກຕ້ອງປອງດອງຊາດ ອັນສູງສຸດ ຂອງປະຊາຊົນທຸກຊັ້ນຄົນ, ມີໜ້າທີ່ຊຸກຍູ້ ຊ່ວຍເຫຼືອ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ປະຕິບັດສັນຍາຕ່າງໆ ທີ່ບັນດາຝ່າຍ ໄດ້ເຊັນກັນ, ມັນສືບຕໍ່ເຈລະຈາກັນ ເພື່ອແກ້ໄຂບັນດາບັນຫາ ຂອງບ້ານເມືອງ ທີ່ຍັງຄ້າງຄາ, ມັນຈະຮັບໃຊ້ຜົນປະໂຫຍດ ແຫ່ງສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ຂອງປະຊາຊົນເຮົາ ຈົນເຖິງເມື່ອ ປະເທດຊາດ ເປັນເອກະພາບກັນຢ່າງສົມບູນ. ເມື່ອເປັນເຊັ່ນນັ້ນ, ເປັນຫຍັງຈຶ່ງເວົ້າວ່າ ມັນຝືນຕໍ່ ລັດຖະທຳມະນູນ, ມັນບໍ່ມີພື້ນຖານຫຍັງ ໃຫ້ພວກທ່ານ ແລະ ສະເດັດເຈົ້າ ສຸວັນນະພູມາ ຄັດຄ້ານປະຕິເສດໄດ້. ພວກຂ້າພະເຈົ້າ ຂໍແຈ້ງໃຫ້ເຫັນແຈ້ງວ່າ ຕາມຈິດໃຈພື້ນຖານ ຂອງລັດຖະທຳມະນູນ ທີ່ໄດ້ຮັບການດັດແປງ ເພີ່ມເຕີມ ດ້ວຍຄວາມຄິດ ຄວາມເຫັນຕ່າງໆ ຂອງຝ່າຍປະເທດລາວ ດັ່ງທີ່ໄດ້ລະບຸໄວ້ ໃນບັນດາສັນຍາປີ ໑໙໕໗, ລະຫວ່າງຜູ້ແທນ ຝ່າຍປະເທດລາວ ແລະ ລັດຖະບານ ຂອງພະບາດສົມເດັດ ພະເຈົ້າ ມະຫາຊີວິດ, ແມ່ນປົກປັກຮັກສາ ເອກະລາດ, ອຳນາດ ອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນ, ຄວາມເປັນກາງ ແລະ ສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ. ດັ່ງນັ້ນ ການສ້າງຕັ້ງ ສະພາປະສົມການເມືອງ ຕາມຄຳສະເໜີ ຂອງຝ່າຍພວກຂ້າພະເຈົ້າ ແມ່ນບໍ່ມີຫຍັງຜິດ, ກົງກັນຂ້າມ, ມີແຕ່ການກະທຳ ທີ່ເຮັດຕາມຈັກກະພັດອາເມລິກາ, ຮັບໃຊ້ກົນອຸບາຍຮຸກຮານ ຂອງຈັກກະພັດອາເມລິກາ ກໍ່ສັງຫານທຳລາຍປະຊາຊົນ, ປົດກອາດ ປາບປາມ, ບັງຄັບປະຊາຊົນເຂົ້າ ຢູ່ໃນບັນດາເຂດຄຸມຂັງ ແລະ ບັງຄັບລູກຫຼານ ຂອງປະຊາຊົນ ໄປເປັນທະຫານ ຕາງຕາງ ~~ສ້າ~~ ອາເມລິກາ ດັ່ງທີ່~~ອຳ~~ອຳນາດການປົກຄອງວຽງຈັນລູກມື ອາເມລິກາ ພວມເຮັດຢູ່ຊຸມມື້ນີ້ ຈຶ່ງເປັນການຝືນຕໍ່ ຈິດໃຈ ຂອງ ລັດຖະທຳມະນູນ ແລະ ຕົວແມ່ນ ຝ່າຍພວກທ່ານນັ້ນແຫຼະ ທີ່ເປັນຜູ້ຝືນຕໍ່ ລັດຖະທຳມະນູນ, ບ່ອນບ່ອນທຳລາຍ ລັດຖະທຳມະນູນ. ມີຄວາມຈຳເປັນ ຕ້ອງຢັ້ງຢືນວ່າ ການຕ ~~ແ~~ ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ກໍ່ຄື ປະຊາຊົນເຮົາທຸກຊັ້ນຄົນ ດຳເນີນການຕໍ່ສູ້ ອັນເດັດດ່ຽວ ພິລະອາດຫານ ຕ້ານການຮຸກຮານ ຂອງອາເມລິກາ ເພື່ອປົກປັກຮັກສາ ເອກະລາດ ອຳນາດ ອະທິປະໄຕ ແລະ ຄວາມເປັນກາງ, ຍາດເອົາສິດເສລີພາບ ປະຊາທິປະໄຕ ມາໃຫ້ປະຊາຊົນ ນັ້ນ ແມ່ນສອດຄ່ອງກັບ ຈິດໃຈພື້ນຖານ ຂອງລັດຖະທຳມະນູນ. ກົງກັນຂ້າມ ພວກທີ່ບັງມັນບໍ່ເດີນຫຼ້າໄປ ໃນເສັ້ນທາງຂາຍ

ຊາດ ທໍລະຍົດປະຊາຊົນ, ທາລຸນລໍ້າລວຍ ບົນກອງກະດູກ ແລະ ເລືອດເນື້ອ ເຫື່ອແຮງ ຂອງປະຊາຊົນ, ຮັບໃຊ້ ກົນອຸບາຍ ລ່າເມືອງຂຶ້ນ ຂອງອາເມລິກາ, ພວກນັ້ນແຫຼະ ແມ່ນພວກທີ່ປຽບຢ່ຳ ລັດຖະທຳມະນູນ, ປົ່ນຕີ ລັດຖະທຳມະນູນ ທີ່ຈຳເປັນຕ້ອງໄຈ້ແຍກໃຫ້ ໃຫ້ເຫັນແຈ້ງຕື່ມອີກ. ພວກທ່ານ ກໍຄືສະເດັດເຈົ້າ ສຸວັນນະພູມາ ບໍ່ຄວນ ອ້າງເຫດຜົນ ອັນມະລຸມມະລ້ວຍ ເພື່ອປົດປ່ອຍ ແລະ ປະຕິເສດ ການສ້າງຕັ້ງ ສະພາປະສົມການເມືອງ ເຊິ່ງເປັນອົງການບ່ວງຕົນ ແນໃສ່ ແກ້ໄຂ ບັນຫາຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ເພື່ອບໍ່ໃຫ້ພວກ ຈັກກະພັດລ່າເມືອງຂຶ້ນ ມີຊ່ອງທາງເຂົ້າທຳລາຍ ແບ່ງແຍກອີກ. ມີແຕ່ເຮັດແນວນັ້ນ ຈຶ່ງຈະປົກປັກຮັກສາ ເອກະລາດ, ສັນຕິພາບ ໄວ້ໄດ້ ແລະ ກໍ່ສ້າງ ປະເທດຊາດ ໃຫ້ວັດທະນາຖາວອນ. ຖ້າພວກທ່ານ ຍັງຄົງສືບຕໍ່ ໃຊ້ຖືທຳນອງ ອັນເກົ່າແກ່ ຫຼາລະໄທມ, ພະຍາຍາມຖ່ວງດຶງ ການເຈລະຈາ ໃຫ້ຍືດຍາວ ແລະ ກີດຂວາງ ການກ້າວໄປສູ່ ວິທີການແກ້ໄຂບັນຫາບ້ານເມືອງຕໍ່ໄປ,ແນ່ນອນ ພວກທ່ານກໍ່ ຈະຖືກທາງສອງ ອັນກວ້າງຂວາງ ຢູ່ພາຍໃນປະເທດ ແລະ ໃນທົ່ວໂລກກ່າວປະນາມຢ່າງແຂງແຮງ.

ວ/- ກ່ຽວກັບ ການສ້າງຕັ້ງ ລັດຖະບານປະສົມ ຈຶ່ງລາວແຫ່ງຊາດຊຸດໃຫມ່ນັ້ນ, ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍພວກທ່ານ ກໍໄດ້ຮັບເອົາແລ້ວ, ແຕ່ຈຳພັດທ່ວງໃຫ້ ກັບຄືນສູ່ ສະພາບສາມຝ່າຍ ຂອງສະໄຫມປີ ໑໙໖໔, ຫມາຍຄວາມວ່າ ສະເດັດເຈົ້າ ສຸວັນນະພູມາ ຢາກບັງຄັບເອົາສິດ ອຳນາດຂອງຕົນ ເຕັ່ງໃສ່ດໍ ໃສ່ບ່າຂອງບັນດາກຳລັງຮັກຊາດ, ຢາກບັງຄັບໃຫ້ ຄະນະຮ່ວມສຳພັນ ກຳລັງເປັນກາງຮັກຊາດ ຕ້ອງຮັບຮູ້ ຜູ້ທີ່ໄດ້ທໍລະຍົດ ຕໍ່ເສັ້ນທາງ ສັນຕິພາບເປັນກາງ, ໄດ້ເອົາຕົວອອກຈາກເສັ້ນທາງ ແຫ່ງຄວາມຮັກຊາດ, ແລ່ນໄປຮັບໃຊ້ ກົນອຸບາຍ ປຸ້ນຊາດ ແລະຂາຍຊາດຂອງຈັກກະພັດ ອາເມລິກາ ແລະ ພວກລູກນ້ອງ, ປະກາດເອົາຕົວເຂົ້າ ກັບພວກຂາຍຊາດ ແລະ ຖືຕົນວ່າ ເປັນຫົວຫນ້າຂອງພວກນັ້ນ, ຄະນະຮ່ວມສຳພັນ ກຳລັງເປັນກາງຮັກຊາດ ບໍ່ຮັບຮູ້ຄົນຜູ້ນັ້ນ ເປັນຫົວຫນ້າຂອງຕົນຢ່າງເດັດຂາດ. ສະເດັດເຈົ້າ ສຸວັນນະພູມາ ແລະ ພວກທ່ານ ຄວນຈື່ຈຳໃຫ້ດີວ່າ: ຫຼັງຈາກການລັດຖະປະຫານ ທາງການທະຫານ ເມື່ອວັນທີ ໑໙/໔/໑໙໖໔ ສະເດັດເຈົ້າ ສຸວັນນະພູມາ ກໍໄດ້ໃຫ້ຄຳຫມັ້ນສັນຍາ ຈະປະຕິບັດ ຕາມບັນດາຄວາມຕ້ອງການ ຂອງພວກທີ່ທຳການ ລັດຖະປະຫານ. ໃນເວລານັ້ນ ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ໄດ້ເດັດດ່ຽວ ທວງໃຫ້ພວກທ່ານ ຕ້ອງຟື້ນຟູ ສະພາບການ ກ່ອນການລັດຖະປະຫານ ເຊິ່ງສະແດງອອກ ໃນການເຈລະຈາຢູ່ ຄັງໄຂ ກໍຄື ຢູ່ ປາຣີ. ເປັນຫຍັງ ໃນເວລານັ້ນ ຝ່າຍພວກທ່ານ ແລະ ສະເດັດເຈົ້າ ສຸວັນນະພູມາ ຈຶ່ງບໍ່ຍອມຮັບເອົາ, ນັ້ນກໍຍ່ອມວ່າໃນເວລານັ້ນ ຝ່າຍພວກທ່ານ ຍັງມີຄວາມເພີ້ຝັນ ຕໍ່ວິທີການ, ການທະຫານ ອັນປ່າເຖື່ອນທີ່ສຸດ ຂອງພວກອາເມລິກາຜູ້ຮຸກຮານ ຫວັງບັງຄັບໃຫ້ ບັນດາກຳລັງຮັກຊາດ ຕ້ອງຍອມຈຳນົນໃນທັນທີ. ແຕ່ນັ້ນມາ ຮອດປະຈຸບັນນີ້ ເປັນເວລາເກືອບ ໑໐ ປີແລ້ວ, ການກະທຳອັນປ່າເຖື່ອນ ຂອງອາເມລິກາ ແລະ ພວກລູກມືທຸກຢ່າງ ກໍບໍ່ ສາມາດເຮັດໃຫ້ ບັນດາກຳລັງຮັກຊາດ ແລະ ປະຊາຊົນເຮົາ ອ່ອນຍອມໄດ້, ກົງກັນຂ້າມ ພວກເຂົາຈຳພັດໄດ້ຖືກບາດດ້ວນ ແລະ ປະລາໄຊຢ່າງຫນັກຫນ່ວງ. ສ່ວນບັນດາກຳລັງຮັກຊາດ ກໍໄດ້ເຕີບໃຫຍ່ ເຂັ້ມແຂງ ຢ່າງບໍ່ຢຸດຢັ້ງ, ເຂດປົດປ່ອຍ ໂດຍແມ່ນ ບັນດາກຳລັງຮັກຊາດ ລຸ້ມຕອງ ໄດ້ຮັບການກໍ່ສ້າງ ໃຫ້ເຂັ້ມແຂງ ໄປແຕ່ລະກ້າວ ໃນທຸກດ້ານ ການເມືອງ, ເສດຖະກິດແລະ ວັດທະນະທຳ. ປະຊາຊົນໃນເຂດປົດປ່ອຍ ໄດ້ເປັນເຈົ້າໂຊກຊາຕາ ຂອງຕົນຢ່າງແທ້ຈິງ, ລະບອບ ປະຊາທິປະໄຕ ແລະ ຊີວິດອັນດີງາມ ຢູ່ໃນເຂດປົດປ່ອຍ ກໍໄດ້ເປັນແວ່ນແຍງອັນໃສແຈ້ງ ເຍືອງໄປທົ່ວປະເທດ ເພື່ອເປັນພື້ນຖານປົກປັກຮັກສາ ອະທິປະໄຕແຫ່ງຊາດ ແລະ ກໍ່ສ້າງຊີວິດໃໝ່ ຂອງປະຊາຊົນເຮົາ. ກົງກັນຂ້າມ ໃນເຂດທີ່ພວກທ່ານກວດກາປະຊາຊົນ ບໍ່ມີສິດເສລີພາບ ປະຊາທິປະໄຕ, ເສດຖະກິດການເງິນ ແມ່ນຂຶ້ນກັບ ອາເມລິກາ, ອຳນາດການປົກຄອງ

ແລະ ການທະຫານ ແມ່ນຮັບໃຊ້ ກົນອຸບາຍຮຸກຮານ ຂອງອາເມລິກາ, ສັງຄົມໄດ້ກາຍເປັນເມືອງຂຶ້ນແບບໃໝ່ ຂອງອາເມລິກາ. ພວກຂ້າພະເຈົ້າ ຄິດວ່າ ປະຊາຊົນເຮົາ ຕ້ອງສືບຕໍ່ການຕໍ່ສູ້ ເພື່ອລົບລ້າງ ລັດທິລ່າເມືອງຂຶ້ນແບບໃໝ່ ຢູ່ໃນເຂດຂອງພວກທ່ານ ໃຫ້ສູນສ້ຽງໄປ, ເຮັດໃຫ້ປະເທດເຮົາ ມີເອກະລາດ ອຳນາດອະທິປະໄຕ ຢ່າງແທ້ຈິງ.

ນັ້ນແມ່ນ ສະພາບການຕົວຈິງ, ແຕ່ມາດຽວນີ້ ພວກທ່ານ ຈຳພັດຢາກດຶງປະຫວັດສາດ ໃຫ້ກັບຄືນສູ່ສະໄໝກ່ອນໜ້ານີ້ ສິບປີ, ທວງໃຫ້ບັນດາກຳລັງຮັກຊາດ ກັບຄືນສູ່ທີ່ຕັ້ງເກົ່າ ແລະ ສະພາບການ ການເມືອງເກົ່າ, ຢາກອ້າງສິດອຳນາດຂອງຕົນ ແລະ ບັງຄັບໃຫ້ບັນດາກຳລັງຮັກຊາດ ຕ້ອງຮັບຮູ້ ອຳນາດການປົກຄອງ ນິຍົມອາເມລິກາ ຢູ່ວຽງຈັນໃນປະຈຸບັນ. ເຮັດແນວນີ້ ແມ່ນບໍ່ສາມາດແກ້ໄຂບັນຫາລາວໄດ້ຢ່າງຖືກຕ້ອງ ດັ່ງນັ້ນ ຕ້ອງຮັບສ້າງຕັ້ງ ລັດຖະບານປະສົມ ຊົ່ວຄາວແຫ່ງຊາດ ຊຸດໃໝ່ ທີ່ປະກອບດ້ວຍ ຜູ້ແທນຂອງສາມກຳລັງການເມືອງ ຕາມຂໍ້ສະເໜີຂອງພວກຂ້າພະເຈົ້າ ໃນວິທີການແກ້ໄຂການເມືອງ ໕ ຂໍ້, ມີແຕ່ເຮັດແນວນັ້ນ ຈຶ່ງຈະສອດຄ່ອງກັບ ສະພາບການຕົວຈິງຢູ່ປະເທດເຮົາໃນປະຈຸບັນ. ກ່ອນໜ້ານີ້ ສະເດັດເຈົ້າ ສຸວັນນະພູມາ ໄດ້ເຄີຍປະກາດວ່າ ເພິ່ນເປັນຕົວແທນໃຫ້ຝ່າຍຂວາ, ເພິ່ນໄດ້ສະໝັກໃຈ ເອົາພັກຝ່າຍ ຂອງເພິ່ນ ເຂົ້າຮ່ວມກັບຝ່າຍຂວາ, ແຕ່ມາດຽວນີ້ ບໍ່ຮູ້ວ່າ ເພິ່ນຄິດແນວໃດ ຈຶ່ງເອົາເສື້ອແຫ່ງຄວາມເປັນກາງ ອັນປອມແປງມານຸ່ງ ຄືນໃໝ່ ແລ້ວອອກອ້າງວ່າ ຕົນເປັນຕົວໜ້າຝ່າຍກາງ, ສະແດງຕົວເປັນເຈົ້າໃຫຍ່ນາຍໂຕ ທວງໃຫ້ ກຳລັງເປັນກາງຮັກຊາດ ຕ້ອງເຂົ້າກັບ ອັນທີ່ເອີ້ນວ່າ ຝ່າຍເປັນກາງຂອງເພິ່ນ. ມັນເປັນທີ່ຖືກຕ້ອງ ແລະ ເໝາະສົມແລ້ວ ທີ່ຜູ້ແທນ ກຳລັງເປັນກາງຮັກຊາດ ໃນຂະນະ ຜູ້ແທນ ບັນດາກຳລັງຮັກຊາດ ເຄີຍໄດ້ໂຕ້ຕອບ ພວກທ່ານວ່າ "ຝ່າຍເປັນກາງ ຂອງສະເດັດເຈົ້າສຸວັນນະພູມາ ບໍ່ມີຊີວິດອີກແລ້ວ.ຍ້ອນວ່າ ເພິ່ນໄດ້ເອົາມັນເຂົ້າກັບຝ່າຍຂວາ ແຕ່ດົນແລ້ວ, ແລະ ໃນການກະທຳຕົວຈິງ ສະເດັດເຈົ້າ ສຸວັນນະພູມາ ກໍໄດ້ເປັນຜູ້ທີ່ບອກໄດ້ໃຈຟັງກວ່າເພິ່ນ ໃນການປະຕິບັດແຜນການຮຸກຮານຕ່າງໆ ຂອງອາເມລິກາ ຢູ່ປະເທດເຮົາ". ປະຈຸບັນນີ້ ມີແຕ່ກຳລັງເປັນກາງອັນໜຶ່ງອັນດຽວເທົ່ານັ້ນ ຄືສຳພັນທະພາບ ບັນດາກຳລັງເປັນກາງຮັກຊາດ ໂດຍແມ່ນ ທ່ານ ຄຳສຸກ ແກ້ວລາ ເປັນຫົວໜ້າ ພ້ອມດ້ວຍຜູ້ຊົງຄຸນວຸດທິ ທີ່ເຫັນດີເຫັນພ້ອມນຳ ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ. ກຳລັງດັ່ງກ່າວ ຕ້ອງມີຖານະບົດບາດ ແລະ ມີສຽງເວົ້າ ອັນເໝາະສົມ ໃນສະພາປະສົມການເມືອງ, ໃນລັດຖະບານປະສົມ ຊົ່ວຄາວແຫ່ງຊາດຊຸດໃໝ່ ແລະ ໃນທຸກຂົງເຂດ ຊີວິດການເມືອງ ຂອງຊາດ. ກົນອຸບາຍຂອງອາເມລິກາ ແລະ ພວກລູກມື ຢາກກືນກືນກຳລັງເປັນກາງຮັກຊາດ ແມ່ນບໍ່ສາມາດຈະປະຕິບັດໄດ້ດອກ, ຍ້ອນວ່າ ກຳລັງເປັນກາງຮັກຊາດ ໄດ້ເຕີບໃຫຍ່ ໃນທຸກດ້ານ, ມີການຈັດຕັ້ງອັນໜັກແໜ້ນ, ມີກຳລັງປະກອບອາວຸດ, ແລະ ມີເຂດເຄື່ອນໄຫວ ຂອງຕົນ. ໃນ ໑໐ ປີນີ້, ກຳລັງເປັນກາງຮັກຊາດ ໄດ້ຄຽງບ່າຄຽງໄຫຼ່ ກັບແນວລາວຮັກຊາດ, ອຸທິດເລືອດເນື້ອເຫື່ອແຮງ ປະກອບສ່ວນຢ່າງໃຫຍ່ຫຼວງເຂົ້າໃນພາລະກິດ ກູ້ຊາດ ຕ້ານອາເມລິກາ ຂອງຊາດເຮົາ ເຊິ່ງປະຊາຊົນພາຍໃນປະເທດ ກໍດີ ໃນ ໂລກ ໃພງກໍໄດ້ຊົມເຊີຍ ສັນລະເສີນ. ດັ່ງນັ້ນ ທຸກກົນອຸບາຍ ທີ່ຢາກບັ່ນທອນ ອິດທິພົນ ຫຼື ຢາກທຳລາຍ ກຳລັງເປັນກາງຮັກຊາດ ຈຶ່ງເປັນພຽງແຕ່ ຄວາມໃຝ່ຝັນ ລ້າໆເທົ່ານັ້ນ. ຄວາມຈິງແລ້ວ ສະເດັດເຈົ້າ ສຸວັນນະພູມາໄດ້ເປັນຕົວໜ້າຝ່າຍຂວາວຽງຈັນ, ແລະ ເພິ່ນຄວນຮັບຮູ້ແນວນັ້ນ ຈຶ່ງຈະບໍ່ຖືກ ທາງສຽງເຢາະເຍີ້ຍ, ເຖິງວ່າ ເພິ່ນຈະຖືຕົວເອງ ວ່າເປັນກາງຮຣເທື່ອ ພົນ[illegible] [illegible]ຈິງ ກັບແນວ ເພິ່ນເປັນກາງ ແລະ ບໍ່ຫຼອກລວງໃຜໄດ້. ດ້ວຍເຫດຜົນດັ່ງກ່າວ, ພວກຂ້າພະເຈົ້າຍືນຢັນອີກເທື່ອໜຶ່ງວ່າ ມີແຕ່ ຕ້ອງສ້າງຕັ້ງລັດຖະບານປະສົມ ຊົ່ວຄາວແຫ່ງຊາດຊຸດໃໝ່ ທີ່ປະກອບດ້ວຍ ສາມພາກສ່ວນ ດັ່ງທີ່ພວກຂ້າພະເຈົ້າ ໄດ້ສະເໜີມາແລ້ວ ຈຶ່ງສອດຄ່ອງກັບ ຄວາມເປັນຈິງ ຂອງປະເທດຊາດບ້ານເມືອງເຮົາໃນປະຈຸບັນ.

ຕ້າຫາກວ່າຣັຖບານໄດ້ຫຼັກການຕ້າວຕັ້ງ ລັດຖະບານປະສົມຊຸດໃໝ່ ກໍຄື ອັນເອົາ ຫຼັກການຕ້າວຕັ້ງ ສະພາປະສົມ ການເມືອງແລ້ວ ພວກເຮົາ ກໍຈະເອົາພິຈາລະນາ ບັນດາບັນຫາ ກ່ຽວກັບ ໂຄງຮ່າງ ແລະ ກົງຈັກ ຂອງອົງການຈັດຕັ້ງ ທັງສອງ ດັ່ງກ່າວ.

໔/- ກ່ຽວກັບ ບັນຫາການທະຫານ, ບັນເປັນອັນຈະແຈ້ງແລ້ວວ່າ ຈັກກະພັດອາເມລິກາ ພວມຮຸກຮານປະເທດເຮົາ, ພວກມັນ ພວມເອົາອາວຸດ ຍຸດໂທປະກອນ, ທີ່ປຶກສາອາເມລິກາ ແລະ ກອງທະຫານໄທ ເຂົ້າມາດຳເນີນສົງຄາມ ຮຸກຮານປະເທດເຮົາ, ແຕ່ສະເດັດເຈົ້າ ສຸວັນນະພູມາ ຈ່າຜັດວອກແຮງປັດປ່າຍ ເພື່ອຫຼອກລວງຫາງສຽງ, ປົກປິດໃຫ້ກົນອຸບາຍ ກໍໂທດກຳ ແລະ ການທະຫານ ຂອງອາເມລິກາ ຢູ່ປະເທດເຮົາ ໃນໄລຍະຜ່ານມາ ແລະ ໃນຕໍ່ໄປ. ກ່ຽວກັບບັນຫານີ້, ພວກຂ້າພະເຈົ້າ ຂໍສະເໜີ ຫຼັກຖານຈຳນວນໜຶ່ງຕື່ມອີກ.

ຢູ່ປະເທດເຮົາໃນປະຈຸບັນນີ້, ນອກຈາກທີ່ປຶກສາ ພະນັກງານ ທະຫານ ອາເມລິກາ, ບັນດາຖານທັບທະຫານ ແລະ ບັນດາອົງການຈັດຕັ້ງ ການທະຫານ, ເດີ່ນທະຫານ ຂອງອາເມລິກາແລ້ວ, ຍັງມີກອງທະຫານໄທ ຝັງ ກ່ວາກອງພັນທີ່ ພວມຈັດຕັ້ງ ເປັນກອງພັນໃຫຍ່ເຄື່ອນທີ່ຕ່າງໆ ເຊິ່ງ ພວກຂ້າພະເຈົ້າກໍໄດ້ຊີ້ ເຄື່ອງໝາຍເລກ ປະຈຳກອງ ຂອງມັນໄດ້ຢ່າງພຽງພໍ, ກໍຄື ນາຍ ແລະ ພົນທະຫານໄທຈຳນວນຮ້ອຍຄົນ ທີ່ໄດ້ຖືກເປັນສະເລີຍເສິກ. ກ່ຽວກັບເລື່ອງນີ້, ພວກທ່ານ ກໍໄດ້ຮັບຂ່າວສານ ແລະ ຫຼັກຖານປະຕິເສດອີກ ຄວາມລັບອັນນີ້ອີກແລ້ວ, ແຕ່ສະເດັດເຈົ້າ ສຸວັນນະພູມາ ຈ່າຜັດກ່າວວ່າ "ມັນເປັນພຽງແຕ່ພວກທະຫານເລວຮັບຈ້າງ, ທະຫານໄທ ອາສາສະໝັກ ເຊິ່ງເປັນທະຫານ ຕ່າງປະເທດ ເຊິ່ງຈະຕ້ອງໄດ້ສົ່ງເມືອ ປະເທດເດີມຂອງເຂົາ." ແຕ່ພວກຂ້າພະເຈົ້າບໍ່ເຫັນສົ່ງພວກເຂົາຄືນປະເທດ, ຫາກເຫັນແຕ່ໄດ້ນຳພວກເຂົາ ເຂົ້າມາລາວ ນັບມື້ນັບຫຼາຍ ແລະ ໂດຍໄດ້ຊຸກເຊື່ອງຢູ່ ພາຍໃຕ້ຊື່ ແລະ ເຄື່ອງໝາຍຂອງ ທະຫານຝ່າຍຂວາ ເຊັ່ນ ເຄື່ອງໝາຍ ເປແອນ ເພື່ອສືບຕໍ່ ຂ້າຟັນລົ້ມແຫງ ປຸ້ນສະດົມ ປະຊາຊົນເຮົາ. ພວກດັ່ງກ່າວ ແມ່ນອາເມລິກາເປັນຜູ້ ຈ່າຍເງິນເດືອນ ແລະ ບັງຄັບບັນຊາໂດຍກົງ. ບັນຫານີ້ ມີຄວາມພົວພັນ ຢ່າງສະໜິດແໜ້ນ ກັບການທີ່ ສະເດັດເຈົ້າ ສຸວັນນະພູມາ ໄດ້ເປີກສາຫາລື ກັບພວກກາງວັງບາດ ປະຕິການໄທ ຕັ້ງຫຼາຍເທື່ອແລ້ວ, ໃນມື້ນີ້ ຄະນະນາຍທະຫານ ຝ່າຍວຽງຈັນ ໄດ້ໄປບາງກອກ ເພື່ອເປີກສາແຜນການ ສືບຕໍ່ ທາງການທະຫານ ກັບ ພວກນາຍທະຫານປະຕິການໄທ ກ່ຽວກັບການສຳພັນ ທາງການທະຫານ ລະຫວ່າງ ວຽງຈັນ ແລະ ບາງກອກ ທີ່ໄດ້ເປັນຮູບ ເປັນຮ່າງມາ ແຕ່ດົນນານແລ້ວ ເພື່ອສືບຕໍ່ຮັບໃຊ້ ກົນອຸບາຍໃໝ່ ອັນນີດນົມ ຂອງອາເມລິກາ ຢູ່ປະເທດເຮົາ.

ກ່ຽວກັບບັນດາ ບໍລິສັດ ເດີນອາກາດ ທາງທະຫານ ຂອງອາເມລິກາ ທີ່ປອມຕົວ ເຊິ່ງອາເມລິກາ ໄດ້ໃຊ້ເປັນເວລາ ໑໐ ປີມານີ້ ເພື່ອຮັບໃຊ້ ແຜນການຕ່າງໆ ທາງດ້ານການທະຫານ ຢູ່ປະເທດລາວ ແລະ ກໍໂທດກຳ ຢ່າງໜັກໜ່ວງ ຕໍ່ປະຊາຊົນເຮົານັ້ນ, ມາດຽວນີ້ ສະເດັດເຈົ້າ ສຸວັນນະພູມາ ຈ່າຜັດປົດປ່າຍວ່າ: "ນັ້ນແມ່ນບັນດາ ບໍລິສັດ ເດີນອາກາດ ຂອງເອກະຊົນ ແລະ ບໍ່ອາດຈະຮູ້ ຈຳນວນລັກແນ່ໄດ້, ມັນຈະໄດ້ໂອນໃຫ້ລັດຖະບານລາວ, ແຕ່ວ່າໃນຂັ້ນຕົ້ນ ບັນດານັກບິນ ຍັງແມ່ນຄົນອາເມລິກາຢູ່". ນັ້ນແມ່ນວິທີເວົ້າອັນໜຶ່ງ ທີ່ອາເມລິກາໄດ້ກະຊິບໃຫ້ ເພິ່ນ ເພື່ອຫາວິທີປົກປິດໃຫ້ແກ່ການກ່ຽວພັນ ທາງການທະຫານ ຂອງອາເມລິກາຢູ່ລາວ. ພວກຂ້າພະເຈົ້າ ຢືນຢັນວ່າ ທຸກການເຄື່ອນໄຫວ ບໍ່ວ່າອົງການຈັດຕັ້ງອັນໃດ ທີ່ປອມຕົວເປັນ ຂອງເອກະຊົນ, ປອມຕົວເປັນ ຂອງພົນລະເຮືອນ ແຕ່ຫາກຮັບໃຊ້ໃຫ້ແກ່ການທະຫານນັ້ນ, ກໍລ້ວນແຕ່ ແມ່ນອົງການຈັດຕັ້ງ ທາງທະຫານ ແລະ ພະນັກງານ ທະຫານທັງໝົດ, ດັ່ງນັ້ນ ຕ້ອງເລີກລ້າງມັນ, ບໍ່ໃຫ້ມັນຈອມຕົວຢູ່ ເພື່ອປະຕິບັດແຜນການ ຮຸກຮານ ປະເທດເຮົາອີກ.

ກ່ຽວກັບ ບັນຫາການຊ່ວຍເຫຼືອລ້າ ພາຍຫຼັງການສົງຄາມ ທີ່ສະເດັດເຈົ້າ ສຸວັນນະພູມາ ໄດ້ເວົ້າວ່າ ແມ່ນການຊ່ວຍເຫຼືອດ້ານ "ເທັກນິກ" ນັ້ນແທ້ໆແລ້ວ ມັນຕັ້ງແມ່ນ ການຊ່ວຍເຫຼືອ ທາງການທະຫານ. ເພິ່ນໄດ້ປະກາດວ່າ

ຈະສືບຕໍ່ ຮັບການຊ່ວຍເຫຼືອ ຈາກຍີ່ປຸ່ນ, ອາເມລິກາ ແລະ ອື່ນໆ. ຂໍຖາມເພິ່ນເບິ່ງວ່າ: ເພິ່ນມີສິດຫຍັງ ໃນການຕັດສິນບັນຫານີ້ ດ້ວຍຕົນເອງ ? ແລະ ທີ່ຈິງແລ້ວ ຕົວແມ່ນທາດແທ້ ຂອງແນວຄິດ ແລະ ການກະທຳ ຂອງເພິ່ນ ເຊິ່ງມີມາແຕ່ດົນແລ້ວ ທີ່ຢາກສືບຕໍ່ເກາະຫຼັງ ໃສ່ອາເມລິກາ ແລະ ສືບຕໍ່ຮັບໃຊ້ກົນອຸບາຍ ຮຸກຮານ ຂອງອາເມລິກາ ຕໍ່ປະເທດຊາດເຮົາ, ສະເດັດເຈົ້າ ສຸວັນນະພູມາ ຄິດວ່າ ເຖິງແມ່ນສະພາບການຈະພັນແປໄປ ແນວໃດ ກໍ່ຕາມ, ການເຮັດຢ່າງຄືແນວນັ້ນ ກໍ່ຈະເປີດທາງໃຫ້ ອາເມລິກາ-ຍີ່ປຸ່ນ ສືບຕໍ່ ຂົນອາວຸດ ຍຸດໂທປະກອນ ແລະ ພາຫະນະສົງຄາມ ເຂົ້າມາໃຫ້ຝ່າຍຂວາຈັດ ໂດຍແມ່ນເພິ່ນເປັນຫົວໜ້າ, ເພື່ອສືບຕໍ່ບັນດາແຜນການດຳເນີນສົງຄາມ ຢູ່ປະເທດເຮົາ. ບັນດາກຳລັງຮັກຊາດ ຂໍຢືນຢັນວ່າ ພາຍຫຼັງສົງຄາມສິ້ນສຸດລົງແລ້ວ ການຮ່ວມມື ການຊ່ວຍເຫຼືອ ທາງດ້ານອາວຸດ ຍຸດທະພັນ ທີ່ຈຳເປັນໃຫ້ລາວ ເພື່ອປົກປັກຮັກສາປະເທດຊາດນັ້ນ ແມ່ນຂຶ້ນກັບສິດອຳນາດ ຂອງ ສະພາປະສົມການເມືອງ ແລະ ລັດຖະບານປະສົມແຫ່ງຊາດຊຸດໃໝ່, ບໍ່ມີບຸກຄົນໃດ ທີ່ຈະມີສິດຕັດສິນ ແລະ ໃນເມື່ອຍັງບໍ່ທັນໄດ້ຕົກລົງບັນຫາດັ່ງກ່າວນັ້ນ ກໍ່ຍັງບໍ່ມີສິດຕັດສິນ. ບັນຫານີ້ ແນ່ນອນ ຈະຕ້ອງສືບຕໍ່ແກ້ໄຂ ລະຫວ່າງ ບັນດາຝ່າຍລາວທີ່ກ່ຽວຂ້ອງ, ແຕ່ພວກຂ້າພະເຈົ້າຍົກອອກມານີ້ ກໍ່ເພື່ອໄຈແຍກ ຄຳປະກາດ ຂອງສະເດັດເຈົ້າ ສຸວັນນະພູມາ ໃນເວລານີ້ແມ່ນ ເພື່ອຮັບໃຊ້ສັນຕິພາບ ຫຼື ຮັບໃຊ້ສົງຄາມ ທີ່ອຳນາດການປົກຄອງ ນິກເຊິນ ພວມດຳເນີນຢູ່ໃນປະຈຸບັນ. ເປັນອັນຈະແຈ້ງວ່າ ນັ້ນພຽງແຕ່ຮັບໃຊ້ກົນອຸບາຍກໍ່ສົງຄາມ ຂອງຈັກກະພັດອາເມລິກາ ແລະ ກົນອຸບາຍ ແຜ່ອຳນາດ ຂອງຍີ່ປຸ່ນເທົ່ານັ້ນ.

ກ່ອນອື່ນ ກຳລັງພິເສດ ໂດຍແມ່ນ ອາເມລິກາເປັນຜູ້ຈັດຕັ້ງ, ປະກອບອາວຸດ, ອົບຮົມໃຫ້ເງິນເດືອນ ແລະ ບັນຊາ ເພື່ອເປັນກຳລັງປະຈັນບານ ອັນຕົ້ນຕໍໃຫ້ແກ່ ສົງຄາມພິເສດ ຂອງອາເມລິກາຢູ່ລາວ, ໄດ້ກໍ່ຄວາມທຸກຍາກລຳບາກ ແລະ ລົ້ມຕາຍເສຍຫາຍ ໃຫ້ແກ່ປະຊາຊົນເຮົາ ບໍ່ຈັກວ່າເທົ່າໃດ, ເປັນຕົ້ນແມ່ນ ຊົນຊາດສ່ວນນ້ອຍ. ສະເດັດເຈົ້າ ສຸວັນນະພູມາ ບໍ່ຫົວຊາຕໍ່ ຄວາມທຸກຍາກ ລຳບາກ ແລະ ຄວາມລົ້ມຕາຍເສຍຫາຍ ຂອງ ປະຊາຊົນເຮົາ ແຕ່ຢ່າງໃດເລີຍ. ມາດຽວນີ້ ເພິ່ນຊ້ຳພັດ ພວມຫາວິທີ ປົກປິດໃຫ້ ອາເມລິກາ ຈ່ອງດຶງຮັກສາ ກຳລັງດັ່ງກ່າວ ເພື່ອສືບຕໍ່ ສົງຄາມຮຸກຮານ ແລະ ສືບຕໍ່ຊຸກຍູ້ໃຫ້ເຂົາເຈົ້າ ຕົກເຂົ້າໄປໃນເສັ້ນທາງແຫ່ງຄວາມອາຍວອດ. ເພິ່ນໄດ້ກ່າວອ້າງວ່າ "ອາດຈະຍຸບເລີກເຂົາເຈົ້າ ແລະ ຈະຮັກສາບັນດາຜູ້ຄົນທີ່ຢາກຢູ່ໃນກອງທັບຕໍ່ໄປ ໃນພາຍຫຼັງ". ແມ່ນໃຜເປັນຜູ້ມີສິດຍຸບເລີກ ກຳລັງນີ້, ຖ້າບໍ່ແມ່ນ ສະພາປະສົມການເມືອງ ແລະ ລັດຖະບານປະສົມ. ແຕ່ດຽວນີ້ ຈັກກະພັດອາເມລິກາ ຊຸກຍູ້ໃຫ້ ສະເດັດເຈົ້າ ສຸວັນນະພູມາ ປະກາດອ້າງວ່າ ຈະລົບລ້າງ, ແຕ່ຄວາມຈິງ ມັນຈະບໍ່ເປັນແນວນັ້ນ. ອັນນັ້ນ ແມ່ນການກະທຳຫາງສຽງ ເພື່ອປິດບັງໃຫ້ ກົນອຸບາຍຍົກຍ້າຍກຳລັງນີ້ ເຂົ້າໃນກອງທະຫານຝ່າຍຂວາ ທາງຮູບນອກເທົ່ານັ້ນ, ແຕ່ທາດແທ້ແລ້ວ ຍັງຄົງເປັນບັນດາ ກົມກອງ ກຳລັງພິເສດຄືເກົ່າ ແລະ ພວກເຈົ້ານາຍອາເມລິກາ ຍັງສືບຕໍ່ໃຊ້ມັນ ເພື່ອຂ່າຟັນລັນແທງ ປະຊາຊົນ ແລະ ຮຸກຮານປະເທດເຮົາ. ຄຳປະກາດດັ່ງກ່າວ ເປັນຂໍ້ອ້າງ ເພື່ອຫຼອກລວງຫາງສຽງ, ທັງເປັນການຕ້ານກັບຄຳປະທ້ວງອັນຊອບທຳ ຂອງບັນດາກຳລັງຮັກຊາດ ແລະ ກໍ່ເພື່ອຈະປະຕິເສດ ຄວາມມຸ່ງມາດປາຖະໜາອັນແຮງກ້າ ຂອງປະຊາຊົນ ບັນດາຊົນຊາດ ທີ່ຢາກປົດປ່ອຍ ລູກຫຼານຂອງຕົນ ໃຫ້ກັບຄືນມາຫາຄອບຄົວ ທຳມາຫາກິນ, ຫຼຸດພົ້ນອອກຈາກການບີບບັງຄັບ ໃຫ້ໄປຕາຍ ເພື່ອຜົນປະໂຫຍດ ຂອງຈັກກະພັດອາເມລິກາ ແລະ ລູກມື. ຢູ່ກອງປະຊຸມຝ່າຍພວກທ່ານ ໄດ້ອອກຄວາມເຫັນຢ່າງພະລຸ້ມພະລ້ອຍ ກ່ຽວກັບການເລີກລ້າງ ກຳລັງພິເສດ ໂດຍແມ່ນຕ່າງປະເທດຈັດຕັ້ງ, ລ້ຽງດູ ເພື່ອສະແດງໃຫ້ເຫັນວ່າ ຖ້ອຍທຳນອງ ຂອງສະເດັດເຈົ້າ ສຸວັນນະພູມາ ທີ່ປະກາດອອກນັ້ນ ໃຫ້ເປັນເລື່ອງ

ແລ້ວໄປ. ຖ້າກຳລັງພິເສດ ເຊິ່ງແມ່ນ ເຊື່ອວ່າ ເປັນຜູ້ຈັດຕັ້ງ, ລັຮເກືອ ຫາກບໍ່ໄດ້ເລີກລ້າງ, ເຮັດແນວໃດ ຈິ່ງຈະຢຸດເຊົາ ການກໍ່ອພົນ ທາງດ້ານການພະຫານ ຂອງອາເມລິກາ ຢູ່ລາວໄດ້ ? ເວົ້າລວມແລ້ວ, ຄຳປະກາດ ຕ່າງໆ ຂອງສະເດັດເຈົ້າ ສຸວັນນະພູມາ ຫວ່າງແລ້ວນີ້ ກໍຄື ຄວາມຄິດຄວາມເຫັນ ຂອງຝ່າຍພວກທ່ານ ທີ່ກ່າວໃນກອງ ປະຊຸມນີ້ ກໍໄດ້ສະແດງໃຫ້ເຫັນຢ່າງພຽງພໍວ່າ ຝ່າຍພວກທ່ານ ໂດຍແມ່ນ ສະເດັດເຈົ້າ ສຸວັນນະພູມາ ເປັນຫົວໜ້າ ບໍ່ມີຄວາມຄິດຄວາມເຫັນອັນໃດ ທີ່ມີລັກສະນະກໍ່ສ້າງ, ແລະ ບໍ່ມີຂໍ້ສະເໜີອັນໃດ ທີ່ສົມເຫດສົມຜົນ ພໍທີ່ຈະໃຫ້ ບັນດາ ກຳລັງຮັກຊາດ ພິຈາລະນາ ແລະ ຮັບເອົາໄດ້. ນອກນັ້ນ, ພວກທ່ານ ຍັງສະແດງທ່າທີ ເປັນເຈົ້າໃຫຍ່ນາຍໂຕ, ບາງຄັ້ງ ບາງຄາວຍັງໄດ້ປັ້ນເລື່ອງຂຶ້ນ ເພື່ອບິດເບືອນ ໃສ່ຮ້າຍປ້າຍສີ ບັນດາກຳລັງຮັກຊາດ. ເປັນອັນຈະແຈ້ງວ່າ ຝ່າຍພວກທ່ານ ໄດ້ຕັ້ງໃຈຂັດຂວາງ ບໍ່ໃຫ້ກອງປະຊຸມຄືບໜ້າ, ມີຫຼາຍເທື່ອ ພວກທ່ານຊ້ຳພັດຂູ່ວ່າ ຈະເລີກກອງປະ ຊຸມ. ສະນັ້ນ ຖ້າການເຈລະຈາຫາກຢຸດສະງັກ, ຝ່າຍພວກທ່ານ ກໍຄື ສະເດັດເຈົ້າ ສຸວັນນະພູມາ ຕ້ອງເປັນຜູ້ຮັບ ຜິດຊອບຕໍ່ ປະຊາຊົນ ແລະ ຕໍ່ທາງສຽງທົ່ວໄປ.

ສ່ວນ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ຈະພະຍາຍາມໃຊ້ທຸກຄວາມສາມາດ ຂອງຕົນສືບຕໍ່ອະທິບາຍ ຊີ້ແຈງ ເຮັດໃຫ້ ຝ່າຍພວກທ່ານ ເຂົ້າໃຈຢ່າງພຽງພໍ ກ່ຽວກັບ ບັນດາຂໍ້ສະເໜີ ອັນສົມເຫດສົມຜົນ ທີ່ພວກຂ້າພະ ເຈົ້າໄດ້ວາງອອກ. ຫວັງວ່າ ຝ່າຍພວກທ່ານ ຈະຮູ້ແຈ້ງ ສະພາບການຕົວຈິງ ຂອງປະເທດເຮົາ ໃນປະຈຸບັນ, ປະ ລະ ຄວາມໃຝ່ຝັນ ຢາກກິນກິນ ບັນດາກຳລັງຮັກຊາດ, ຢາກເຈລະຈາ ໃນທ່າແຮງ ແລະ ປະລະ ທ່າທີເອົາປຽບ ເອົາລັດ ແລ້ວຈິ່ງໃຈ ເປີກສາຫາລື ແລະ ພິຈາລະນາ ຂໍ້ສະເໜີ ໕ ຂໍ້ ຂອງພວກຂ້າພະເຈົ້າ ກໍຄື ຄວາມເຫັນ ຕົວຈິງຕ່າງໆ ຂອງພວກຂ້າພະເຈົ້າ ທີ່ໄດ້ສະເໜີ ໃນວາລະປະຊຸມ ເທື່ອທີ ໑໔ ຢ່າງເຂັ້ມງວດ ເພື່ອໃຫ້ກອງປະ ຊຸມ ສາມາດ ຄືບໜ້າໄປໄດ້.

---

16 JAN 1973

# ບົດປະກອບຄຳເຫັນ

ຂອງ ທ່ານ ພູມ ສີປະເສີດ, ຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໘ (ໃນວັນທີ່ ໑໖/໑/໑໙໗໓).

---

ບັນດາທ່ານ,

ໃນວາລະປະຊຸມຄັ້ງກ່ອນໆ, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ເວົ້າຢ່າງຈະແຈ້ງ ຫຼາຍຄັ້ງຫຼາຍເທື່ອແລ້ວ ວ່າ ການຮຸກຮານ ຂອງຈັກກະພັດອາເມລິກາ ແມ່ນບໍ່ເກີດແຫ່ງສາເຫດ ຂອງ ທຸກສະພາບການເຄັ່ງຕຶງ ແລະ ສົງຄາມຢູ່ລາວ ກໍຄືທຸກຄວາມເຈັບປວດ ລົ້ມຕາຍ ຂອງ ປະຊາຊົນເຮົາ. ແຕ່ພວກທ່ານ ຍັງດື້ດ້ານ ພິກປັ່ນຄວາມຈິງ ແລະ ຫວ່ານຖ້ອຍທຳນອງ ທີ່ວ່າ "ຫວຽດນາມຮຸກຮານລາວ" ທັງນີ້ກໍເພື່ອປົກປິດ ແລະ ແກ້ຕົວໃຫ້ແກ່ການ ຮຸກຮານ ຂອງ ຈັກກະພັດອາເມລິກາຢູ່ລາວ.

ດັ່ງທຸກຄົນໄດ້ຮູ້ແລ້ວ, ປະເທດຂອງພວກເຮົາ ເປັນປະເທດນ້ອຍ ແຕ່ມີຊັບໃນດິນ ສິນໃນນ້ຳ ຢ່າງຫຼວງຫຼາຍ. ມີອີກຊັບ ປະເພດຍຸດທະສາດ ອັນເປັນພື້ນຖານ ທີ່ຈຳເປັນທີ່ສຸດ ໃຫ້ແກ່ອຸດສະຫະກຳ ຂອງອາເມລິກາ ເປັນຕົ້ນ ຕວງສະເຕັນ, ອູຣານີຍົມ. ປະເທດເຮົາເປັນທີ່ຕັ້ງສຳຄັນ ທາງດ້ານທະຫານ ຢູ່ອາຊີ ອາຄະເນ, ມີຊາຍແດນ ຕິດກັບຫ້າປະເທດ, ເປັນຂໍ້ຕໍ່ ລະຫວ່າງ ໄທ ກັບ ຫວຽດນາມ ແລະ ຈີນ, ຍ້ອນແນວນັ້ນ, ໃນ ໒໐ ກວ່າປີມານີ້, ໃນສາຍຕາຂອງ ຈັກກະພັດອາເມລິກາ, ປະເທດລາວກໍຄື ບັນດາປະເທດອິນດູຈີນ ມີຄວາມສຳຄັນເປັນພິເສດ ສະເພາະຍຸດທະສາດກວມໂລກ ຂອງອາເມລິກາ.

ນັບແຕ່ປີ ໑໙໔໑ ມາ, ນາຍພົນ ເຮືອເອກ ວ. ເລຊີ (V.Leshy ), ເອກອັກຄະລາຊະທູດ ອາເມລິກາ ຢູ່ ວີຊີ (Vichy ) ໄດ້ເວົ້າກັບ ເປແຕງ ( Pétain ) ຢ່າງຈະແຈ້ງ ເຖິງເຈດຈຳນົງ ຂອງ ລັດຖະບານອາເມລິກາ ທີ່ຢາກຍຶດເອົາ ອິນດູຈີນ ຈາກກຳມື ຂອງຍີ່ປຸ່ນຄືນ; ໃນປີ ໑໙໔໔ ປະທານາທິບໍດີ ອາເມລິກາ ໂລເຊີແວນ (Roosvelt ) ຍັງໄດ້ເວົ້າແຈ້ງຕື່ມວ່າ "ບໍ່ຈຳເປັນສົ່ງອິນດູຈີນຄືນໃຫ້ຝະລັ່ງ, ແຕ່ຕ້ອງເຮັດໃຫ້ອິນດູຈີນ ຢູ່ພາຍໃຕ້ການ ອາລັກຂາ ຂອງ ອາເມລິກາ". ຕໍ່ມາ, ອາຍແຊນຮາວ ແລະ ດາເລັດ ປຽບທຽບປະເທດລາວ ຄືກັນກັບ "ກະດອນອັດແກ້ວ ຢູ່ອາຊີ ອາຄະເນ", ເປັນ "ທີ່ຕັ້ງຂໍກະແຈອັນໜຶ່ງ ໃນຍຸດທະສາດກວມໂລກ ຂອງອາເມລິກາ" ແລະ "ເຮັດໃຫ້ລາວກາຍເປັນ ປ້ອມຕ້ານ ກອມມູນິດ ແລະ ປ້ອມປືນໃຫຍ່ ຍິງໄກ ຂອງໂລກເສລີ".

ຄຳຖະແຫຼງຕ່າງໆ ຂອງບັນດາຜູ້ກຳອຳນາດອາເມລິກາ ທີ່ໄດ້ກ່າວມາຂ້າງເທິງ ພຽງແຕ່ເປັນພາກສ່ວນໜຶ່ງ ໃນບັນດາ ຫຼັກຖານ ກ່ຽວກັບການຮຸກຮານ ຂອງອາເມລິກາ ທີ່ໄດ້ລິດໄລມາແຕ່ປີ ໑໙໔໑ ກ່ອນທີ່ສົງຄາມໂລກຄັ້ງທີສອງ ຍັງບໍ່ທັນຢຸດເຊົາ ແລະ ໃນເວລາທີ່ປະເທດລາວ ຍັງເປັນຫົວເມືອງຂຶ້ນ ຂອງຝະລັ່ງຢູ່. ກົນອຸບາຍ ອັນໜຶ່ງອັນດຽວ ຂອງ ອາເມລິກາ ນັບແຕ່ສົງຄາມໂລກຄັ້ງທີສອງ ມາເຖິງປະຈຸບັນ ແມ່ນກັບສຸມບັນດາກຳລັງຮັກຊາດລາວ, ປຸ້ນສະດົມ ແລ້ວ ເຮັດໃຫ້ປະເທດເຮົາ ກໍຄື ບັນດາປະເທດ ອິນດູຈີນອື່ນໆ ກາຍເປັນຫົວເມືອງຂຶ້ນແບບໃໝ່ ແລະ ຖານທັບກໍ່ສົງຄາມ ຂອງອາເມລິກາ ທີ່ນອນຢູ່ໃນ ຍຸດທະສາດ "ສາຍໝູ່ເກາະ ແຄມຝັ່ງທະເລ" ຂອງອາເມລິກາ, ອິນດູຈີນ ເປັນໜຶ່ງ ໃນສອງຖານທັບທີ່ເປັນ ຫົວຂົວໃນທະວີບ ເໝືອນດັ່ງ ດາເລັດ ( Dulles ) ໄດ້ປະກາດອອກ ໃນວັນທີ່ ໔/໓/໕໙ (ເກົາຫຼີ ແມ່ນຫົວຂົວຕັ້ງແຕ່ ອາຊີ ຕາເວັນອອກສ່ຽງເໜືອລົງ ແລະ ອິນດູຈີນ ແມ່ນຫົວຂົວທີສອງ ແຕ່ ອາຊີ ອາຄະເນຂຶ້ນໄປ).

ໃນການກະທຳຕົວຈິງ, ເມື່ອຝະລັ່ງຈັກອອນເພຣ ໃນສົງຄາມອິນດູຈີນ, ອາເມລິກາຊໍ້າພັດໄດ້ຍ່າງຕີນເຂົ້າລາວ, ຫວຽດນາມ ແລະ ກຳພູຊາ ເທື່ອລະກ້າວ. ໃນປີ ໑໙໔໙, ອາເມລິກາໄດ້ສອຣໃຊ້ການຊ່ວຍເຫຼືອ, ຫນີບໃຫ້ຝະລັ່ງ ເຣັດອັນທີ່ເອີ້ນວ່າ "ນະໂຍບາຍເອກະລາດ" ( ເອກະລາດບ່ອນແປງ ) ໃຫ້ລາວ, ຫວຽດນາມ ແລະ ກຳພູຊາ, ໃນປີ ໑໙໕໐ ໃຫ້ຈັດຕັ້ງ "ບັນດາປະເທດ ສະຫະພັນ" ເພື່ອໃຫ້ອາເມລິກາ ມີຂໍ້ອ້າງອີງ ເຊັນອານຸສັນຍາ ກັບປະເທດເຫຼົ່ານີ້ ແລະ ໃຫ້ຮັບຮູ້ວ່າ ອາເມລິກາມີສິດປະກອບສ່ວນໃນການ ປ້ອງກັນອິນດູຈີນ. ເປັນອັນວ່າ ອາເມລິກາ ໄດ້ສ້າງພື້ນຖານກົດຫມາຍອັນລືບລ້ອນ ໃຫ້ແກ່ທຸກການເຄື່ອນໄຫວ ແຊກຊືມທາງດ້ານເສດຖະກິດ ແລະ ການທະຫານຂອງເຂົາ ໃນເວລາທີ່ລາວ ຍັງເປັນເມືອງຂຶ້ນ ຂອງຝະລັ່ງຢູ່.

ເມື່ອຖືກປະລາໄຊ ໃນການຊອກຫາລາຣ ກອງປະຊຸມເຊີແນວ ປີ ໑໙໕໔ ກ່ຽວກັບອິນດູຈີນ, ອາເມລິກາ ຈຳຕ້ອງໄດ້ຍິນຍອມໃຫ້ຝະລັ່ງ ເຊັນສັນຍາເຊີແນວ, ແຕ່ຍັງໄດ້ວາງເງື່ອນໄຂ ກ ້ ອອກ ໃນນັ້ນກໍມີບັນດາເງື່ອນໄຂ ທີ່ແນໃສ່ເປີດປະຕູ ໃຫ້ແກ່ການຮຸກຮານ ຂອງອາເມລິກາ ເຂົ້າລາວໂດຍກົງຄື "ຕ້ອງຮັກສາລາວ ແລະ ກຳພູຊາ ໄວ້ຢ່າງຄົບຖ້ວນ ບໍ່ເຮັດໃຫ້ມີການຈຳກັດໃດໆ ກ່ຽວກັບສິດ ໃນການກໍ່ສ້າງກຳລັງ ເພື່ອປົກປັກຮັກສາ ຄວາມປອດໄພໃນປະເທດ, ສິດນຳເຂົ້າອາວຸດເຂົ້າ ແລະ ສິດຂໍເອົາທີ່ປຶກສາ ຂອງບັນດາປະເທດນອກເຂົ້າລາວ, ກຳພູຊາ ແລະ ສ່ວນທີ່ຍັງເຫຼືອຂອງ ຫວຽດນາມ" ຕາມປຶ້ມ "ການຢຸດເຊົາສົງຄາມ", ຂອງ ຈັງລາກູຕູຣ ແລະ ເດີວີແລ (J.Lacouture et Devillers ) ທີ່ພິມຈຳຫນ່າຍ ໃນປີ ໑໙໖໐.

ການຫວງເອົາສິດດັ່ງກ່າວຂ້າງເທິງ ຂອງອາເມລິກາ ຕົ້ນຕໍ ແມ່ນກອຣມເງື່ອນໄຂໃຫ້ອາເມລິກາເຂົ້າ ແທນບ່ອນຂອງຝະລັ່ງ ເພື່ອປະຕິບັດລັດທິລ່າເມືອງຂຶ້ນແບບໃຫມ່ ຂອງອາເມລິກາຢູ່ລາວ ຕາມແບບທີ່ພວກເຂົາເຄີຍເຮັດມາ.

ແຕ່ປີ ໑໙໕໔ ເຖິງປະຈຸບັນ, ອາເມລິກາ ໄດ້ແຊກແຊງຮຸກຮານລາວໂດຍກົງ ໂດຍສົມທົບທຸກເລ່ຫລ່ຽມ ການທະຫານ, ການເມືອງ, ເສດຖະກິດ ແລະ ວັດທະນະທຳ. ບາງໄລຍະ ອາເມລິກາໄດ້ໃຊ້ການພົນແປ ໂດຍສັນຕິເປັນຕົ້ນຕໍ, ມີບາງໄລຍະກໍໃຊ້ ສົງຄາມເປັນຕົ້ນຕໍ ເພື່ອຫວັງດັບມອດ ບັນດາກຳລັງຮັກຊາດ ແລະ ເຈດຈຳນົງ ເອກະລາດ ເປັນເຈົ້າຂອງຕົນເອງ ຂອງປະຊາຊົນເຮົາ ເຊິ່ງອາດຈະແບ່ງເປັນ ສອງໄລຍະ:

ໄລຍະທີ່ໜຶ່ງ ແຕ່ປີ ໑໙໕໔ ເຖິງ ປີ ໑໙໕໘.

ທຸກຄົນຄົງຈື່ຈຳໄດ້ດີວ່າ: ໃນເດືອນ ໒/໑໙໕໕, ດາເລັດ ( Dulles ), ລັດຖະມົນຕີກະຊວງການຕ່າງປະເທດ ຂອງອາເມລິກາ ໄດ້ມາລາວ ເພື່ອປຶກສາຫາລືກັບ ທ່ານ ກະຕາຣ ໂດນສະໂສລິດ ກ່ຽວກັບການມ້າງເພສັນຍາເຊີແນວປີ ໑໙໕໔. ຫຼັງຈາກນັ້ນ ທ່ານ ກະຕາຣ ກໍໄດ້ເປີດເຜີຍ ຕໍ່ນັກຫນັງສືພິມວ່າ ອາເມລິກາ ຈະເກື້ອກູນ ຊ່ວຍເຫຼືອລາວໂດຍກົງ ທາງດ້ານທະຫານ ແລະ ເສດຖະກິດ ແລະ ລາຣຈ່າຣທັງຫມົດ ທາງທະຫານ ແລະ ໄດ້ຊຸກຍູ້ ກຳລັງທະການບຸກໂຈມຕີເຂົ້າ ສອງແຂວງເຕົ້າໂຮມ ຂອງບັນດາກຳລັງປະເທດລາວ. ແຕ່ຍ້ອນຖືກປະລາໄຊ, ລັດຖະບານ ກະຕາຣຈຶ່ງຈຳຕ້ອງລາອອກ ແລ້ວສະເດັດເຈົ້າ ສຸວັນນະພູມາ ຈຶ່ງໄດ້ຂຶ້ນແທນ, ແລະ ຍອມເຊັນສັນຍາວຽງຈັນປີ ໑໙໕໗ ກັບຝ່າຍປະເທດລາວ. ບົນພື້ນຖານນັ້ນ, ລັດຖະບານປະສົມແຫ່ງຊາດຊຸດທຳອິດ ກໍໄດ້ຮັບການຈັດຕັ້ງຂຶ້ນ.

ແຕ່ອາເມລິກາ ແລະ ພວກຂວາຈັດ ຊໍ້າພັດໄດ້ໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດນັ້ນ, ແລ້ວດຶງເອົາທ່ານ ຜຸຍ ຊະນະນິກອນ ຂຶ້ນກຳອຳນາດ, ກັກຂັງຜູ້ນຳ ຂອງຝ່າຍປະເທດລາວ, ປົດອາວຸດກອງພັນຕ່າງໆ ຂອງກຳລັງປະເທດລາວ, ແລະ ກໍ່ສົງຄາມຄືນໃຫມ່. ພາຣລຸມມາ ໄດ້ໃຊ້ ພູມີ ຫນໍ່ສະຫວັນ ແລະ ອີງໃສ່ພວກກຳອຳນາດໄທ ເປີດ

[illegible] ຖານ [illegible] ໃນປະເທດ, ແຕ່ກໍໄດ້ຖືກປະລາໄຊ ຢ່າງເຈັບແສບ. ຍ້ອນແນວນັ້ນ, ອາເມລິກາ ແລະ ລູກນ້ອງໄດ້ຍອມເຊັນສັນຍາເຈນີວປີ ໑໙໖໒ ແລະ ສັນຍາຕ່າງໆ ກ່ຽວກັບລາວ, ຈັດຕັ້ງລັດຖະບານປະສົມແຫ່ງຊາດ ຊຸດທີສອງຂຶ້ນ.

<u>ໄລຍະທີສອງ ເລີ່ມແຕ່ການເຊັນສັນຍາປີ ໑໙໖໒ ຈົນເຖິງປະຈຸບັນ.</u>

ພາຍຫຼັງສັນຍາເຈນີວປີ ໑໙໖໒ ໄດ້ເຊັນກັນ ແລະ ລັດຖະບານປະສົມແຫ່ງຊາດ ໄດ້ຖືກຈັດຕັ້ງຂຶ້ນ ໗–໘ ເດືອນຕໍ່ມານັ້ນ, ໃນວັນທີ ໑/໔/໑໙໖໓, ພະນະທ່ານ ກີນິມ ພົນເສນາ, ລັດຖະມົນຕີ ກະຊວງການຕ່າງປະເທດ ກໍຖືກອາເມລິກາ ແລະ ລູກມື ຄາດຕະກຳ, ພາຍໃນກຳລັງເປັນກາງຖືກທຳລາຍ. ພາຍໃຕ້ການຊີ້ນຳ ຂອງ ເຊອີອາ, ກຸປະສິດ ໄດ້ເຮັດລັດຖະປະຫານ ໃນວັນທີ ໑໙/໔/໑໙໖໔, ໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດ, ກັກຂັງສະເດັດເຈົ້າສຸວັນນະພູມາ ແລ້ວປ່ຽນເພີ່ມ ໃຫ້ມາ "ດັດແປງລັດຖະບານ" ສ້າງອຳນາດການປົກຄອງ ນິຍົມອາເມລິກາ, ນຳເອົາກອງທັບອາກາດ ອາເມລິກາ, ກອງທະຫານໄທ ແລະ ກອງທະຫານຫຸ່ນໄຊງ່ອນ ເຂົ້າມາປ່ຽນຢ່ຳຍີ່ ພື້ນແຜ່ນດິນລາວ, ດຳເນີນສົງຄາມອັນປ່າເຖື່ອນທີ່ສຸດ ແລະ ເຮັດໃຫ້ການຮຸກຮານ ປະເທດເຮົາ ຍືດຍາວມາເຖິງປະຈຸບັນນີ້.

ບັນດາທ່ານ,

ຫຼັງຈາກພວກລ່າເມືອງຂຶ້ນ ຝະລັ່ງໄດ້ຖືກປະລາໄຊ, ຈັກກະພັດອາເມລິກາໄດ້ດຳເນີນການຮຸກຮານ ປະເທດເຮົາຕະຫຼອດມາ, ພວກເຂົາໄດ້ປະຕິບັດ ລັດທິລ່າເມືອງຂຶ້ນແບບໃໝ່ ຕາມແບບທີ່ພວກເຂົາເຄີຍໄດ້ເຮັດມາ ຢູ່ທະວີບອາເມລິກາ.

ລັດທິລ່າເມືອງຂຶ້ນແບບໃໝ່ ອັນໂຫດຫ້ຽມ ຂອງອາເມລິກາ ຢູ່ລາວໄດ້ຊ່ອນຕົວຢູ່ໃນເປືອກ "ເອກະລາດ", "ເປັນກາງ" ແບບປອມແປງ ເຊິ່ງແມ່ນອາເມລິກາເອງ ເປັນຜູ້ຜັດແປ້ງແຕ່ງຕົວໃຫ້.

ຄືດັ່ງທີ່ພວກເຂົາ ເຄີຍໄດ້ເຮັດມາ ຢູ່ບ່ອນອື່ນໆ, ອາເມລິກາໄດ້ໃຊ້ "ການຊ່ວຍເຫຼືອ ແລະ ລະບົບ ທີ່ປຶກສາຂອງເຂົາຢູ່ລາວ. ການຊ່ວຍເຫຼືອດັ່ງກ່າວ ແມ່ນໃຫຍ່ໂຕທີ່ສຸດ ຖ້າຄິດສະເລ່ຍ ປະລິມານອາວຸດ ແລະສິນຄ້າໃສ່ແຕ່ລະຫົວຄົນ ອັນໄດ້ເຮັດໃຫ້ດິນລາວ ທີ່ບູຊາເງິນ ຈຳນວນບັນຍ ຖືກຫົວໄຫຼເບື້ອເມົາ (ຕາມງົບປະມານສົກປີ ໑໙໗໑-໑໙໗໔, ການຊ່ວຍເຫຼືອ ຂອງອາເມລິກາ ໃຫ້ອຳນາດການປົກຄອງວຽງຈັນ ທີ່ຄວບຄຸມປະຊາຊົນ ພຽງແຕ່ ໑ ລ້ານກວ່າຄົນ, ກໍໄດ້ມີເຖິງ ໔໐໐ ລ້ານໂດລາ, ໃນນັ້ນ ການຊ່ວຍເຫຼືອ ທາງທະຫານ ໄດ້ກວມເຖິງ ໓໕໐ ຫາ ໓໖໐ ລ້ານໂດລາ). ການຊ່ວຍເຫຼືອອາວຸດ ແມ່ນພື້ນຖານວັດຖຸ ເພື່ອອາເມລິກາ ຊຸກຍູ້ ຄົນລາວຂ້າຄົນລາວ, ການຊ່ວຍເຫຼືອສິນຄ້າ ແມ່ນວັດຖຸ ເພື່ອໃຫ້ອາເມລິກາ ຄວບຄຸມພື້ນຖານເສດຖະກິດ ອັນຫຼ້າຫຼັງ ຂອງລາວ ແລະ ສ້າງຈົນຊຸ້ມ ນາຍທຶນຈຳໜ່າຍ ທີ່ຕິດພັນ ສະໜິດແໜ້ນກັບອາເມລິກາ, ສ້າງພື້ນຖານສັງຄົມ ໃຫ້ແກ່ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ. ຈາກການຊ່ວຍເຫຼືອ ທາງດ້ານເສດຖະກິດ, ອາເມລິກາ ໄດ້ກໍ່ຄວາມປັ່ນປ່ວນ ທາງດ້ານການເມືອງ ແລະ ຂະຫຍາຍການດຳລົງຊີວິດ ແບບອາເມລິກາ, ສ້າງຈິດໃຈນິຍົມ ນັບຖື ອາເມລິກາ, ຢ້ານອາເມລິກາ ເຮັດໃຫ້ຄົນຈຳນວນໜຶ່ງ ທີ່ເປັນຢ່າງສະໜຸກສະໜານ. ນິຈຳບາດໃນສັງຄົມ ແລະ ສ້າງພວກນີ້ ໃຫ້ກາຍເປັນລູກມື ຜູ້ເອົາການ ເອົາງານ ໃຫ້ແກ່ຈັກກະພັດອາເມລິກາ.

ບົນພື້ນຖານ ແຫ່ງການຊ່ວຍເຫຼືອທາງທະຫານ ແລະ ທາງພົນລະເຮືອນ, ອາເມລິກາ ໄດ້ຈັດຕັ້ງ ລະບົບ ທີ່ປຶກສາທະຫານ ແລະ ພົນລະເຮືອນຂຶ້ນ ເພື່ອເປັນເຄື່ອງມືໃນມືຂອງຕົນ ໃຫ້ອາເມລິກາ ກອດກາການຊ່ວຍເຫຼືອ

ແລະກ້າວເຂົ້າ ກວດກາທຸກການເຄື່ອນໄຫວ ທາງການເມືອງ, ການທະຫານ, ເສດຖະກິດ ແລະ ວັດທະນະທຳ ຂອງລາວ. ພວກເຂົາເຄີຍໄດ້ປ່ຽນຮູບ ຢູ່ເລື້ອຍໆ, ນັບແຕ່ເປັນອົງການ ເປເອໂອ ( PEO ) ໃນປີ ໑໙໕໕, ຂະຫຍາຍອອກມາເປັນ ແອມ ເອເອເຈ ( MAAG ) ແລ້ວກາຍມາເປັນ ຢູຊອມ (USOM ), ແລະ ຫຼັງຈາກສົນທິສັນຍາເຈນີວປີ ໑໙໖໒ ມາເຖິງປະຈຸບັນ ປ່ຽນເປັນ ຢູແອດ ( USAID ), ອາເມລິກາ ໄດ້ຈັດຕັ້ງກົງຈັກຄວບຄຸມ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງພວກເຂົາຂຶ້ນ ທີ່ລວມຢູ່ໃນຮູບ ອົງການສາກົນ ຊ່ວຍເຫຼືອທາງດ້ານ ເສດຖະກິດ, ພາຍໃຕ້ການນຳ ຂອງເອກອັກຄະລາຊະທູດ ອາເມລິກາ ຢູ່ວຽງຈັນ ເຊິ່ງເປັນນາຍົກຜູ້ທີໜຶ່ງຢູ່ລາວ.

"ອົງການ ຢູແອດ ( USAID ) ມີພະນັກງານເຖິງ ๗.໐໐໐ ຄົນ ລວມທັງຂະແໜງກະສິກຳ ພັດທະນາຊົນນະບົດ ( IVS ), ອຸດສະຫະກຳ, ການຄັງ, ສຶກສາ, ໂຍທາ, ທະນາຄານ ທີ່ຈັດຕັ້ງຂຶ້ນ ຄອບງຳກັບ ວາງມາດການປົກຄອງວຽງຈັນທຸກຂັ້ນ. ນອກນັ້ນ, ຍັງມີຂະແໜງ ທະຫານ ແລະ ຕຳຫຼວດ ເພື່ອຊີ້ນຳ ກອງທັບ ແລະ ຕຳຫຼວດລາວ, ມີຂະແໜງ ເພື່ອປົກປິດໃຫ້ ເຈົ້າຊີວິດ ຊີ້ນຳກອງທັບບໍລິສັຍ" ແລະ ວາງຕາ ນາງນັກຂ່າວສອດແນມ, ມີອົງການ ຢູສິດ ( USIS ) ເຊິ່ງເປັນອົງການ ລະດົມຈິດໃຈ; ມີບໍລິສັດ ແອອາເມລິກາ ( Air America ) ແລະ ບໍລິສັດ ກົງຕີນັງຕານ ແອແຊວິດ ( Continental Air Service) ເຊິ່ງເປັນອົງການລຳລຽງອາວຸດ ສິ່ງ ທາງອາກາດ ໃຫ້ທະຫານ.

ທັງໝົດເຫຼົ່ານີ້ ແມ່ນການທົດລອງ ທາງດ້ານນະໂຍບາຍ ລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ທີ່ມີຄວາມຫວັງ ຫຼາຍທີ່ສຸດ ແນໃສ່ສ້າງກົງຈັກປົກຄອງ ຂອງອາເມລິກາ ຢູ່ຕ່າງປະເທດ. ຜູ້ທີ່ກຳອຳນາດສູງສຸດ ໃນການປົກຄອງນີ້ ແມ່ນ ເອກອັກຄະລາຊະທູດ ອາເມລິກາ ເປັນຜູ້ຮັບຜິດຊອບ ທາງດ້ານນະໂຍບາຍ ໂດຍສົມທົບກັບການເຄື່ອນໄຫວຂອງ ເຈົ້າຊີວິດ, ພະນັກງານ ທະຫານ ອາເມລິກາ, ບໍລິສັດ ແອອາເມລິກາ ແລະ ບໍລິສັດ ກົງຕີນັງຕານ ແອແຊກວິດ ພະນັກງານ ຂອງອົງການຊ່ວຍເຫຼືອ ຂອງອາເມລິກາຢູ່ລາວ.

ກົງຈັກປົກຄອງອາເມລິກາຢູ່ລາວ ຮູບນອກແມ່ນ ອົງການເສດຖະກິດ ແລະ ເຊື່ອງລີ້ຢູ່ພາຍໃຕ້ເສື້ອ "ຕ່າງປະເທດ" ເພື່ອເຮັດໃຫ້ ຜູ້ຄົນຫຼົງຢ່າງງາຍດາຍ. ນາຍພົນຝະລັ່ງ ຮັງລີນາວາ (H. Navare) ກໍ່ໄດ້ສັງເກດໃນທັນທີທັນໃດວ່າ: "ຢູ່ລາວປະຈຸບັນ ບໍ່ມີຜູ້ສຳເລັດລາຊະການ ອາເມລິກາ ແຕ່ຫາກມີທູດ ອາເມລິກາ, ຖ້າບໍ່ໄດ້ຮັບອະນຸຍາດ ຂອງຜູ້ນັ້ນ ອົງການອັນໃດ ກໍ່ເຮັດບໍ່ໄດ້, ນັ້ນແມ່ນ ລັດທິລ່າເມືອງຂຶ້ນຂອງເງິນໂດລາ". ແຕ່ນາຍພົນລ່າເມືອງຂຶ້ນ ກໍຮູ້ດີລາຄາດີແນວນີ້, ເຮັດແນວໃດ ພວກທ່ານ ທີ່ເປັນຄົນລາວແທ້ໆ ຈຶ່ງມາປົກປິດ ການຮຸກຮານ ລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາຢູ່ເລື້ອຍໆ. ຄວາມເວົ້າອັນນັ້ນ ມັນສະແດງໃຫ້ເຫັນວ່າ ພວກທ່ານ ເປັນເຄື່ອງມືປະຕິບັດ ລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາໂດຍກົງ.

ເວົ້າລວມແລ້ວ, ກໍ່ເຫັນວ່າ ພາຍຫຼັງທີ່ໄດ້ປະລາໄຊມາຕັ້ງຫຼາຍຄັ້ງ. ອາເມລິກາໄດ້ສຳເລັດ ສ່ວນໃດສ່ວນໜຶ່ງ ໃນການກໍ່ສ້າງກົງຈັກເຄື່ອງມືດັ່ງກ່າວ.

ຫຼັງຈາກປະລາໄຊໃນການສອຍໃຊ້ ທ້າວ ກະຕາຍ ແລ້ວ, ອາເມລິກາກໍ່ໄດ້ໃຊ້ທ້າວ ພູຍ ຊະນະນິກອນ ເປັນໃບໄມ້ ສ້າງລະບອບ ຄະນະຄົວພູກຂາດຢູ່ວຽງຈັນ ເຊັ່ນດຽວກັນກັບ ໂງດິນຢຽມ ຫຸ່ນໄຊງ່ອນ ເພື່ອໜີບເຕັງ ບັນດາກຳລັງຮັກຊາດລາວ, ແຕ່ກໍ່ຍັງຖືກປະລາໄຊອີກ. ອາເມລິກາຈຳຕ້ອງດຶງເອົາ "ຄົນເກົ່າ" ຄື ພູມີ ໜໍ່ສະຫວັນ ທີ່ເປັນພີ່ນ້ອງກັບ ຈອມພົນ ສະລິດ ທະນະລັດ ຢູ່ປະເທດໄທຄາວກ່ອນ ແລະ ໃຊ້ໄທ ສົມທົບກັບ ກຳລັງປະຕິການຢູ່ລາວ ເປີດກວ້າງສົງຄາມໄປທົ່ວປະເທດ. ບໍ່ພຽງແຕ່ເທົ່ານັ້ນ, ບາງຄັ້ງບາງຄາວ ພວກເຂົາຍັງນຳເອົາກອງທະຫານອາເມລິກາ

ແລະ ໄທ ກະໂດດເຂົ້າລາວ.

ເມື່ອເສິຣໄປໂພ ພູມີ ໜໍ່ສະຫວັນແລ້ວ, ເຊີງາ ກໍ່ໄດ້ປ່ຽນມາໃຊ້ ຄົນເປັນກາງ ເພື່ອນາງເພກຳລັງ ເປັນກາງ ແຕ່ໃນວົງນອກ. ພວກເຂົາມີໃຈດຳອຳມະຫິດຈັກກະພັດ ໃຫ້ ກຸ່ປະລົດ ເຮັດລັດຖະປະຫານ ໂຄ່ນລົ້ມ ລັດຖະບານ ປະສົມແຫ່ງຊາດສາມຝ່າຍ ເຊິ່ງແມ່ນສະເດັດເຈົ້າ ສຸວັນນະພູມາ ເປັນຜູ້ນຳ, ຈັບສະເດັດເຂົ້າຄຸກ, ໃຊ້ວິທີຈາງຈອບອອງ ແລະ ນາຍຊູ, ແລ້ວປ່ອຍເປັນອອກ ຕາມເງື່ອນໄຂ ຂອງພວກເຂົາ ເພື່ອບັງຄັບໃຫ້ເພີ່ນ ເຮັດຕາມອາເມລິກາ, ທາງເປືອກນອກເອີ້ນວ່າ "ລັດຖະບານປະສົມ" ດ້ວຍຄວາມຫວັງວ່າ ຈະຫຼອກລວງ ປະຊາຊົນພາຍໃນ ແລະ ນອກປະເທດ ໄດ້ຢ່າງງ່າຍດາຍ. ນັ້ນ ແມ່ນການສະແດງລະຄອນກ້ວມ ຂອງ ເຊີງາ ທີ່ໄດ້ປ່ຽນສະເດັດ ເປັນກາງ ມານິຍົມອາເມລິກາ ແລະ ໄດ້ສ້າງເປືອກນອກ ທີ່ດີ ເພື່ອປົກປິດ ໃຫ້ແກ່ການຮຸກຮານ ຂອງອາເມລິກາຢູ່ປະເທດເຮົາ. ແຕ່ "ຄວາມເນົ່າເໝັນ ແລະ ການຂາດປະໂຫຍດ ຂອງລັດຖະບານນີ້ ຍັງດຳລົງຄົງຕົວ ແລະ ຍັງຕຳໜິ ກວ່າເວລາໃດໆໝົດ" (ນິດຕະຍາສານ ເສດຖະກິດ ຕາເວັນອອກໄກ ສະບັບທີ ໑໖/໔/໗໐). ສະນັ້ນ ທີ່ປຶກສາອາເມລິກາ ຈຶ່ງນັບມື້ນັບຍື່ນມືເຂົ້າ ໃນວຽກພາຍໃນຂອງລາວ.

ກ່ຽວກັບການກໍ່ສ້າງກອງທັບ ໃຫ້ກາຍເປັນເຄື່ອງມືຕົ້ນຕໍ ຂອງລັດທິລ່າເມືອງຂຶ້ນແບບໃໝ່ນັ້ນ, ພວກເຂົາໄດ້ພະຍາຍາມ ກໍ່ສ້າງກອງທັບ ລາຊະ ອານາຈັກຂຶ້ນ, ແຕ່ກອງທັບນີ້, ພາຍຫຼັງທີ່ຖືກປະລາໄຊໜັກຢູ່ບ່ອນຮົບນ້ຳບາກ ບໍ່ມີນ້ຳໃຈສູ້ຮົບ ຕໍ່ໄປອີກ, ພວກເຂົາກໍ່ເອົາມາ ເຮັດໜ້າທີ່ ຮັກສາແນວຫຼັງ, ແຕ່ກໍ່ເຮັດບໍ່ໄດ້. ເມື່ອເປັນດັ່ງນັ້ນ, ເຊີງາ ຈຳຕ້ອງຫັນມາສ້າງ "ກຳລັງພິເສດ" ໂດຍກົງ ເຊິ່ງເປັນກຳລັງ.ທີ່ບໍ່ຂຶ້ນກັບ ການບັງຄັບບັນຊາ ຂອງເສນາທິການກອງທັບ ລາຊະອານາຈັກ. ແຕ່ວ່າອາເມລິກາ ກໍ່ຍັງຢູ່ໃນສະພາບ ຕົກສະໜົມ.

ຫຼັງຈາກບັ້ນຮົບ "ກູກອດ" ເຊິ່ງແມ່ນການທົດສອບຂັ້ນໃຫຍ່ທີ່ສຸດ ຂອງ "ທິດສະດີ ນິກສັນ ຢູ່ລາວ" ໄດ້ຖືກປະລາໄຊໃນຕົ້ນປີ ໑໙໗໐, ກຳລັງພິເສດ ເຊິ່ງເປັນກຳລັງຕົ້ນຕໍ ໄດ້ອ່ອນເພຍເສຍຂວັນ ຢ່າງໜັກໜ່ວງ, ອາເມລິກາ ຈຳພັດໄດ້ນຳເອົາ ກອງທະຫານໄທ ເຂົ້າມາລາວຢ່າງຫຼວງຫຼາຍ ເພື່ອກອບກູ້ເອົາພວກຫຸ່ນ ອອກຈາກໄພອັນຕະລາຍ, ອັນໄດ້ເຮັດໃຫ້ໃບໜ້າຮຸກຮານ ຂອງອາເມລິກາ ຍິ່ງຖືກເປີດເຜີຍແປນຕົນ. ການສ້າງ "ກຳລັງພິເສດ" ທີ່ປະກອບດ້ວຍ ບັນດາຊຸດຄົນ ຊົນຊາດຕ່າງໆ ໂດຍສະເພາະແມ່ນ ຊົນຊາດສ່ວນນ້ອຍ, ຕົ້ນຕໍແມ່ນ ຊົນຊາດລາວສູງນັ້ນ, ແມ່ນກົນອຸບາຍອັນຍາວນານ ທີ່ມີລັກສະນະຍຸດທະສາດ ຂອງອາເມລິກາຢູ່ລາວ. ອາເມລິກາ ໄດ້ສົ່ງທີ່ປຶກສາ ມາປະຈຳໃນກຳລັງນີ້ ພ້ອມທັງໄດ້ປະກອບອາວຸດ, ເງິນຄຳ, ເຄື່ອງຂອງ ແລະ ການໃຊ້ຈ່າຍໃຫ້ຄົນທີ່ວ່າ "ຕໍ່ສູ້ ເພື່ອລາຊະອານາຈັກແມ້ວ ປົກຄອງຕົນເອງ" ເພື່ອຕົວະຍົວະພົ່ນຊົນຊາດລາວສູງ. ເຖິງວ່າ ຈະເອົາໃຈໃສ່ກໍ່ສ້າງ ປານນັ້ນກໍ່ຕາມ, ແຕ່ວ່າອາເມລິກາ ກໍ່ຍັງຖືກປະລາໄຊ, ແລະ ຜົນຮ້າຍຂອງມັນ ກໍ່ແມ່ນເຮັດໃຫ້ຊົນຊາດໜຶ່ງ ຖືກດັບສູນໄປ ຍ້ອນນະໂຍບາຍ ໃຊ້ຄົນລາວຂ້າຄົນລາວ ຂອງ ນິກສັນ. ກະໂຕ ເອດກາປັອບ ບູແອນ (E."Pop" Buell ) ເອງ ເຊິ່ງເປັນຄົນອາເມລິກາ ທີ່ໄດ້ຮັບຜິດຊອບ ທຸກການເຄື່ອນໄຫວ ຂອງຄົນແມ້ວໂດຍກົງ ກໍ່ໄດ້ກ່າວປະນາມວ່າ: "ພວກເພື່ອນ (ຄົນແມ້ວ) ຂອງເຮົາຢູ່ລາວ ໄດ້ລົ້ມຕາຍຕາມເນິ່ງ ໃນສະໜາມຮົບ. ຄົນເຖົ້າ ກໍ່ຖືກອຶດຕາຍ ໃນພື້ນແຜ່ນດິນອັນນີ້ ແລະ ອາເມລິກາ ບໍ່ມີເວລາ ຈະຕອບບຸນແທນຄຸນເຂົາໄດ້".

ນອມຈອມສະກີ ( Noam Chomsky ), ນັກຂຽນອາເມລິກາ, ຍັງສະຫຼຸບແຈ້ງອີກວ່າ "ນະໂຍບາຍ ເສດສະຫຼະ ຂອງຄົນແມ້ວ ໃນສົງຄາມ ຕ້ານກອມມູນິດ" ທີ່ອາເມລິກາ ໄດ້ປະຕິບັດມາ, ແມ່ນທິດສະນະອັນຈືດຈ້າ ເລວຊາມທີ່ສຸດ ຂອງອາເມລິກາ ຢູ່ອິນດູຈີນ (ຫຍໍ້ອອກຈາກ "ສົງຄາມຢູ່ທະວີບອາຊີ" ຂອງ ນອມຈອມສະກີ ທີ່ພິມຈຳໜ່າຍ ປີ ໑໙໗໐). ຄົນອາເມລິກາເອງ ກໍ່ຍັງກ່າວເວົ້າຄວາມຈິງ ສ່ວນໃດສ່ວນໜຶ່ງ, ແຕ່ໜ້າເສຍດາຍ ພວກ

ທ່ານທີ່ເປັນຄົນລາວ ຈົ່ງພົດປົກໃດໂຫດກຳ ຂອງອາເມລິກາ, ການປ້ອງ ແມ່ນລາວຮັກຊາດ ແລະ ທໍຣະມານ ໂດຍ ບໍ່ຄຳນຶງເຖິງ ຄວາມຖືກຕ້ອງ ແລະ ເປັນຈິງ.

ຄຽງຄູ່ກັບການສ້າງ ເຄື່ອງມືລ່າເມືອງຂຶ້ນແບບໃໝ່ ທີ່ກ່າວມາຂ້າງເທິງນັ້ນ ອາເມລິກາ ກໍ່ໄດ້ອອກແຮງ ສ້າງບ່ອນອີງ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ທັງເປັນແນວໜ້າກັບທີ່, ເຮັດໃຫ້ເຂດ ທີ່ຝ່າຍຂວາຈັນຄວບຄຸມ ດ້ວຍຈິ້ນຈຸ້ນ ນາຍທຶນຈ່າໜ່າຍ ອາຍາສິດ ອຸ່ນເສິກ ກາຍເປັນພື້ນຖານມັ້ງຄົ້ມ ທີ່ຜູກຕິດກັບ ພະລາທິການ ຂອງອາເມລິກາຢູ່ປະເທດໄທ, ເວົ້າກໍ່ລັງປະຕິການໄທ ເປັນກະດູກສັນຫຼັງ ໃຫ້ແກ່ນສຳພັນທະຫານ ບາງກອກ, ວຽງຈັນ, ໄຊງ່ອນ ແລະ ພະນົມເປັນ ເພື່ອຮັກສາລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາຢູ່ລາວ ໄວ້ຢ່າງຍາວນານ.

ຈິ້ນຈຸ້ນນາຍທຶນຈ່າໜ່າຍ ອາຍາສິດ ອຸ່ນເສິກລາວ (ພະລິດທະພັນໂດຍກົງ ຂອງ ການຊ່ວຍເຫຼືອ ຂອງອາເມລິກາ) ໄດ້ຮັບການລ້ຽງດູຈາກອາເມລິກາ ມອບໜ້າຍໃຫ້ກຳຕຳແໜ່ງສຳຄັນ ໃນອຳນາດການປົກຄອງ ແລະ ກອງທັບຝ່າຍຂວາຈັນ ໂດຍສະເພາະ ແມ່ນຮອບຄົວ ຊະນະນິກອນ ປູ່ອຍຂວາຈັນ ແລະ ຮອບຄົວອື່ນໆ ຈຳນວນໜຶ່ງ ຢູ່ຕາມແຕ່ລະທ້ອງຖິ່ນ. ໂດຍສ່ວຍໃຊ້ສິດ ທາງດ້ານການເມືອງ ແລະ ການທະຫານ ທີ່ມີຢູ່ໃນກຳມືຂອງຕົນ, ຄົນຈຳພວກນີ້ ໄດ້ກຳອະແໜງສຳຄັນ ຂອງເສດຖະກິດ, ກຳສິດຜູກຂາດ ທາງດ້ານຄ້າຂາຍຕ່າງປະເທດ, ມີຊີວິດເປັນຢູ່ ແບບຟຸມເຟືອຍ ແລະ ອີງໃສ່ການຊ່ວຍເຫຼືອ ຂອງອາເມລິກາ ເພື່ອສ້າງຄວາມຮັ່ງມີ ບົນເລືອດເນື້ອ ຂອງປະຊາຊົນລາວ.

ສະໂມສອນ ອະພິຊົນລາວ (ແຕ່ຕົ້ນຕໍ່ປະຈຸບັນນີ້ ແມ່ນຂຶ້ນກັບ ຈິ້ນຈຸ້ນນາຍທຶນຈ່າໜ່າຍ ອາຍາສິດ ອຸ່ນເສິກ ທີ່ໄດ້ກ່າວມາຂ້າງເທິງ, ໝາຍຄວາມວ່າ ບັນດາຜູ້ກົມສຳຄັນ, ບັນດານາຍພົນ ທີ່ປະຕິບັດໜ້າທີ່ ໃຫ້ອາເມລິກາ) ໄດ້ພາກັນເນົາບຳ ການສ້າງຫ້ອງຫຼິ້ນ "ໂບລິງ", ບໍລິຫານ ໂຮງຫຼິ້ນເບຍເຈຍໄພ້ ສູບຝິ່ນກິນຢາ ປຸກເຮືອນ ໃຫ້ອາເມລິກາເຊົ່າ, ດຳລົງຊີວິດສູງກາຍຂອບເຂດ ດ້ວຍສິນຄ້າ ວັນຟຸມເຟືອຍ ຂອງອາເມລິກາ ແລະ ດ້ວຍການ ສໍ້ລາດບັງຫຼວງ ( "ສົງຄາມຢູ່ອາຊີ" ຂອງ ນອມຈອມສະກີ ພິມຈຳໜ່າຍປີ ໑໙໗໑).

ເອກອັກຄະລາຊະທູດ ອາເມລິກາ ຊຸລີວັນ ໄດ້ເວົ້າແຈ້ງຕື່ມ ກ່ຽວກັບ ນາຍພົນ ນາຍພັນ ລາວດັ່ງນີ້: ພວກເຂົາຖືວ່າ ການຢູ່ໃນຖັນແຖວ ເປັນນາຍທະຫານລາວ ແມ່ນໂອກາດຂອງຕົນ ວັນໜຶ່ງ ເຊິ່ງກ່ອນອື່ນໝົດ ແມ່ນສ້າງຄວາມຮັ່ງມີ. ການເຄື່ອນໄຫວເພື່ອສ້າງຄວາມຮັ່ງມີນັ້ນ ລວມມີການລັກໂລບເອົາເງິນເດືອນ ຂອງພົນທະຫານ ທີ່ອາເມລິກາ ເປັນຜູ້ຈ່າຍໃຫ້, ການ[illegible], ໃຊ້ລົດທະຫານເຂົ້າໃນການ ຄ້າຂາຍສ່ວນຕົວ ກໍດີ ການປູກເຄື່ອງຂອງຕ່າງໆ ໃນສວນຂອງເຂົາ, ການກິນສິນບົນ, ການເກັບພາສີນຳພໍ່ຄ້າ ແລະ ເກັບຄ່າເຊົ່າດິນນາຈາກຊາວນາ.

ຊີວິດການເປັນຢູ່ແບບຟຸມເຟືອຍ ແລະ ສາຍເຫດພາໃຫ້ "ຮັ່ງມີ" ຂອງຈິ້ນຈຸ້ນ ນາຍທຶນຈ່າໜ່າຍ ອາຍາສິດ ອຸ່ນເສິກ ທີ່ອາເມລິກາໄດ້ສ້າງຂຶ້ນນັ້ນ ແມ່ນຕິດພັນກັບ ພາລະກິດ ລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ. ສະນັ້ນ ເຂົາຈຶ່ງໄດ້ອອກແຮງ ປົກປິດ ການຮຸກຮານ ຂອງອາເມລິກາ, ອອກແຮງຮັກສາລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ເພາະເລື່ອງນີ້ ມັນແມ່ນບ່ອນເກີດ ແຫຼ່ງເກີດ, ແມ່ນພື້ນຖານ ຂອງການຢືນຢົງຄົງຕົວຂອງເຂົາ. ພວກເຂົາເຮັດຕາມຄຳສັ່ງ ຂອງອາເມລິກາຢ່າງສຸດອົກສຸດໃຈ ນັບຕັ້ງແຕ່ການສ້າງລະບົບ ອຳນາດການປົກຄອງ ຂັ້ນສູນກາງ ລົງຮອດຂັ້ນຕາແສງ, ນັບຕັ້ງແຕ່ການສ້າງກອງທັບ ຈົນເຖິງການລົງມືປະຕິບັດສົງຄາມ ແລະ ເອົາດິນແດນສ່ວນໜຶ່ງ ຂອງປະເທດເຮົາ ເປັນຫົວເມືອງຂຶ້ນແບບໃໝ່ ຂອງອາເມລິກາ ເຊິ່ງຕິດລະບົບກັບໄທ, ເປັນແນວປ້ອງກັນ ເພື່ອຮັບໃຊ້ສົງຄາມ ຮຸກຮານ ຂອງອາເມລິກາ ຢູ່ອິນດູຈີນ.

ປະເທດໄທ ແມ່ນຖານທັບໃຫຍ່ ຂອງອາເມລິກາ ຢູ່ອາຊີ ອາຄະເນ ມີຊາຍແດນຕິດກັບລາວ ແຕ່ເໜືອ ຕະຫຼອດໃຕ້, ມີດິນແດນພາກສ່ວນໜຶ່ງ ທີ່ມີປະຊາກອນ ເຊື້ອຊາດລາວ ໒໐ ລ້ານຄົນ, ນັບແມ່ນແຜນປັນອັນໜຶ່ງ ທີ່ອຳ

ໄທວຄຮວງຂ້າງກັບ ເຈົ້າເມືອງ ເພື່ອນຳເອົາແຜນການ ຕ້ານກັບການລຸກຮືຂຶ້ນ ຍ້ອນເຫດຜົນການເມືອງຂອງລາວ" ເປັນ "ຜູ້ເກັບກຳເອົາຂ່າວທາງທະຫານ ໃຫ້ລັດຖະບານອາເມລິກາ" (ບັນແມ່ນ ເຈອີວາ).

ອາເມລິກາ ຍັງໄດ້ສ້າງຕັ້ງ "ເຂດກົບພະຍົບ" ຂຶ້ນ, ແທ້ຈິງ ມັນແມ່ນຄ້າຍເຕົ້າໂຮມ ແບບປ່ອນຕົວ ທີ່ພວກເຂົາ ຄິດໄດ້ກ່າວປະມານມານັ້ນ, ມັນແມ່ນໂທດກຳອັນໜຶ່ງທີ່ ອາເມລິກາ ແລະ ອຳນາດການປົກຄອງອຮວຈັນ ໄດ້ກໍ່ຂຶ້ນຕໍ່ປະຊາຊົນເຮົາ ແລະ ສົມຄວນ ທີ່ຈະຕ້ອງຖືກລົງໂທດ. ຢູ່ທີ່ນັ້ນ, ກໍ່ມີທັງ ປະຊາຊົນ ມາແຕ່ເຂດປົດປ່ອຍ ທີ່ຖືກອາເມລິກາ, ກອງທະຫານລູກມື ໃຊ້ລູກລະເບີດ, ປາຣກະບີ້, ຫຼື ຫຼອກລວງມາເຕົ້າໂຮມຢູ່ໃນເຂດຄວບຄຸມ ຂອງພວກເຂົາ. ການໄປມາຫາກິນ ຂອງປະຊາຊົນ ກໍ່ຖືກກວດກາ ຢ່າງເຂັ້ມງວດ, ປະຊາຊົນ ຕ້ອງຢູ່ກິນ ແບບອັດຕະຄັດ ອຶດສົນ ຢ່າງບໍ່ມີທາງອອກ. ເຂດພັດທະນາ ແລະ ເຂດກົບພະຍົບດັ່ງກ່າວນັ້ນ ລ້ວນແຕ່ແມ່ນ ບ່ອນອາເມລິກາ ແລະ ລູກມືກອບໂກຍເອົາ ຊັບສົມບັດ ແລະ ເຫື່ອແຮງ ຂອງປະຊາຊົນ ເພື່ອຮັບໃຊ້ ສົງຄາມຮຸກຮານ ຢູ່ປະເທດເຮົາໃຫ້ຍືດຍາວໄປ.

<u>ທາງດ້ານເສດຖະກິດ ແລະ ການເງິນ:</u> ໂດຍສອດຄ່ອງໃຊ້ນະໂຍບາຍ ຊ່ວຍເຫຼືອທາງດ້ານການຄ້າ, ອາເມລິກາ ໄດ້ທຸ່ມເທສິນຄ້າເຫຼືອຕະຫຼາດ ຂອງເຂົາເຂົ້າມາລາວ ເພື່ອທຳລາຍເສດຖະກິດການເງິນ ຂອງລາວ, ເຮັດໃຫ້ເສດຖະກິດການເງິນ ຂອງຝ່າຍອຮວຈັນ ຂຶ້ນກັບອາເມລິກາ ຢ່າງສິ້ນເຊີງ, ຖ້າບໍ່ມີເງິນໂດລາຊ່ວຍປະກັນ ເງິນກີບ ກໍ່ພຽງແຕ່ເປັນໃບເຈ້ຍລ້າໆ.

"ແຜນການຊ່ວຍເຫຼືອ ຂອງອາເມລິກາ ແມ່ນບໍ່ມີຈຸດປະສົງອື່ນໃດ ນອກຈາກທຳລາຍ ເສດຖະກິດແຫ່ງຊາດ ແລະ ປົກປັກຮັກສາ ສັງຄົມທີ່ມີແຕ່ ຈົນໃຈ ສິນຄ້າ ທີ່ມີຜົນປະໂຫຍດໃຫ້ແຕ່ ກຸ່ມເຈົ້າຂຸນມູນນາຍ, ທັງ ທີ່ມັນເຮັດໃຫ້ພວກເຂົາເຫຼົ່ານີ້ ເນົ່າເຫມັນ, ແຜນການຊ່ວຍເຫຼືອນັ້ນ ບໍ່ອາດຈະເລີ່ມ ສ້າງພື້ນຖານ ໃຫ້ແກ່ການອະຫຼາຍຕົວ ຫຼື ການສ້າງສາ ແບບທັນສະໄໝ ເພື່ອຮັບໃຊ້ ມວນຊົນລາວ ສ່ວນຫຼວງຫຼາຍ ຫຼື ສ້າງຕັ້ງສັງຄົມແຫ່ງການຜະລິດ" (ນອມ ຈອມສະກີ). ນັ້ນແມ່ນການຕີລາຄາແບບນອກຕົວ ຂອງຄົນອາເມລິກາຜູ້ໜຶ່ງ.

" ການອະຫຼາຍເສດຖະກິດ, ໃນຕົວຈິງແມ່ນບໍ່ມີຫຍັງ ແລະ ທຸກຄວາມພະຍາຍາມ ຂອງອາເມລິກາ ເພື່ອໃຫ້ລະບອບຂວາຈັດ ທີ່ນິຍົມຕາເວັນຕົກ ມີຄວາມຫຸ່ນຫ່ຽວ ໝັ້ນຄົງ ດ້ວຍອັດທີປະກອບສິນຄ້າ ໃຫ້ຢ່າງບໍລິບູນ ໂດຍຜ່ານໂຄງການຊ່ວຍເຫຼືອນັ້ນ ມີແຕ່ຈະພາໄປເຖິງບ່ອນ ເປື່ອຍເຍື່ອຍ ເນົ່າເຫມັນ ເຮັດໃຫ້ເງິນເຟີ້ ແລະ ການກອບໂກຍເອົາຊັບສິນ ຢູ່ໃນປະເທດ ທະວີຂຶ້ນ.

(ເກດບູຈານານ) ( Keith Buchanan ). ນັກແມ່ນຄວາມສັງເກດສ່ວນຕົວ ຂອງຄົນອາເມລິກາ ຜູ້ໜຶ່ງອີກ.

ໃນຕົວຈິງແລ້ວ ການຊ່ວຍເຫຼືອທາງດ້ານສິນຄ້າ ໄດ້ເຮັດໃຫ້ ຂະແໜງ ອຸດສາຫະກຳພື້ນເມືອງຕ່າງໆ ຂອງປະຊາຊົນເຮົາ ທີ່ມີມາ ແຕ່ບູຮານນະການ ຖືກເຕີຍມອດ, ເສດຖະກິດ ທາກຸ່ມຕົນເອງ ຂອງລາວ ຖືກທຳລາຍ ຈົນເຖິງກົກເຖິງຮາກ ແລະ ໃຫ້ກຳເນີດຊົນຊັ້ນນາຍທຶນຈຳໜ່າຍ ທີ່ມີອຳນາດ ໃນກຳມື ເພື່ອເປັນລູກມື ຮັບໃຊ້ຜົນປະໂຫຍດ ຂອງອາເມລິກາ. ຊົນຊັ້ນນາຍທຶນຈຳໜ່າຍນັ້ນ ເກາະຫຍຸ້ງກັບ ອາເມລິກາ, ຮັ່ງມີເຕັມຂີດ, ເຕີບຕ່າງ ອອກຈາກຊັ້ນຄົນຕ່າງໆ ໃນສັງຄົມລາວ. ເພາະສະນັ້ນ ຊົນຊັ້ນພວກນີ້ ໄດ້ຮວດອ້າງ ຄວາມເປັນ ເອກະລາດ ແບບປອມແປງ ຂອງພວກເຂົາ ຢ່າງບໍ່ເຫື່ອດສົບເຫື່ອດປາກ ເພື່ອຫຼອກລວງ ປະຊາຊົນເຮົາ.

ຄຽງຄູ່ກັບ ການຊ່ວຍເຫຼືອທາງດ້ານສິນຄ້າ, ໃນເຂດທີ່ຝ່າຍອຮວຈັນຄວບຄຸມ ເຖິງວ່າມີ ໂຮງງານຈຳນວນໜຶ່ງທີ່ມີລັກສະນະ "ເຮັດເພື່ອງໃຈ" ກໍ່ຕາມ, ແຕ່ພາກສ່ວນໃຫຍ່ ກໍ່ແມ່ນຮັບໃຊ້ ຊີວິດການເປັນຢູ່ ແບບຟຸມເຟືອຍ ຂອງກົງຈັກປົກຄອງ ແລະ ກອງທະຫານລູກມື ຮັບໃຊ້ອາເມລິກາ. ມັນບໍ່ໄດ້ຮັບໃຊ້ຫຍັງ ໃຫ້ແກ່ການຜະລິດ ແລະ ຊີວິດການເປັນຢູ່

ຂອງ ປະຊາຊົນເຮົາ.

ຈາກການຊ່ວຍເຫຼືອທາງດ້ານສິນຄ້າ, ອາເມລິກາ ໄດ້ສ້າງຄວາມນິຍົມ ໃຫ້ລູກມື ແລ່ນຫາການຫາກຳໄລ ໃນສິນຄ້າ, ບູຊາເງິນໂດລາ ອາເມລິກາເປັນພະເຈົ້າ ຣ່ຳຣວຍ ເອົາແບບຢູ່ກິນຟູມເຟືອຍ ແລະ ເຈື່ອນໂຊມ. ຈາກນັ້ນ ເຮັດໃຫ້ຈິດໃຈ ພົວພັນ ລະຫວ່າງ ພໍ່ກັບລູກ, ຜົວກັບເມຍ, ອ້າຍກັບນ້ອງ ແລະ ເພື່ອນມິດຂອງຊົນຊັ້ນ ເຫຼົ່ານີ້ ກາຍເປັນການພົວພັນກັນ ດ້ວຍເງິນຄຳ, ອັນນີ້ ແມ່ນພື້ນຖານ ທີ່ພວກທ່ານ ອ້າງຕົວວ່າ ເປັນປະເພດຄົນທີ່ມີການສຶກສາ, ມີວັດທະນະທຳ ແລະ ອື່ນໆ.

<u>ທາງດ້ານວັດທະນະທຳ</u>: ຍ້ອນນະໂຍບາຍ ວັດທະນະທຳອັນເຈື່ອນໂຊມ, ມັນໄດ້ສ້າງການຢູ່ກິນແບບ ຟູມເຟືອຍ ຕາມທຳນອງຂອງອາເມລິກາ.

ພີ່ນ້ອງປະຊາຊົນເຮົາ ຫຼາຍຄົນໄດ້ກາຍເປັນ ແມ່ຈ້າງ ນາງເລວ, ໂກໂບຍ, ນັກປຸ້ນ, ນັກຈີ້. ເລື່ອງນີ້ ພວກທ່ານກໍ່ອາດຮູ້ດີ ກວ່າຜູ້ໃດໝົດ, ແຕ່ພວກທ່ານ ຈະຮູ້ສຶກເຈັບແສບຫຼືບໍ່ ? ຫຼືພວກທ່ານຈະອອກອ້າງວ່າ ອັນນັ້ນແມ່ນ ຊົນຊັ້ນທີ່ໄດ້ຮັບການສຶກສາ, ມີວັດທະນະທຳ ແລະ ອື່ນໆ... ຈັ່ງບໍ ? ອັນນັ້ນ, ມັນຈະແຈ້ງແລ້ວວ່າ, ເມື່ອກ່ອນນີ້ ຊາດເຮົາຍັງບໍ່ເຄີຍມີ. ເລກົນ ຂອງຈັກກະພັດອາເມລິກາ ໄດ້ຍຸຍົງສົ່ງເສີມ ວິທີຢູ່ກິນແບບນັ້ນ ມັນບໍ່ແມ່ນເລື່ອງທຳມະດາ, ພວກເຂົາມີກົນອຸບາຍ ດັບມອດຈິດໃຈຊາດ ແລະ ນ້ຳໃຈຮັກຊາດ ຂອງປະຊາຊົນເຮົາ.

ໃນຝ່າຍພວກທ່ານ ມີຫຼາຍຄົນໄດ້ສ້າງ "ກາສິໂນ", "ໂຮງແມ່ຈ້າງ ໂຮງເຕັ້ນລຳ" ໂດຍຫຼິ້ນທຸກແບບ ຂອງອາເມລິກາ ເພື່ອສ້າງຄວາມຮັ່ງມີ ແລະ ຈູງໃຈຊາວໜຸ່ມ ຍິງຊາຍຕົກເຂົ້າໃນບ່ອນຂີ້ຕົມ ອັນເຈື່ອນໂຊມນີ້. ນັ້ນແມ່ນພາລະກິດ ອັນສະຫງ່າງາມ ຂອງພວກທ່ານ ທີ່ພວກທ່ານເຄີຍອວດອ້າງ ຢ່າງບໍ່ເຕືອດສົບເຕືອດປາກ.

ໃນເວລາທີ່ ເດັກນ້ອຍຂອງຈຳນວນເຄິ່ງກັນທັງໝົດ ບໍ່ໄດ້ເຂົ້າໂຮງຮຽນນັ້ນ, ໂຮງຮຽນຊັ້ນກາງທັງຫຼາຍກັບ ອຳນາດການປົກຄອງ ວຽງຈັນ, ເອົາທົ່ວໄປແລ້ວ ສອນໃຫ້ ແມ່ນສ້າງຊົນຊັ້ນ ຮຸ່ນໃໝ່, ເພື່ອຮັບໃຊ້ການເຮັດໃຫ້ ປະເທດເຮົາກາຍເປັນເມືອງຂຶ້ນ ແລະ ເຮັດໃຫ້ປະຊາຊົນເຮົາ ເປັນຂ້ອຂ້າ ຕາມແຜນການ ຂອງອາເມລິກາເທົ່ານັ້ນ. ບາລັນມານ ( Branfmann ) ອາດີດ ພະນັກງານ ຂອງອົງການອາສາສະໝັກ ສາກົນ ອີເວແອດ (IVS ) ປະຈຳລາວ ກໍ່ໄດ້ສະຫຼຸບວ່າ: "ລະບົບການສຶກສາ ໄດ້ສ້າງຊົນຊັ້ນໜຶ່ງນັ້ນກົມ ບໍ່ແມ່ນຄົນຜະລິດ ວັດຖຸສິ່ງຂອງ, ມັນໄດ້ສ້າງ "ກຸ່ມຄົນຊັ້ນເທິງ" ທີ່ກາຍເປັນຄົນຕາເວັນຕົກ ເພື່ອຄວບຄຸມສັງຄົມລາວ ໃຫ້ມີຜົນແກ່ເຂົາເອງ ແລະ ແກ່ອາເມລິກາ ຜູ້ເປັນນາຍ".

ຮ້າຍແຮງໄປກວ່ານັ້ນ, ຄຳສັ່ງສອນ ຂອງພະພຸດທະເຈົ້າ ກໍ່ຖືກບິດເບືອນ, ບົດທຳມະເທສະໜາ ກໍ່ໄດ້ຖືກດັດແປງ ແລະ ໄດ້ພິມຢູ່ໄທແລ້ວ ສົ່ງມາລາວ ເພື່ອເຜີຍແຜ່ໃຫ້ເໝາະກັບ ຄວາມຕ້ອງການ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ແລະ ປະອັນໃດ ທີ່ມີລັກສະນະປຸກລຸກນ້ຳໃຈຮັກຊາດ ແລະ ສົນທຳ ຂອງປະຊາຊົນເຮົາ.

ສະຫຼຸບແລ້ວວ່າ ນະໂຍບາຍວັດທະນະທຳ ລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ແມ່ນ ການທຳລາຍຈິດໃຈອັນສົດໃສ ແລະ ປະເພນີ ອັນດີງາມ ຂອງປະຊາຊົນເຮົາ ຈົນເຖິງກົກເຖິງຮາກ.

ສົງຄາມຮຸກຮານລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ໄດ້ບຸກຕີເຂົ້າໃນໝູ່ປະຊາຊົນເຮົາ ໃນທຸກດ້ານ, ເຊິ່ງບໍ່ພຽງແຕ່ຕອບສະໜອງ ຄວາມຕ້ອງການສະເພາະໜ້າ ທີ່ບຸກຕີເຂົ້າ ບັນດາກຳລັງຮັກຊາດ, ຕ້ານກັບຈິດໃຈຊາດ ຂອງປະຊາຊົນເຮົາ, ແຕ່ມັນຍັງບຸກຍຶດເອົາ ປະເທດເຮົາຢ່າງຍາວນານ, ເຮັດໃຫ້ປະເທດເຮົາ ເປັນເມືອງຂຶ້ນແບບໃໝ່ ແລະ ຖານທັບອັນຍາວນານ ຂອງພວກເຂົາ. ສິ່ງເຫຼົ່ານີ້ ມັນແມ່ນທາດແທ້ ຂອງອັນທີ່ພວກທ່ານອວດອ້າງວ່າ ເອກະລາດ,

ອະທິປະໄຕ ຫຼືບໍ່ ? ແລະ ນີ້ນັ້ນກໍ່ເປັນການເພີ່ມແບ ການໃສ່ຮ້າຍຕູ່ຫາ ຂອງພວກທ່ານຕໍ່ ປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ແລະ ແນວລາວຮັກຊາດ.

ຫວຽດນາມກໍດີ ລາວ ແລະ ກຳພູຊາ ລ້ວນແຕ່ໄດ້ຖືກອາເມລິກາຣຸກຣານ, ທົ່ວໂລກກໍໄດ້ຄັດຄ້ານກ່າວປະນາມ ການຣຸກຣານດັ່ງກ່າວ. ຫວຽດນາມ ໄດ້ຕີໃຫ້ທະຫານສົ່ງນອກ ຂອງອາເມລິກາ ກວ່າເຄິ່ງລ້ານຄົນ ປະລາໄຊລົງ ແລະ ໃນມໍ່ໆມານີ້ ໄດ້ທັບມ້າງການບຸກໂຈມຕີຍຸດທະສາດ ດ້ວຍກອງທັບອາກາດ ລະດັບສູງສຸດ ຂອງສົງຄາມ "ຂອງຄົນອາເມລິກາຄົນໃໝ່". ປະຊາຊົນໃນທົ່ວໂລກ ພວມຍ້ອງຍໍ ລັດທິຮັກຊາດ ແລະ ລັດທິວິລະຊົນ ຂອງ ຫວຽດນາມ ແລະ ຖືຫວຽດນາມເປັນແບບຢ່າງ ແຕ່ ຄວາມເປັນທຳ ຊະນະການໃຊ້ກຳລັງ ກົດຂີ່, ຄວາມສີວິໄລ ຊະນະຄວາມໂຫດຮ້າຍ ປ່າເຖື່ອນ, ຫວຽດນາມ ແມ່ນບ່ອນແນວໜ້າ ໃນການຕ້ານການຣຸກຣານ ຂອງອາເມລິກາຢູ່ໃນໂລກ ກໍດີ ຢູ່ໃນແຫຼມອິນດູຈີນ.

ໄປພ້ອມໆກັນກັບການຣຸກຣານ ຂອງອາເມລິກາຢູ່ລາວ, ນັບແຕ່ປີ ໑໙໖໐ ມາ ອາເມລິກາໄດ້ຊຸກຍູ້ສົງຄາມພາກສ່ວນຢູ່ຫວຽດນາມ ແລະ ຂະຫຍາຍສົງຄາມນັ້ນ ລາມອອກໄປສູ່ກຳພູຊາໃນປີ ໑໙໗໐, ເຮັດໃຫ້ອິນດູຈີນ ເປັນສະໜາມຮົບອັນດຽວ. ມັນເປັນອັນຈະແຈ້ງວ່າ ພວກຣຸກຣານ ໄດ້ໃຊ້ປະເທດນີ້ ເປັນແປ້ນຢັ້ນ ເພື່ອ ບຸກໂຈມຕີປະເທດນັ້ນ ແລະ ໄດ້ປະຕິບັດນະໂຍບາຍແບ່ງແຍກ ເພື່ອປົກຄອງ ທີ່ພວກເຂົາເຄີຍໄດ້ປະຕິບັດມາ ແຕ່ຢ່າງກ່ອນ, ປະຊາຊົນສາມຊາດ ອິນດູຈີນ ຮັບຮູ້ຢ່າງເລິກເຊິ່ງວ່າ ຊາຕາກຳ ຂອງສາມປະເທດ ໄດ້ມີການພົວພັນ ເຊິ່ງກັນ ແລະ ກັນ ຢ່າງສະໜິດແໜ້ນ. ໃນເມື່ອດິນແດນຂອງປະເທດໃດ ປະເທດໜຶ່ງຢູ່ໃນອິນດູຈີນ ຫາກຍັງຖືກຈັກກະພັດຣຸກຣານແລ້ວ ບໍ່ມີປະເທດໃດໃນທີ່ນັ້ນຈະຢູ່ເປັນ ເປັນສຸກ ໃນເອກະລາດ ແລະ ເສລີພາບໄດ້.

ຍ້ອນອາເມລິກາປ່ອງບ້າ ຂະຫຍາຍສົງຄາມຣຸກຣານ ໃນສາມປະເທດ, ກອງປະຊຸມຂັ້ນສຸດຍອດ ຂອງປະຊາຊົນສາມປະເທດອິນດູຈີນ ຈຶ່ງໄດ້ໄຂຂຶ້ນ ເມື່ອວັນທີ່ ໒໔-໒໕/໔/໗໐, ຕາມຫົວຄິດປະດິດສ້າງ ຂອງເຈົ້າຟ້າ ໂນໂລດົມ ສີຫານຸ, ແລະ ໄດ້ວາງໂຄງການຕ້ານອາເມລິກາ ແລະ ຫຼັກການຕ່າງໆ ອັນເປັນແບບຢ່າງ ໃນການພົວພັນ ລະຫວ່າງສາມປະເທດ. "ເລື່ອງປ້ອງກັນ ແລະ ປົດປ່ອຍປະເທດຊາດ ແມ່ນພາລະກິດ ຂອງແຕ່ລະປະເທດ, ແຕ່ລະຝ່າຍ ໃຫ້ຄຳໝັ້ນສັນຍາ ຈະສະໜັບສະໜູນກັນ ຢ່າງສຸດອົກສຸດໃຈ. ແຕ່ລະຝ່າຍ ປະກາດຈະຕັດສິນໃຈ ຂະຫຍາຍນ້ຳໃຈມິດຕະພາບ ຖານອ້າຍນ້ອງ ແລະ ການພົວພັນ ແບບບ້ານໃກ້ເຮືອນຄຽງ ລະຫວ່າງ ສາມປະເທດ ຢ່າງດີງາມ ໃນເວລາທີ່ພວມສະໜັບສະໜູນ ເຊິ່ງກັນ ແລະ ກັນ ໃນການຕໍ່ສູ້ ຕ້ານສັດຕູຮ່ວມ ກໍດີ ໃນເວລາຕໍ່ໄປ ໃນການຮ່ວມໄມ້ຮ່ວມມື ແບບຍາວນານ ເພື່ອກໍ່ສ້າງປະເທດໃໝ່ນັ້ນ ຕາມເສັ້ນທາງ ສະເພາະຂອງຕົນ". ນີ້ແມ່ນ ຄວາມຮຽກຮ້ອງ ອັນຖືກຕ້ອງເປັນທຳ ຂອງປະຊາຊົນສາມຊາດ ອິນດູຈີນ ແລະ ໄດ້ຮັບການສະໜັບສະໜູນ ຈາກປະຊາຊົນໃນໂລກ. ມີແຕ່ພວກທີ່ຍອມເປັນຂ້ອຍຂ້າ ຂອງຈັກກະພັດເທົ່ານັ້ນແລ້ວ ທີ່ບໍ່ເຫັນດີ ແລະ ຕ້ານກັບ ກ້ອນສາມັກຄີ ຂອງປະຊາຊົນສາມປະເທດ ໃນອິນດູຈີນ.

ຄວາມສາມັກຄີ ແລະ ການປະສານສູ້ຮົບ ລະຫວ່າງປະຊາຊົນສາມປະເທດ ແມ່ນໜຶ່ງໃນ ຫຼາຍປັດໃຈ ທີ່ຮັບປະກັນ ໄຊຊະນະ ຂອງແຕ່ລະປະເທດ ແລະ ກໍຍ້ອນແນວນັ້ນ ອິດທິພົນຂອງການຕໍ່ສູ້ ຕ້ານອາເມລິກາຢູ່ໃນ ສາມປະເທດອິນດູຈີນ ຈຶ່ງໄດ້ນັບມື້ນັບຖືກຍົກສູງຂຶ້ນ ໃນເວທີສາກົນ. ດ້ວຍເຫດນັ້ນ ອາເມລິກາຈຶ່ງຢ້ານກົວ ກ້ອນສາມັກຄີ ຂອງປະຊາຊົນສາມຊາດ. ນັ້ນແມ່ນກຳລັງແຮງ ຕີ້ເຂົ້າ "ທິດສະດີ ນິກເຊັນ" ທີ່ໃຊ້ຄົນອິນດູຈີນ ຕີຄົນອິນດູຈີນ, ໃຊ້ຄົນອາຊີຕີຄົນອາຊີ, ຢ່າງເຖິງກົກເຖິງຮາກ, ແຕ່ພວກທ່ານຊ້ຳຍັງຈູ່ຈີບຄັດຄ້ານ ກ້ອນສາມັກຄີນີ້ ແລະ ໃສ່ຮ້າຍປ້າຍສີ ແນວລາວຮັກຊາດ. ນີ້

ແມ່ນຫຼັກຖານຕົວຈິງ ອີກອັນໜຶ່ງທີ່ຢືນຢັນວ່າ ອຳນາດການປົກຄອງຂອງຮົວຈັນ ຍັງດ້ານ ຮັບໃຊ້ນະໂຍບາຍຮຸກຮານ ຕາມທິດສະດີ ນິກສົນ ຂອງອາເມລິກາ. ການທີ່ພວກທ່ານໃຊ້ຖະໜົນທຳນອງ ໂດຍສະມາ ໃສ່ອາຮົກອນສານັກຄີ ດັ່ງກ່າວ ລ້ວນແຕ່ຈະເສຍແຮງລ້າໆ.

ພວກທ່ານ ຄວນທົບທວນຄືນມາຫາ ສິ່ງທີ່ຖືກຕ້ອງ, ມາຫາຫຼັກສັນທຳ ຂອງພະພຸດທະສາສະໜາ, ບໍ່ຄວນປະໃຫ້ພວກອາເມລິກາຜູ້ຮຸກຮານ ຄອບງຳຕົນ ຢູ່ຊູ່ຍາມ. ປະເທດ ອິດສະຕາລີ, ແລະ ນິວຊີແລນ ທີ່ເຄີຍສົ່ງເອົາທະຫານເຂົ້າມາຮ່ວມຮົບ ຢູ່ຫວຽດນາມ ກໍໄດ້ຖອນໝົດ, ຄືດັ່ງ ອາເມລິກາ ຫ້ອງຕ້ານກັບການຮຸກຮານ ຂອງອາເມລິກາຄືນ. ພວກທ່ານເປັນຄົນລາວ, ເປັນຫຍັງຈຶ່ງປົກປິດໂທດກຳ ຂອງອາເມລິກາຢູ່ເລື້ອຍມາ ? ພວກທ່ານຄວນນັບຖືຄວາມຈິງ ... ຕອບສະໜອງ ວິທີການແກ້ 2 ຂໍ້ ຂອງຝ່າຍຮັກຊາດ ຂອງຄະນະປະຊຸມ ຍັບດາກກຳລັງຮັກຊາດ ຢ່າງເໝາະສົມ ເພື່ອແກ້ໄຂບັນຫາລາວ ໂດຍສັນຕິ ຕາມຄວາມຄາດຫວັງຂອງປະຊາຊົນເຮົາ.

ນະໂຍບາຍແຊກແຊງຮຸກຮານ ແລະ ລັດທິອານານິຄົມແບບໃໝ່ ຂອງຈັກກະພັດອາເມລິກາ ຢູ່ໃນປະເທດເຮົາ ຈະຕ້ອງໄດ້ຖືກລົບລ້າງຢ່າງສິ້ນເຊີງ ປະເທດເຮົາຈຶ່ງຈະມີ ເອກະລາດ, ອະທິປະໄຕ ແລະ ຄວາມເປັນກາງຢ່າງແທ້ຈິງ ໂດຍມີການຮັບປະກັນ, ຄວາມປາດຖະໜາ ຂອງ ປະຊາຊົນເຮົາ ຈຶ່ງຈະນັບພົນຖານ ປະຕິບັດ ຢ່າງໄດ້ຮັບຜົນໄພແດ່ລະກາວ.

---

15e séance
23.1.73

# ບົດປະກອບຄຳເຫັນ

ຂອງ ທ່ານ ເຈົ້າສຸກ ວົງສັກ, ຮອງຫົວໜ້າຄະນະ, ຜູ້ອຳນວຍການແທນ ຫົວໜ້າຄະນະຜູ້ແທນ
ບັນດາກຳລັງຮັກຊາດ, ກ່າວໃນວາລະປະຊຸມ ເທື່ອທີ ໑໔ ໃນວັນທີ່ ໒໓/໑/໑໙໗໓.

---

ທ່ານທັງຫຼາຍ,

ນັບແຕ່ກອງປະຊຸມ ໄດ້ເລີ່ມເປີດຂຶ້ນ ມາຮອດດຽວນີ້, ພວກທ່ານໄດ້ຫາທຸກວິທີ ເພື່ອປົກປິດ ການແຊກແຊງ, ຮຸກຮານ ແລະ ການຕິດພັນ ທາງການທະຫານ ຂອງອາເມລິກາ ຢູ່ປະເທດເຮົາ. ພວກທ່ານບໍ່ເອົາຫົວຈາຕໍ່ ຄວາມຈິງ ເຊິ່ງກ່ອນໜ້ານີ້ເກືອບ ສີ ປີ ກະໄດ ນິກຊັນ ຜູ້ເປັນ ປະທານາທິບໍດີ ອາເມລິກາ ກໍຈຳເປັນ ຕ້ອງຮັບສາລະພາບ ຢ່າງ ເປີດເຜີຍມາແລ້ວ.

ພວກທ່ານ ຄວນຈື່ຈຳໄດ້ວ່າ ວັນທີ່ ໖/໓/໗໐, ໃນຄຳປະກາດ ເປັນທາງການ ເທື່ອທຳອິດ ກ່ຽວກັບ ສະພາບການຢູ່ລາວ, ນິກຊັນ ໄດ້ເປີດເຜີຍວ່າ ອາເມລິກາ ໄດ້ມີທະຫານ, ທີ່ປຶກສາທະຫານ, ຜູ້ອົບຮົມ ການທະຫານ ແລະ ພະນັກງານ ພະລາທິການ ຢູ່ລາວເປັນຈຳນວນ ໑.໐໐໐ ກວ່າຄົນ. ອາເມລິກາໄດ້ "ຊຸມກັນ ຊ່ວຍເຫຼືອ ແລະ ພວມຊຸມກັນ ຊ່ວຍເຫຼືອທາງດ້ານ ພະລາທິການ ແລະ ດ້ານອື່ນໆອີກ" ໃຫ້ແກ່ລາວ, ໄດ້ໃຊ້ ແລະ ພວມ "ໃຊ້ພະລັງ ແຮງ ຂອງ ກອງທັບອາກາດ", ໄດ້ດຳເນີນ ແລະ ພວມດຳເນີນ "ການບິນຄຸ້ມກັນສູ້ຮົບ" ແລະ "ການເຄື່ອນໄຫວຕ່າງໆ" ຢູ່ລາວ.

ເຖິງວ່າ ຈະສໍ້ໂກງ ປິດອຳ ແລະ ບິດຫ່າງໄກຈາກຄວາມຈິງກໍຕາມ, ແຕ່ອັນນັ້ນກໍແມ່ນ ຄຳປະກາດ ເທື່ອທຳອິດ ຂອງ ຜູ້ກຳອຳນາດສູງສຸດ ຂອງອາເມລິກາ ເຊິ່ງໄດ້ກ່າວເຖິງ ການຕິດພັນ ທາງທະຫານ ຂອງອາເມລິກາ ຢ່າງ ເປີດເຜີຍ ແລະ ເປັນທາງການ. ນັ້ນກໍແມ່ນເປັນການ ຮັບສາລະພາບວ່າ ໃນພາກຕົວຈິງແລ້ວ ອາເມລິກາໄດ້ ລະເມີດ ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ. ໃນຄາວນັ້ນ, ຜູ້ແທນສະພາສູງ ອາເມລິກາ ຜູ້ໜຶ່ງ ໄດ້ຂຽນອອກໃນທັນທີວ່າ "ຕາມ ຄວາມເປັນຈິງ, ທ່ານ ນິກຊັນ ໄດ້ກ່າວວ່າ ພວກເຮົາ (ໝາຍເຖິງ ອາເມລິກາ) ໄດ້ລະເມີດ ສັນຍາເຈນີວ, ທ່ານ ນິກຊັນ ໄດ້ປະກາດວ່າ ນະໂຍບາຍຕໍ່ລາວ ຂອງອຳນາດການປົກຄອງ ໃນປະຈຸບັນນີ້ ແມ່ນສືບຕໍ່ປະຕິບັດ ຈຸດປະສົງ ແລະ ການກະທຳ ຂອງ ອຳນາດການປົກຄອງ ຊຸດກ່ອນໆນີ້". ຄຳກ່າວອ້າງດັ່ງກ່າວ ຂອງ ນິກຊັນ ແມ່ນແນໃສ່ ຖິ້ມຄວາມຮັບຜິດຊອບ ໃຫ້ແກ່ຜູ້ທີ່ ກຳອຳນາດກ່ອນເຂົາ, ແຕ່ພ້ອມກັນນັ້ນ ກໍຢັ້ງຢືນວ່າ ນະໂຍບາຍ ຂອງ ອາເມລິກາ ຕໍ່ລາວ ແຕ່ກ່ອນ ມາຮອດດຽວນີ້ ແມ່ນ ບໍ່ມີຫຍັງປ່ຽນແປງ.

ເມື່ອເປັນເຊັ່ນນັ້ນແລ້ວ, ຈຸດປະສົງ ແລະ ການກະທຳ ຂອງຜູ້ກຳອຳນາດກ່ອນ ນິກຊັນ ແມ່ນຫຍັງແທ້ ? ແລະ ນິກຊັນໄດ້ສືບຕໍ່ ຈຸດປະສົງ ແລະ ການກະທຳ ດັ່ງກ່າວນັ້ນແນວໃດ ? ມັນແມ່ນຈຸດປະສົງ ແລະ ການກະທຳຂອງ ຜູ້ທີ່ກຳອຳນາດກ່ອນ ນິກຊັນ ກໍຄື ຂອງ ນິກຊັນນັ້ນເອງ. ຈຸດປະສົງ ແລະ ການກະທຳນັ້ນ ໄດ້ຕັ້ງຢູ່ໃນ ຂອບເຂດ ໝື່ນ ທີ່ປຶກສາ ແລະ ພະນັກງານ ທະຫານ ຂອງອາເມລິກາ ໑.໐໐໐ ກວ່າຄົນ, ໃນບັນດາ "ການຊ່ວຍເຫຼືອທາງດ້ານ ພະລາທິການ ແລະ ຂອງ ກອງທັບອາກາດ", ແລະ ໃນ "ການເຄື່ອນໄຫວຕ່າງໆ" ດັ່ງທີ່ ນິກຊັນ ຈຳຕ້ອງຮັບສາລະພາບນັ້ນ ຫຼືບໍ່ ?.

ຜູ້ຄົນທົ່ວໂລກ ລ້ວນແຕ່ໄດ້ຮູ້ວ່າ ໃນສະໄໝ ອາຍເຊັນຮາວ, ລັດຖະມົນຕີ ກະຊວງຕ່າງປະເທດ ອາເມລິກາ ດາແລດ ໄດ້ປະກາດວ່າ "ຈຳເປັນຕ້ອງເອົາລາວ ເປັນກຳແພງ ຕ້ານກອມມູນິດ ແລະ ເປັນປ້ອມປືນແຫ່ງໜຶ່ງ ຂອງໂລກເສລີ". ໃນປີ ໑໙໖໑, ປະທານາທິບໍດີ ໂຢນເຊີນ ກໍ່ໄດ້ປະກາດວ່າ "ປະເທດລາວ ເປັນທີ່ຕັ້ງສຳຄັນ ໃນລະບົບປ້ອງກັນ ຂອງພວກເຮົາ" (ໝາຍເຖິງ ອາເມລິກາ) ແລະ ມາເຖິງ ສະໄໝ ນິກເຊີນ ເຂົາກໍ່ໄດ້ປະກາດວ່າ "ຈຸດປະສົງຂອງພວກເຮົາ ແມ່ນຈະອ່ອນລັດຖະບານລາວ ກີດກັ້ນການ ບາບຂູ ຂອງ ກຳລັງກອມມູນິດ". ມັນເປັນອັນຈະແຈ້ງແລ້ວວ່າ, ຜ່ານສະໄໝ ປະທານາທິບໍດີ ອາເມລິກາ ໔ ຊຸດ, ພາຍໃຕ້ປ້າຍ "ຕ້ານກອມມູນິດ", ອາເມລິກາບໍ່ໄດ້ ລົດລະໃນການສືບຕໍ່ ນະໂຍບາຍແຊກແຊງ ແລະ ຮຸກຮານປະເທດເຮົາ ຫວັງຈະ ເອົາປະເທດເຮົາ ເປັນເມືອງຂຶ້ນ ແບບໃໝ່ ແລະ ຖານທັບ ຂອງພວກເຂົາ ດັ່ງທີ່ພວກຂ້າພະເຈົ້າ ໄດ້ຊີ້ແຈງມາ ຫຼາຍເທື່ອແລ້ວ ພິເສດ ແມ່ນໃນວາລະປະຊຸມ ຄັ້ງທີ ໑໔ ແລ້ວນີ້ ພວກຂ້າພະເຈົ້າ ໄດ້ໃຈແຍກ ຢ່າງຈະແຈ້ງ ແລະ ເປັນລະບົບວ່າ ການແຊກແຊງ ແລະ ຮຸກຮານ ຂອງ ອາເມລິກາ ຢູ່ປະເທດເຮົາ ແມ່ນຮອບດ້ານຄື: ການເມືອງ, ການທະຫານ, ເສດຖະກິດ, ວັດທະນະທຳ, ແຕ່ຕົ້ນຕໍ່ ແມ່ນໃຊ້ວິທີການ ທາງການທະຫານ ພາຍໃຕ້ຮູບ "ສົງຄາມພິເສດ" ແນໃສ່ດັບສູນ ບັນດາກຳລັງຮັກຊາດ, ປາບປາມຂະບວນການຕໍ່ສູ້ ເພື່ອເອກະລາດແຫ່ງຊາດ ຂອງປະຊາຊົນເຮົາ, ປົກຄອງ ປະຊາຊົນເຮົາ ດ້ວຍນະໂຍບາຍ ລ່າເມືອງຂຶ້ນແບບໃໝ່.

ຜ່ານສະໄໝ ປະທານາທິບໍດີ ອາເມລິກາ ໔ ຊຸດ, "ສົງຄາມພິເສດ" ເຊິ່ງເປັນຮູບການອັນ ຮຸນແຮງ ຂອງລັດທິລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ຢູ່ລາວເຮົາ ໄດ້ຂະຫຍາຍຕົວເຖິງ ລະດັບສູງ ແລະ ມີຈຸດພິເສດ ຕ່າງໆ ດັ່ງລຸ່ມນີ້:

໑/- "ສົງຄາມພິເສດ" ຂອງອາເມລິກາ ຢູ່ປະເທດເຮົາ ແມ່ນສົງຄາມຮຸກຮານ ລ່າເມືອງຂຶ້ນແບບໃໝ່, ມັນໄດ້ໃຊ້ອຳນາດການປົກຄອງ ລູກມື ແລະ ກອງທະຫານລູກມື ເປັນບ່ອນອີງ ແລະ ເປັນເຄື່ອງມືຕົ້ນຕໍ.

ໃນໄລຍະເວລາ ເກືອບ ໒໐ ປີທີ່ຜ່ານມາ, ອາເມລິກາ ໄດ້ສ້າງຕັ້ງ ອຳນາດການປົກຄອງ ນິຍົມອາເມລິກາ ຫຼາຍຊຸດຂຶ້ນ ຢູ່ປະເທດເຮົາ ແລະ ໄດ້ໃຊ້ ກຳລັງປະກອບອາວຸດ ຂອງອຳນາດການປົກຄອງດັ່ງກ່າວ ພາຍໃຕ້ເຄື່ອງໝາຍ "ກອງທັບແຫ່ງຊາດ" ທີ່ໄດ້ຮັບການລ້ຽງດູ ແລະ ຊ່ວຍເຫຼືອ ຈາກອາເມລິກາ ເພື່ອດຳເນີນສົງຄາມ ລ່າເມືອງຂຶ້ນແບບໃໝ່ ຢູ່ປະເທດເຮົາ.

ພາຍຫຼັງ ສົນທິສັນຍາເຈນີວປີ ໑໙໕໔, ອາເມລິກາ ໄດ້ປັດເຂ່ຍຝະລັ່ງອອກໄປ ແຕ່ລະກ້າວແລ້ວລອງເຂົ້າປະເທດເຮົາ, ໄດ້ສ້າງອຳນາດການປົກຄອງ ກະຕ່າຍ ທີ່ນິຍົມອາເມລິກາຂຶ້ນ. ໂດຍປະຕິບັດຕາມຄຳສັ່ງ ຂອງອາເມລິກາ, ອຳນາດການປົກຄອງ ກະຕ່າຍ ໄດ້ລະດົມ ກອງທະຫານບຸກໂຈມຕີເຂົ້າ ເຂດຕ້ານໂຮມ ຂອງກຳລັງຝ່າຍປະເທດລາວ. ຍ້ອນຖືກປະລາໄຊ ທາງການທະຫານ, ອຳນາດການປົກຄອງ ກະຕ່າຍ ຈຶ່ງຖືກໂຄ່ນລົ້ມ, ລັດຖະບານປະສົມແຫ່ງຊາດ ໂດຍມີ ແນວລາວຮັກຊາດ ເຂົ້າຮ່ວມນຳ ໄດ້ຮັບການສ້າງຕັ້ງຂຶ້ນ ບົນພື້ນຖານ ສົນຍາວຽງຈັນປີ ໑໙໕໗. ຫຼັງຈາກນັ້ນບໍ່ພໍເທົ່າໃດ, ອາເມລິກາກໍ່ໄດ້ໃຊ້ ພວກທ່ານ ຜຸຍ ຊະນະນິກອນ, ກະຕ່າຍ ແລະ ພູມີ ໜໍ່ສະຫວັນ ໂຄ່ນລົ້ມລັດຖະບານປະສົມແຫ່ງຊາດ ແລ້ວປະກອບ ອຳນາດການປົກຄອງ ລູກມື ຜຸຍ ຊະນະນິກອນ, ພູມີ ໜໍ່ສະຫວັນຂຶ້ນ. ຕໍ່ຈາກນັ້ນ, ອຳນາດການປົກຄອງ ອາຍເຊັນຮາວ ໄດ້ລະດົມ ກອງທະຫານ ຂອງອຳນາດການປົກຄອງ ລູກມືດັ່ງກ່າວ ເປີດບຸກໂຈມຕີ ບັນດາກຳລັງຮັກຊາດ ຢ່າງຂະໜານໃຫຍ່, ຂະຫຍາຍສົງຄາມຮຸກຮານ ໃນທົ່ວປະເທດເຮົາ ໃນປີ ໑໙໖໑, ສົງຄາມດັ່ງກ່າວ ໄດ້ຂະຫຍາຍເຖິງ ລະດັບທີ່ເຮັດໃຫ້ ອຳນາດການປົກຄອງ ແກນເນດີ ຕ້ອງນຳເອົາທະຫານເຮືອ ສູ້ຮົບເທິງບົກ ຂອງອາເມລິກາ ເປັນຈຳນວນໝື່ນຄົນ ເຂົ້າປະເທດໄທ ເພື່ອກຽມສົ່ງເຂົ້າຮ່ວມຮົບຢູ່ໃນລາວ.

ຕໍ່ໜ້າການປະລາໄຊອັນໜັກໜ່ວງ ຂອງພວກ ຫຸ່ນ ໜໍ່ສະໜອງ, ອາເມລິກາ ຈຳຕ້ອງເຊັນສັນຍາເຈີແນວ ປີ ໑໙໖໒ ແລະ ຮັບຮູ້ການສ້າງຕັ້ງ ລັດຖະບານປະສົມ ແຫ່ງຊາດສາມຝ່າຍຢູ່ລາວ. ແຕ່ຫຼັງຈາກນັ້ນ ເກືອບສອງປີ ອາເມລິກາໄດ້ຊຸກຍູ້ ພວກລູກມືຂວາຈັດ ທຳການລັດຖະປະຫານ ໂຄ່ນລົ້ມລັດຖະບານປະສົມ ແຫ່ງຊາດສາມຝ່າຍ ແລ້ວຈັດຕັ້ງອຳນາດການປົກຄອງ ຫຸ່ນເຊີດ ອາເມລິກາຂຶ້ນ ແລະ ໄດ້ໃສ່ຊື່ແບບປອມແປງວ່າ "ລັດຖະບານປະສົມແຫ່ງຊາດ ມີ ຝ່າຍ" ແລະ ຮັກສາຕຳແໜ່ງ "ນາຍົກລັດຖະມົນຕີ" ຂອງສະເດັດເຈົ້າ ສຸວັນນະພູມາ ໄວ້ເພື່ອຫຼອກລວງທາງສຽງ. ໂດຍອີງໃສ່ ອຳນາດການປົກຄອງ ລູກມືດັ່ງກ່າວ, ອຳນາດການປົກຄອງ ໂຢນເຊີນ ໄດ້ສືບຕໍ່ ລະດົມກອງທະຫານຝ່າຍຂວາ ເປີດບັ້ນບຸກໂຈມຕີ ບັນດາກຳລັງຮັກຊາດ, ພ້ອມກັນນັ້ນ ກໍໄດ້ໃຫ້ກອງທັບອາກາດ ຂອງອາເມລິກາ ມາຖິ້ມລະເບີດ ຍິງທຳລາຍເຂດກວດກາ ຂອງບັນດາ ກຳລັງຮັກຊາດ, ຂະຫຍາຍ "ສົງຄາມພິເສດ" ຂຶ້ນສູ່ລະດັບສູງ ອັນໃໝ່. ນັບແຕ່ນັ້ນມາ, "ສົງຄາມພິເສດ" ຂອງອາເມລິກາ ຢູ່ປະເທດເຮົາ ໄດ້ກ້າວສູ່ໄລຍະໃໝ່ ໂດຍການເຂົ້າຮ່ວມໂດຍກົງ ຂອງ ກອງທັບອາກາດ ອາເມລິກາ.

ເປັນທີ່ແຈ້ງແລ້ວວ່າ ວິວັດທະນາການ ແຫ່ງການດຳເນີນ "ສົງຄາມພິເສດ" ຂອງອາເມລິກາ ຢູ່ລາວ ແມ່ນວິວັດທະນາການ ແຫ່ງການທຳລາຍ ແລະ ໂຄ່ນລົ້ມ ບັນດາລັດຖະບານປະສົມແຫ່ງຊາດ ທີ່ມີ ແນວລາວຮັກຊາດ ແລະ ຜູ້ຕາງໜ້າ ຂອງທາງຮັກສັນຕິພາບ ເປັນກາງເຂົ້າຮ່ວມນຳ. ວິວັດທະນາການນີ້ ດຳເນີນໄປຄຽງຄູ່ກັບ ການສ້າງຕັ້ງ ອຳນາດການປົກຄອງລູກມື ສືບຕໍ່ເນື່ອງກັນຂຶ້ນ ເພື່ອໃຫ້ ອາເມລິກາ ເອົາເປັນບ່ອນອີງ ແລະ ໃຊ້ກອງທະຫານ ຂອງ ອຳນາດການປົກຄອງດັ່ງກ່າວ ເຂົ້າໃນການດຳເນີນສົງຄາມ. ພາຍຫຼັງການກະທຳ ໂຄ່ນລົ້ມ ແຕ່ລະເທື່ອ, ອາເມລິກາກໍໄດ້ຊຸກຍູ້ "ສົງຄາມພິເສດ" ໃຫ້ຂຶ້ນສູ່ລະດັບຄຸເດືອດກວ່າເກົ່າ.

ປະຈຸບັນນີ້, ເພື່ອສືບຕໍ່ຮັກສາບ່ອນອີງ ແລະ ເຄື່ອງມືຮັບໃຊ້ຢ່າງຕັ້ງໜ້າ ໃຫ້ແກ່ການຊຸກຍູ້ "ສົງຄາມພິເສດ" ຢູ່ໃນປະເທດເຮົາ, ນິກຊັນ ໄດ້ອອກແຮງ ແຕ່ງແຕ້ມ ໃຫ້ອຳນາດການປົກຄອງ ວຽງຈັນປະຈຸບັນ ດ້ວຍຊື່ອັນປອມແປງວ່າ "ລັດຖະບານປະສົມແຫ່ງຊາດສາມຝ່າຍ", ດ້ວຍສັນຍາ "ເອກະລາດ", "ເປັນກາງ", "ປະຊາທິປະໄຕ ແລະ ໄດ້ເພີ່ມທະວີ ກຳລັງກອງທັບ ລູກມືຢ່າງຂຸນຂອງ.

ໂດຍສືບຕໍ່ໃຊ້ຍຸດທຳນອງຕ່າງໆ ຂອງອາເມລິກາ, ພວກທ່ານກໍດີ ສະເດັດເຈົ້າ ສຸວັນນະພູມາ ບໍ່ໄດ້ລົດລະ ໃນການ ໂອ້ອວດ ກາໜາຍຫຼອກລວງດັ່ງກ່າວ. ຍິ່ງກວ່ານັ້ນອີກ, ພວກທ່ານຍັງກ່າວອ້າງວ່າ ອຳນາດການປົກຄອງ ວຽງຈັນ ປະຈຸບັນ ໄດ້ພົວພັນທາງການທູດ ກັບປະເທດຈຳນວນໜຶ່ງ ເພື່ອຢັ້ງຢືນໃຫ້ ອັນທີ່ເອີ້ນວ່າ "ຖານະອັນຖືກຕ້ອງຕາມກົດໝາຍ" ຂອງອຳນາດການປົກຄອງ ດັ່ງກ່າວ.

ພວກຂ້າພະເຈົ້າ ຄິດວ່າ ບໍ່ຈຳເປັນຈະຕ້ອງກ່າວເຖິງ ການພົວພັນ ທາງການທູດ ລະຫວ່າງ ອຳນາດການປົກຄອງວຽງຈັນ ໃນປະຈຸບັນ ກັບອາເມລິກາ ແລະ ກັບປະເທດ "ພັນທະມິດ" ຈຳນວນໜຶ່ງ ຂອງ ອາເມລິກາ, ເພາະວ່າ ການພົວພັນ ທາງການທູດນັ້ນ ນັ້ນບໍ່ແຕກຕ່າງຫຍັງ ກັບແບບພົວພັນ ທາງການທູດ ລະຫວ່າງ ອາເມລິກາ ກັບລະບອບການປົກຄອງຫຸ່ນ ຢູ່ໄຊ່ງ່ອນ, ພະນົມເປັນ ຫຼື ເຊອູນ. ທຸກຄົນໄດ້ຮູ້ດີ ເຖິງຄຸນຄ່າ ອັນແທ້ຈິງ ຂອງມັນແລ້ວ. ສ່ວນປະເທດສັງຄົມນິຍົມ ແລະ ຊາດນິຍົມ ຈຳນວນໜຶ່ງໄດ້ຕັ້ງ ແລະ ຮັກສາຜູ້ຕາງໜ້າ ທາງການທູດ ຢູ່ທີ່ວຽງຈັນນັ້ນ ກໍເພາະ ແຕ່ໝາຍເຖິງ ການຮັບຮູ້ ພະລາຊະອານາຈັກລາວ ເປັນເອກະລາດ ແລະ ເປັນກາງ ດັ່ງທີ່ສົນທິສັນຍາເຈີແນວປີ ໑໙໖໒ ໄດ້ຮັບຮູ້, ແຕ່ມັນບໍ່ໄດ້ໝາຍເຖິງ ການຮັບຮູ້ ອຳນາດການປົກຄອງ ລູກມືວຽງຈັນ ໃນປະຈຸບັນນີ້ ທາງດ້ານກົດໝາຍ.

ພວກທ່ານບໍ່ອາດຈະຫົ່ມສາຍຕາໄປທາງອື່ນໄດ້ ໃນເມື່ອຮູບພາບຕ່າງໆ ຢູ່ອ້ອມຂ້າງ ພວກທ່ານນັ້ນ ຫວ່ານກະທົບໃສ່ສາຍຕາ ຂອງພວກທ່ານໃນອຸ່ມນີ້ຈຸ່ມ: ບັນດາສຳນັກງານອັນໃຫຍ່ໂຕ ຂອງອົງການຊ່ວຍເຫຼືອ ອາເມລິກາ, ອົງການ

ຖະແຫຼງຂ່າວ ອາເມລິກາ, ສະຖານທູດ ອາເມລິກາ ທີ່ມີພະນັກງານ ອາເມລິກາ ນັບເປັນຈຳນວນພັນໆຄົນ ເຊິ່ງໃນນັ້ນ ມີທັງພວກຈາຣະຊົນ ສືບລາຊະການລັບ, ພວກທະຫານ ນຸ່ງໂສ້ງເສື້ອສາມັນຊົນ. ພວກເຂົາໄດ້ສ້າງເປັນ "ເຂດຂອງຄົນອາເມລິກາ" ຕ່າງຫາກ, ເປັນ "ຕົວເມືອງນ້ອຍ ຂອງອາເມລິກາ" ທີ່ຕັ້ງຢູ່ກາງນະຄອນວຽງຈັນ. ສະເພາະແຕ່ສະຖານທູດ ອາເມລິກາ ໃນປະຈຸບັນ ກໍ່ໄດ້ມີຜູ້ຊ່ວຍທູດ ທາງການ ທະຫານບົກ ແລະ ທະຫານອາກາດ ເປັນຈຳນວນ ໒໐໐ ກ່ວາຄົນ. ຈຳນວນຜູ້ຊ່ວຍທູດ ທາງການທະຫານ ທີ່ມີຢູ່ໃນສະຖານທູດ ຂອງຕ່າງປະເທດ ທີ່ຕັ້ງຢູ່ປະເທດ ທີ່ນັບດີ ປະເທດເຂົານີ້ ແມ່ນຫຼາຍເກີນໄປ ແລະ ເປັນການ ຜິດປົກກະຕິທີ່ສຸດ. ສະຖານທູດອາເມລິກາ ເຊິ່ງເປັນກົງຈັກ ຫົວສະໝອງ ພ້ອມດ້ວຍອົງການທີ່ເປີດເຜີຍຕ່າງໆ ຂອງອາເມລິກາ ໄດ້ກາຍເປັນກົງຈັກ ບັນຊາສົງຄາມ; ພ້ອມກັນນັ້ນ ກໍ່ເປັນກົງຈັກປົກຄອງ "ປິດລັບ" ຂອງອາເມລິກາ ເຊິ່ງແຕ່ຫຼາຍປີມານີ້ ໄດ້ຄອບຊຸມກົງຈັກປົກຄອງ ລູກມື ວຽງຈັນ. ກົງຈັກປົກຄອງ ຂອງ ອາເມລິກາດັ່ງກ່າວ ໄດ້ຕັ້ງແອກປົກຄອງ ລ່າເມືອງຂຶ້ນແບບໃໝ່ ຂອງເຂົາ ຢູ່ໃນເຂດກວດກາ ຂອງອຳນາດການປົກຄອງລູກມືວຽງຈັນ. ອຳນາດການປົກຄອງວຽງຈັນ ປະຈຸບັນ ພໍແຕ່ເປັນຜູ້ປະຕິບັດ ຕາມຄຳສັ່ງ ຂອງ ອາເມລິກາເທົ່ານັ້ນ, ມັນບໍ່ແມ່ນຜູ້ທີ່ມີ ອຳນາດແທ້ ຢູ່ໃນເຂດກວດກາ ຂອງເຂົາ ແລະ ຍິ່ງກວ່ານັ້ນ ມັນບໍ່ແມ່ນ ສິ່ງທີ່ພວກທ່ານ ໄດ້ຫຼັບຕາເວົ້າວ່າ ເປັນຜູ້ທີ່ມີອຳນາດ ໃນທົ່ວດິນແດນຂອງລາວ ເຊິ່ງໃນຕົວຈິງ ສ່ວນໃຫຍ່ຂອງດິນແດນນີ້ ໄດ້ຮັບການປົດປ່ອຍ ອອກຈາກແອກປົກຄອງ ລ່າເມືອງຂຶ້ນແບບໃໝ່ ຂອງອາເມລິກາ ແລະ ຢູ່ພາຍໃຕ້ການກວດກາ ຂອງບັນດາກຳລັງຮັກຊາດ.

ພວກທ່ານ ຄົງຈະຮູ້ດີແລ້ວ ກ່ຽວກັບລາຍງານ ຂອງຄະນະກຳມະການຕ່າງໆ ທີ່ຂຶ້ນກັບ ສະພາສູງ ອາເມລິກາ, ແລະ ຂໍ້ສັງເກດຂອງ ຜູ້ແທນ ສະພາສູງ ແລະ ນັກໜັງສືພິມ ອາເມລິກາ ຫຼາຍຄົນ ທີ່ວ່າ "ລັດຖະບານລາວ (ໝາຍເຖິງອຳນາດການປົກຄອງ ວຽງຈັນປະຈຸບັນ) ໄດ້ສືບຕໍ່ຂຶ້ນກັບ ອາເມລິກາ ເກືອບສົມເຊິງ ກວ່າລັດຖະບານອື່ນໃດ ໃນໂລກ ແລະ ຖ້າຫາກສົງຄາມຍັງສືບຕໍ່ໄປ" ກໍ່ຍິ່ງຈະຂຶ້ນກັບ ອາເມລິກາ, "ສະຖານທູດ ອາເມລິກາ ໄດ້ກາຍເປັນ ສະຖານທີ່ບັງຄັບບັນຊາສົງຄາມ ຂອງອາເມລິກາ ຢູ່ລາວໃນຂຸມນີ້", "ເອກອັກຄະລາຊະທູດ ອາເມລິກາ ສຸລິວັນ ໄດ້ກາຍເປັນ ຜູ້ສຳເລັດ ລາຊະການທາງທະຫານ, "ທ່ານກໍ່ຄື ໄດ້ປົກຄອງດິນແດນນີ້". ຂໍ້ສັງເກດດັ່ງກ່າວ ຂອງອົງການ ທາງການ ຂອງອາເມລິກາ, ຂອງຄົນອາເມລິກາ ໄດ້ຈີກກາໝາຍ ຫຼອກລວງ ຂອງອຳນາດການປົກຄອງ ວຽງຈັນປະຈຸບັນ, ໄດ້ເປີດແຜນການສໍ້ໂກງ ແບບໜ້າດ້ານ ຂອງພວກທ່ານ ທີ່ກ່າວຄວາມທຳນອງ ອັນອອກອົງຕ່າງໆ.

໒/- ຍ້ອນວ່າ ປະເທດໄທ ໄດ້ກາຍເປັນຖານທັບ ອັນໃຫຍ່ໂຕ ຂອງອາເມລິກາ ທາງທິດຕາເວັນຕົກ ຂອງປະເທດເຮົາ ແລະ ຕິດກັບປະເທດເຮົາ, ອາເມລິກາ ໄດ້ເວົ້າປະເທດໄທ ເປັນບ່ອນອີງ, ເປັນແນວໜ້າໂດຍກົງ ແລະ ເປັນບ່ອນ ລຳລຽງກຳລັງຄົນ ອັນຫຼວງຫຼາຍ ໃຫ້ແກ່ສົງຄາມພິເສດ ຢູ່ໃນປະເທດເຮົາ.

ເໝືອນດັ່ງທຸກຄົນໄດ້ຮູ້ດີແລ້ວວ່າ, ໃນຫຼາຍປີມານີ້, ຍ້ອນລະບົບຖານທັບ ທະຫານອາກາດ ແລະ ທະຫານເຮືອສົມທົບ ອັນໃຫຍ່ໂຕ, ຍ້ອນລະບົບເສັ້ນທາງ ຍຸດທະສາດ, ສາງອັນໃຫຍ່ໂຕ ຂອງອາເມລິກາ ແລະ ພະນັກງານທະຫານ ອາກາດ ອາເມລິກາ ເປັນຈຳນວນໝື່ນໆຄົນ ທີ່ຕັ້ງຢູ່ປະເທດໄທ, ປະເທດໄທຈຶ່ງໄດ້ກາຍເປັນ "ໂອກີນາວາ" ທີ່ສອງ ຂອງອາເມລິກາ ຢູ່ອາຊີ ອາຄະເນ, ເປັນທີ່ຕັ້ງອັນສຳຄັນໃນ "ແນວຍຸດທະສາດ" ຂອງອາເມລິກາ ຢູ່ພາກພື້ນນີ້ ແລະ ເປັນບ່ອນອີງຂອງ "ແນວປ້ອງກັນແມ່ນ້ຳຂອງ" ຂອງອາເມລິກາ.

ໂດຍສອຍໃຊ້ທີ່ຕັ້ງ ຂອງປະເທດໄທ ທີ່ຕິດກັບຊາຍແດນເຮົາ ແຕ່ເໜືອຕະຫຼອດໃຕ້, ໃນຫຼາຍປີມານີ້ອາເມລິກາ ໄດ້ໃຊ້ຖານທັບ ອັນໃຫຍ່ໂຕດັ່ງກ່າວ ເປັນແປ້ນຢັ້ນ ເພື່ອຮຸກຮານ, ເປັນແນວຫຼັງໂດຍກົງ ໃຫ້ແກ່ ສົງຄາມພິເສດ "ຢູ່ປະເທດເຮົາ, ເປັນປະຕູ ເພື່ອນຳເອົາ ພະນັກງານ ທະຫານ ແລະ ເຄື່ອງອຸປະກອນສົງຄາມ ເຂົ້າມາປະເທດເຮົາ, ເປັນບ່ອນອົບຮົມ ກົມກອງຕ່າງໆ ຂອງກຳລັງພິເສດ", ເປັນບ່ອນຝຶກແອບນັກບິນ, ນາຍ ແລະ ພົນທະຫານ ຂອງກອງ

ທັບ ລູກມືອະເມລິກັນ, ເປັນສະຖານທີ່ ຂວາງອິດການ ບັງຄັບບັນຊາ, ພະລາທິການ ຂອງເຈົ້າອີອາ ຫົບນຈ້າສົງຄາມພິເສດ ໂດຍກົງ ຫຼືມີການພົວພັນກັບ "ສົງຄາມພິເສດ" ຢູ່ປະເທດເຮົາ. ຕະຫຼອດເວລາເກືອບ ໗ ປີທີ່ຜ່ານມາ, ອາເມລິກາ ໄດ້ໃຊ້ລະບົບຖານທັບອາກາດ ລອມທັງຖານທັບ ຂອງເຮືອບິນ ຍຸດທະສາດ ບີ-໕໒ ຢູ່ ອຸດຕະເພົາ ເປັນບ່ອນ ບິນອອກ ຂອງເຮືອບິນ ມາຖິ້ມລະເບີດລົງໃສ່ ປະເທດເຮົາ. ພວກກຳອຳນາດ ປະຕິການບາງກອກ ໄດ້ເຄີຍຮັບສາລະພາບ ຢ່າງ ເປີດເຜີຍວ່າ ພວກເຂົາໄດ້ ໃຫ້ອາເມລິກາ ໃຊ້ຖານທັບຕ່າງໆ ຢູ່ປະເທດໄທ ເພື່ອໃຫ້ເຮືອບິນ ໄປຖິ້ມລະເບີດຢູ່ລາວ ແລະ ເປັນບ່ອນເຝິກແອບ ກຳລັງພວງ ແລະ ກຳລັງນອກປະຈຳການ ຂອງອຳນາດການປົກຄອງວັງຈັນ.

ພວກກຳອຳນາດປະຕິການ ບາງກອກ ເຊິ່ງມີບົດບາດເປັນ ທະຫານປະຈັນບານ ຂອງ ອາເມລິກາ ຢູ່ອາ ຊີ ອາຄະເນ ໄດ້ຄົບຄິດຢ່າງໃກ້ຊິດ ທາງດ້ານການເມືອງ ແລະ ການທະຫານ ກັບອາເມລິກາ ແລະ ກັບອຳນາດການ ປົກຄອງ ລູກມືອະເມລິກັນ, ໂດຍປະຕິບັດຕາມແຜນການ ຂອງອາເມລິກາ, ພວກເຂົາພອມອອກແຮງ ຈັດຕັ້ງກຸ່ມສຳພັນທະ ຫານ ລະຫວ່າງ "ບາງກອກ, ວຽງຈັນ, ໄຊງ່ອນ ແລະ ພະນົມເປັນ" ຢູ່ໃນຂອບເຂດ ຂອງອັນທີ່ເອີ້ນວ່າ "ສຳພັນ ພາກພື້ນ" (Alliance régionale ) ຂອງ "ທິດສະດີ ນິກສັນ".

ໃນສອງສາມປີມານີ້, ສິ່ງທີ່ຄອນເວົ້າໃຈໃສ່ ແມ່ນ ພາກວິສານໄທ ທີ່ມີພົນລະເມືອງໄທ ເຊື້ອຊາດລາວ ເປັນຈຳນວນ ໑໐ ລ້ານກວ່າຄົນ ໄດ້ກາຍເປັນບ່ອນຄຳລອງ ກຳລັງຄົນ ໂດຍກົງໃຫ້ແກ່ "ສົງຄາມພິເສດ" ຂອງອາເມ ລິກາ ຢູ່ປະເທດເຮົາ. ໂດຍໃຊ້ບົດເກີດກຳລັງພົນ ຄົນພວງພາຍຖິ່ນກ່ອນນັ້ນ ຢ່າງສຸດຄວາມສາມາດ ເພື່ອຮັບໃຊ້ ນະໂຍ ບາຍ "ໃຊ້ຄົນອາຊີ ຂ້າຄົນອາຊີ" ຂອງ "ທິດສະດີ ນິກສັນ", ອຳນາດການປົກຄອງ ນິກສັນ ໄດ້ນຳເອົາກຳລັງ ທະ ຫານພວງຂອງໄທ ເຂົ້າມາໃນປະເທດເຮົາ ນັບມື້ນັບຫຼາຍ ເພື່ອເພີ່ມຈຳນວນພົນ ແລະ ເພີ່ມທະວີ ກຳລັງໃຫ້ແກ່ ກອງ ທັບວຽງຈັນ ແລະ ຮ່ວມຮົບໂດຍກົງ ຢູ່ໃນປະເທດເຮົາ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າຈຳເປັນຕ້ອງເຕືອນ ພວກທ່ານວ່າ ພວກກຳອຳນາດປະຕິການ ບາງກອກ ບໍ່ ພຽງແຕ່ອອກແຮງຊ່ວຍເຫຼືອ ອາເມລິກາ ໃຫ້ຮຸກຮານປະເທດເຮົາ ດ້ວຍການນຳເອົາທະຫານພວງໄທ ເຂົ້າຢຽບຢ່ຳ ປະ ເທດເຮົາເທົ່ານັ້ນ, ແຕ່ຍັງສືບຕໍ່ປະຕິບັດ ເຄົ້າ ລະຫັດສາດ "ລັດທິໄທໃຫຍ່" ຂອງພວກເຂົາ ເຂົ້າປະເທດເຮົາຢ່າງ ຍາວນານ.

ໃນສະພາບການນີ້ ອາເມລິກາ ໄດ້ໃຊ້ປະເທດໄທ ເປັນແປ້ນຢືນ ເພື່ອຮຸກຮານ, ເປັນແນວໜ້າໂດຍກົງ ໃຫ້ ແກ່ "ສົງຄາມພິເສດ" ຢູ່ປະເທດເຮົາ, ແຕ່ໃນພາຍໜ້າ ເຂົາຍັງມີກົນອຸບາຍ ຮັກສາປະເທດໄທໄວ້ ເປັນຖານທັບກໍ່ ສົງຄາມ ເພື່ອນາບຂູ່ປະເທດເຮົາ ເວົ້າສະເພາະ, ບັນດາປະເທດ ໃນອິນດູຈີນ ແລະ ອາຊີ ອາຄະເນເວົ້າລວມ ຢ່າງ ເປັນປະຈຳ ແລະ ຍາວນານ. ພວກເຂົາຖືວ່າ ນັ້ນແມ່ນ ພາກສ່ວນໜຶ່ງ ຂອງ "ຍຸດທະສາດກອມໂລກ" ຂອງພວກເຂົາ. ອຳນາດການປົກຄອງ ນິກສັນ ໄດ້ເປີດເຜີຍວ່າ ອາເມລິກາ ຈະສືບ ຢູ່ປະເທດໄທຕໍ່ໄປ ພາຍຫຼັງທີ່ສົງຄາມ ອິນດູຈີນ ຢຸດເຊົາລົງ. ທ່າງແລ້ວນີ້ ສະເດັດເຈົ້າ ສຸວັນນະພູມາ ກໍ່ຈະຕີ ພວກຖະໜອມປະພາດ ໄດ້ພົບປະກັນ ເປັນກະບອກ ສຽງ ໃຫ້ອາເມລິກາ ໂດຍໄດ້ປະກາດວ່າ ອາເມລິກາ ຈະສືບຕໍ່ຮັກສາ ກຳລັງ ແລະ ຖານທັບຢູ່ປະເທດໄທ ໃນໄລຍະ ໔ ຫຼື ໕ ປີ ຫຼື ຍາວນານກວ່ານັ້ນ.

ໂດຍຕົວໜ້າ ປະຕິບັດບົດບາດ ເປັນທະຫານ ປະຈັນບານ ຂອງ "ທິດສະດີ ນິກສັນ" ຢູ່ພາກພື້ນ ອາຊີ ອາຄະເນ, ພວກກຳອຳນາດ ປະຕິການບາງກອກ ໄດ້ບົ່ນເລິກເຂົ້າ ໃນເສັ້ນທາງ ອັນເຕັມໄປດ້ວຍ ໂທດກຳ. ແນ່ນອນ ວ່າ ພວກເຂົາຈະຕ້ອງແບກຫາບ ຜົນຮ້າຍທຸກຢ່າງ ທີ່ພວກເຂົາໄດ້ກໍ່ຂຶ້ນ.

໓/- ຕະຫຼອດເວລາ ເກືອບ ໕ ປີ ທີ່ຜ່ານມາ, ການຖິ້ມລະເບີດ ລົງໃສ່ດິນແດນລາວ ໄດ້ກາຍເປັນສົງຄາມທາງອາກາດ ຢ່າງແທ້ຈິງ ເຊິ່ງເປັນພາກສ່ວນໜຶ່ງ ທີ່ຕິດແໜ້ນກັບ "ສົງຄາມພິເສດ" ຂອງອາເມລິກາ ຢູ່ປະເທດເຮົາ.

ໃນເດືອນ ໕ ປີ ໑໙໖໔ ໝາຍຄວາມວ່າ ບໍ່ພໍ ໑ ເດືອນ ຫຼັງຈາກການລັດຖະປະຫານ ໂຄ່ນລົ້ມ ລັດຖະບານປະສົມແຫ່ງຊາດສາມຝ່າຍ, ໄປນເຈີນ ໄດ້ອອກຄຳສັ່ງ ໃຫ້ກອງທັບອາກາດ ອາເມລິກາ ຖິ້ມລະເບີດ ຍິງທຳລາຍ ເຂດປົດປ່ອຍ ທົ່ວໄຫຼ່ພື້ນ, ຈຽງຂວາງໂດຍກົງ, ເປີດສາກໃຫ້ແກ່ການຕິດພັນ ຢ່າງສະໜິດແໜ້ນ ຂອງອາເມລິກາ ກັບ "ສົງຄາມພິເສດ" ຢູ່ປະເທດເຮົາ. ແຕ່ນັ້ນມາ, ເຮືອບິນອາຍພົ່ນ ຂອງອາເມລິກາ ທຸກຈະນິດ ທີ່ອອກຈາກຖານທັບຕ່າງໆ ຢູ່ປະເທດໄທ, ຫວຽດນາມໃຕ້ ແລະ ກອງເຮືອທີ ໗ ໄດ້ເປີດກວ້າງ ການຖິ້ມລະເບີດ ຍິງທຳລາຍ ທົ່ວເຂດກວດກາຂອງບັນດາກຳລັງຮັກຊາດ ຢ່າງໄວວາທີ່ສຸດ. ມາເຖິງ ປີ ໑໙໖໕, ອາເມລິກາໄດ້ໃຊ້ ທັງເຮືອບິນຍຸດທະສາດ ບ-໕໒ ມາຖິ້ມລະເບີດລົງໃສ່ ເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ ຢູ່ເຂດໃຕ້ ຢ່າງລວມຄົດ ແລະ ຫຼັງຈາກນັ້ນ ກໍໄດ້ຂະຫຍາຍໄປເຖິງພາກເໜືອ ຂອງລາວ.

ການຖິ້ມລະເບີດ ຂອງອາເມລິການັ້ນຮວ່ງ ແຕ່ແມ່ນການ ໂຈມຕີຊຸມກັນ ໃນສົງຄາມທຳມະດາເທົ່ານັ້ນ, ແຕ່ເປົ້າໝາຍຍຸດທະສາດ ຂອງການຖິ້ມລະເບີດ ດັ່ງກ່າວນີ້ ແມ່ນໃຊ້ຄວາມແຮງ ຂອງກຳລັງໄຟ ຂອງກອງທັບອາກາດອາເມລິກາ ຢ່າງສຸດຄວາມສາມາດ ເພື່ອເປັນບ່ອນອີງໃຫ້ແກ່ພວກທະຫານ ຊຸດນີ້ ຢູ່ໃນສະໜາມຮົບ, ພ້ອມກັນນັ້ນກໍເພື່ອທຳລາຍພື້ນຖານວັດຖຸ, ສັງຄົມ ແລະ ການເມືອງ ຂອງບັນດາກຳລັງຮັກຊາດ ໃຫ້ໄດ້ຫຼາຍເທົ່າໃດ ຍິ່ງດີເທົ່ານັ້ນ, ແນໃສ່ເຮັດໃຫ້ "ສົງຄາມພິເສດ" ໄດ້ຮັບໄຊຊະນະ. ພາກສ່ວນໃຫຍ່ ຂອງການໂຈມຕີ ດ້ວຍກອງທັບອາກາດ ຂອງອາເມລິກາ ໃນເກືອບ ໕ ປີທີ່ຜ່ານມານັ້ນ ແມ່ນການຖິ້ມລະເບີດ ອັນກວ້າງຂວາງ ລວມຄົດ ທັງເວັນ ແລະ ຄືນ, ຕີເຂົ້າໃສ່ໃນເຂດທີ່ມີພົນລະເມືອງ ໜາແໜ້ນ, ພື້ນຖານວັດຖຸ ໃນເຂດກວດກາ ຂອງບັນດາກຳລັງຮັກຊາດ. ການຖິ້ມລະເບີດ ຂະໜາດໃຫຍ່ໂຕ ຂອງອາເມລິກາ ດັ່ງກ່າວ ມີໜ້ອຍໃນປະຫວັດສາດ ແຫ່ງສົງຄາມ, ມັນໄດ້ກາຍອອບເຂດ ຂອງການໂຈມຕີ ຊຸມກັນ, ໄດ້ກາຍເປັນສົງຄາມ ດ້ວຍກອງທັບອາກາດ ຢ່າງແທ້ຈິງ, ແມ່ນຮູບການພິເສດ ອັນໜຶ່ງຂອງ "ສົງຄາມພິເສດ" ຂອງອາເມລິກາ ຢູ່ລາວ.

໔/- "ສົງຄາມພິເສດ" ຂອງພວກຈັກກະພັດ ນິກສັນ ໄດ້ກາຍເປັນ "ສົງຄາມພິເສດ ເພີ່ມທະວີ" ຂອງນິກສັນ.

ຄວາມຈິງ ຂອງສະພາບການ ຢູ່ປະເທດເຮົາໃນ ໕ ປີທີ່ຜ່ານມາ ໄດ້ສະແດງໃຫ້ເຫັນວ່າ ນັບແຕ່ນິກສັນ ຂຶ້ນກຳອຳນາດຢູ່ທຳນຽບຂາວ ເປັນຕົ້ນມາ, ນິກສັນ ບໍ່ພຽງແຕ່ສືບຕໍ່ຈຸດປະສົງ ແລະ ການກະທຳຂອງ ພວກກຳອຳນາດ ກ່ອນເຂົາເໝືອນດັ່ງທີ່ເຂົາໄດ້ປະກາດອອກ ເທົ່ານັ້ນ, ແຕ່ເຂົາຍັງເຮັດຮ້າຍກວ່າ ພວກກຳອຳນາດກ່ອນເຂົາອີກຈັກ.

ບັນດາກຳລັງຮັກຊາດ ໄດ້ປະກາດ ເອກະສານ ເປັນທາງການຫຼາຍສະບັບ ເຊິ່ງໄດ້ຊີ້ໃຫ້ເຫັນແຈ້ງວ່າ "ສົງຄາມພິເສດ" ຂອງອາເມລິກາ ຢູ່ປະເທດເຮົາ ໄດ້ຂະຫຍາຍຢ່າງຮ້າຍແຮງ ນັບແຕ່ ນິກສັນ ໄດ້ນຳໃຊ້ທິດສະດີ ຂອງເຂົາ ຢູ່ໃນປະເທດເຮົາ ແລະ ບໍ່ໄດ້ລຶດລະໃນການປັ້ນແຕ່ງໄດ ສົງຄາມດັ່ງກ່າວ. ປຶ້ມປົກຂາວ ຂອງຄະນະກຳມະການສູນກາງ ແນວລາວຮັກຊາດ ທີ່ໄດ້ພິມອອກ ເນື່ອງໃນໂອກາດ ວັນຄົບຮອບ ໑໐ ປີ ແຫ່ງການ ເຂົ້າບັນຍາເຊີແນວ ປີ ໑໙໕໖ ກ່ອງກັບລາວ (໖໙/໗/໑໙໖໔ - ໖໙/໗/໗໖) ໄດ້ເປີດອອກວ່າ "ເມື່ອທົດລອງ" "ທິດສະດີ ນິກສັນ" ຢູ່ລາວ, ນິກສັນ ໄດ້ເພີ່ມທະວີ "ສົງຄາມພິເສດ" ອັນສູງສຸດລະດັບສູງ ໂດຍແນໃສ່ ເລັກນ້ອຍດັ່ງນີ້:

- ບຸກຍຶດ, ຮັດແຄບເຂດປົດປ່ອຍລາວ ເພື່ອກອບກູ້ເອົາພວກເຂົາ ອອກຈາກທ່າຮົບ, ທ່າປ້ອງກັນຕົວ, ທຳລາຍຖານທີ່ໝັ້ນແນວຫຼັງ ຂອງບັນດາກຳລັງຮັກຊາດ ແລະ ແບ່ງແຍກສະໜາມຮົບ ຢູ່ອິນດູຈີນ, ກີດກັ້ນ ຂັດຂວາງການ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ລະຫວ່າງການຕໍ່ສູ້ ຕ້ານອາເມລິກາ ເພື່ອກູ້ຊາດ ຂອງ ປະຊາຊົນ ໃນບັນດາປະເທດ ອິນດູຈີນ.

- ປາບໃຫ້ສະຫງົບ ແລະ ປັບປຸງເຂດກວດກາ ຂອງອຳນາດການປົກຄອງ ວຽງຈັນ ເຮັດໃຫ້ເຂດນີ້ ຕິດລຽບ ກັບ ຖານທັບຢູ່ປະເທດໄທ ໃຫ້ກາຍເປັນ "ແນວປ້ອງກັນແມ່ນ້ຳຂອງ" ເພື່ອເປັນແປ້ນຢັ້ນ ບຸກໂຈມຕີຂະບວນການ ເພື່ອ ເອກະລາດ ແຫ່ງຊາດຂອງ ປະຊາຊົນລາວ ເວົ້າສະເພາະ ແລະ ຂອງປະຊາຊົນອິນດູຈີນ ເວົ້າລວມ ຢ່າງຍາວນານ.

- ໃນສະເພາະໜ້າ, ປົກປັກຮັກສາ ແລະ ປັບປຸງ ທີ່ຕັ້ງ ແລະ ກຳລັງຂອງການປົກຄອງ ວຽງຈັນ. ເຮັດ ໃຫ້ບັນດາກຳລັງຮັກຊາດລາວ ອ່ອນເພຍລົງ ໂດຍຫວັງຈະຍາດເອົາ "ທ່າແຮງ" ຢູ່ລາວ, ພ້ອມກັນນັ້ນ ກໍ່ຊ່ວຍຊູ ຍູ້ໜູນ ໃຫ້ແກ່ ນະໂຍບາຍ "ເຮັດໃຫ້ສົງຄາມເປັນຂອງ ຫວຽດນາມ" ຢູ່ພາກໃຕ້ຫວຽດນາມ.

"ເພື່ອຕອບສະໜອງ ເລັກກີນດັ່ງກ່າວ, ນິກຊັນໄດ້ນຳໃຊ້ ຍຸດທະສາດ" ສົງຄາມພິເສດ ເພີ່ມທະວີ. "ຍຸດທະສາດນີ້ ໄດ້ຊຸກຍູ້ສົງຄາມຂຶ້ນໃນ ສາມດ້ານຄື: ການເຄື່ອນທັບ ທາງບົກ, ການໂຈມຕີດ້ວຍກອງທັບອາກາດ, ການເຄື່ອນໄຫວ "ປາບໃຫ້ສະຫງົບ", ເພີ່ມລະດັບຂະໜາດ, ຄວາມຮຸນແຮງ ແລະ ລັກສະນະທີ່ໂຫດຫ້ຳ ຂອງສົງຄາມ, ໄດ້ປ່ຽນວິທີ ດຳເນີນສົງຄາມ ແລະ ວິທີໃຊ້ກຳລັງ, ເຮັດໃຫ້ສົງຄາມ ມີຈຸດພິເສດໃໝ່ຕ່າງໆ".

ພວກຂ້າພະເຈົ້າ ຂໍຍົກຈຸດເດັ່ນ ບາງອັນ ຂອງ "ສົງຄາມພິເສດ ເພີ່ມທະວີ" ຂອງ ນິກຊັນດັ່ງນີ້:

ກ - ນຳໃຊ້ ແລະ ຂະຫຍາຍຕຳລາຂອງ "ທິດສະດີ ນິກຊັນ" ຢ່າງສຸດຂີດ. ນິກຊັນ ໄດ້ນຳໃຊ້ການສົມທົບ ລະຫວ່າງກອງທັບລູກມື ເຊິ່ງແມ່ນຄົນລາວ, ຄົນອິນດູຈີນ ແລະ ຄົນອາຊີ ເພື່ອຊຸກຍູ້ ສົງຄາມຢູ່ໜ້າດິນ ດ້ວຍການ ເຄື່ອນທັບ ນັບມື້ນັບໃຫຍ່.

ໃນຄວາມພະຍາຍາມ ອັນສຳຄັນເບື້ອງຕົ້ນໃນການ ເຮັດ ສົງຄາມຢູ່ປະເທດເຮົາ, ນິກຊັນໄດ້ລະດົມ ກຳລັງພິເສດ ເຊິ່ງເປັນກຳລັງປະຈັນບານ ຂອງ ອາເມລິກາຢູ່ສະໜາມຮົບລາວ, ເພື່ອເປີດບັນຮົບໃຫຍ່ທີ່ໃສ່ຊື່ວ່າ "ບັນຮົບກູ້ກຽດ" ບຸກໂຈມຕີຍຶດ ເຂດທົ່ງໄຫຫີນ - ຊຽງຂວາງ. ບັນຮົບນີ້ ໄດ້ແກ່ຍາວແຕ່ກາງປີ ໑໙໖໙ ມາເຖິງ ເດືອນ ໒ ປີ ໑໙໗໐ ແລະ ໄດ້ໃຊ້ ກຳລັງທະຫານຮາບ ອັນມະຫາສານ ລວມມີທະຫານຫຼວງ ໔໐ ກອງພັນ ເຊິ່ງສ່ວນໃຫຍ່ແມ່ນ ກອງພັນ ແລະ ກອງພັນໃຫຍ່ ຂອງກຳລັງພິເສດ ວາງປາວ ເປັນກຳລັງປະຈັນບານ, ພ້ອມກັນນັ້ນ ກໍ່ໄດ້ຕົກໂຮມເຮືອ ບິນ ອາເມລິກາຢ່າງລວມສູນ ທີ່ສຸດ ເພື່ອຊ່ວຍເຫຼືອດ້ວຍກຳລັງ ອັນແຮງທີ່ສຸດ. ບັນຮົບນີ້ ແມ່ນດຸເດືອດ, ຮ້າຍກາດທີ່ສຸດ: ທະຫານຮາບໄດ້ປະຕິບັດແຜນການ "ຈູດກ້ຽງ, ທຳລາຍກ້ຽງ, ຂ້າກ້ຽງ" ; ກ່ອນຈະຖອຍໜີ ພວກເຂົາໄດ້ບັງຄັບກວາດ ເອົາປະຊາຊົນ ທ້ອງຖິ່ນໄປ ນັບເປັນໝື່ນໆຄົນ, ເຮືອບິນ ອາເມລິກາ ໄດ້ຖິ້ມລະເບີດຍິງທຳລາຍ ໂຕເມືອງ ແລະ ເຂດ ທີ່ມີພົນລະເມືອງໜາແໜ້ນ ຢູ່ທົ່ງໄຫຫີນ - ຊຽງຂວາງ ເຮັດໃຫ້ຫຼາຍເຂດກາຍເປັນ "ເຂດຂາວ" (ຕາມການຄິດໄລ່ ຕ່ຳທີ່ສຸດ, ການເສັຍຫາຍ ຍ້ອນບັນຮົບດັ່ງກ່າວມີຄື: ປະຊາຊົນສາມັນຕາຍ ແລະ ຖືກບາດເຈັບ ໕.໐໐໐ ກວ່າຄົນ, ປະ ຊາຊົນຖືກບັງຄັບ ກວາດເອົາໄປ ໓ ໝື່ນກວ່າຄົນ; ເຮືອນ ໓.໔໐໐ ກວ່າຫຼັງ, ວັດ ໑໕໗ ຫຼັງ, ເຂົ້າ ໓.໔໐໐ ກວ່າ ໂຕນ ຖືກທຳລາຍ, ຄວາຍ ໔໔.໐໐໐ ໂຕ, ງົວ ໓໐.໐໐໐ ໂຕ, ມ້າ ໖.໐໐໐ ໂຕ, ໝູ ໔໔.໐໐໐ ໂຕ ແລະ ສັດລ້ຽງຕ່າງໆ ຈຳນວນຫຼວງຫຼາຍ ກໍ່ຖືກປຸ້ນເອົາໄປ ຫຼືຂ້າຕາຍ).

ຍ້ອນຈຸດພິເສດຕ່າງໆ ດັ່ງກ່າວ, ບັນຮົບນີ້ ໄດ້ໃຊ້ຫຼັກຕຳລາ ຂອງ "ທິດສະດີ ນິກຊັນ" ຢູ່ປະເທດເຮົາຢ່າງ ຄົບຖ້ວນ ເປັນເທື່ອທຳອິດຄື: "ທະຫານຮາບຂອງກອງທັບ ລູກມື ເຊິ່ງມີກຳລັງພິເສດ ເປັນກອງປະຈັນບານ ບວກກັບ

ພະລາທິການ ແລະ ກຳລັງໄຟ ອັນໃຫຍ່ຫລວງ ຂອງກອງທັບອາກາດ ອາເມລິກາ".

ນະທີ່ນີ້, ພວກຂ້າພະເຈົ້າ ຈຳເປັນຕ້ອງເວົ້າເຖິງ ກ່ອນກັບບົດບາດ ລັກສະນະຂອງ "ກຳລັງພິເສດ" ໃນ "ສົງຄາມພິເສດ" ຂອງອາເມລິກາ ແລະ ຄວາມຈຳເປັນ ທີ່ຈະຕ້ອງລົບລ້າງ ກຳລັງດັ່ງກ່າວຢ່າງສິ້ນເຊີງ.

ເໝືອນດັ່ງ ທີ່ພວກຂ້າພະເຈົ້າ ເຄີຍໄດ້ເວົ້າມາແລ້ວ ໃນຫຼາຍປີມານີ້ ອາເມລິກາ ໄດ້ຂະຫຍາຍ "ກຳລັງພິເສດ" ເລີ່ມແຕ່ ໝວດກອງປຸ້ນ ຂອງຈີນຈາດສ່ວນນ້ອຍ ຢູ່ບາງແຫ່ງ ທີ່ຂຶ້ນກັບ ການຄວບຄຸມ ຂອງ ອາເມລິກາ ແລະ ລູກນີ້. ອາເມລິກາ ໄດ້ໃຊ້ກຳລັງນີ້ ເປັນ "ກຳລັງກອງໂຈນປົດລົ້ຍ", ເຊິ່ງມີຄວາມຊ່ຽວຊານ ໃນການສູ້ຮົບພ້ອມ" ແລະ ໄດ້ສົ່ງກົນກອງຕ່າງໆ ຂອງກຳລັງນີ້ ເລັດລອດເຂົ້າມາ ທຳລາຍເຂດລາວດກາ ຂອງບັນດາກຳລັງຮັກຊາດ. ຕໍ່ກັບອຸບາຍ ກົດຄວາມ ອາລາດບາດໝາງ ລະຫວ່າງຈີນຊາດ, ຈີ້ຈາງຈານຈະ, ບົບບັງຄັບ, ອາເມລິກາ ໄດ້ອອກແຮງ ກຳເອົາ "ກຳລັງພິເສດ" ເພື່ອເອົາເປັນເຄື່ອງມື ອັນສຳຄັນ ຮັບໃຊ້ເຂົ້າກັບ ອັນຍາວນານ ຂອງພວກເຂົາ ຢູ່ປະເທດເຮົາ. ໂດຍຜ່ານອົງການຕ່າງໆ ຂອງ ຊີໄອເອ, ອາເມລິກາໄດ້ກົບຍິນ, ລ້ຽງເກືອ, ປະກອບອາວຸດ ແລະ ບັນຊາກຳລັງນີ້ ໂດຍກົງ. ຊີໄອເອ ໄດ້ຈັດວາງ ພະນັກງານ ທະຫານ ອາເມລິກາ ແລະ ໄທ ເປັນຈຳນວນພັນຄົນ ເຂົ້າເປັນທີ່ປຶກສາ, ເປັນຄູ ອົບຮົມໃຫ້ແກ່ "ກຳລັງພິເສດ" ແລະ ໄດ້ຈັດຕັ້ງ ລະບົບລຳລຽງ ຂົນສົ່ງ ທາງອາກາດ ຈາກປະເທດໄທ ເພື່ອລຳລຽງໃຫ້ແກ່ກຳລັງນີ້. ແຕ່ຫຼາຍປີມານີ້, ຊີໄອເອໄດ້ຕັ້ງ ອົງການປົດລົ້ຍ ທີ່ມີຊື່ວ່າ ທັບກຸຍ-ພິພິທ ຢູ່ອຸດອນ (ປະເທດໄທ) ເພື່ອ ຮັບຜິດຊອບ ການຈັດຕັ້ງ ລຳລຽງ, ບັນຊາກຳລັງພິເສດ ຢູ່ລາວໂດຍກົງ.

ອາເມລິກາໄດ້ເອົາໃຈໃສ່ກໍ່ "ກຳລັງພິເສດ" ຂອງຈີນຈາດລາວສູງ ຢູ່ພາກເໜືອຂອງລາວ ເປັນພິເສດ, ສ້າງກົນກອງເຫຼົ່ານັ້ນ ໃຫ້ເປັນກຳລັງຫຼັກ ຂອງ "ກຳລັງພິເສດ". ເພື່ອແນໃສ່ ຈຸດປະສົງ ດັ່ງກ່າວ, ອາເມລິກາໄດ້ໃຫ້ ນາຍພົນ ແມ້ວ ວາງປາວ ເປັນຜູ້ບັນຊາ ກຳລັງພິເສດ ແລະ ໄດ້ຖອກເທເງິນທອງ ເພື່ອສ້າງຖານທັບ ຊຳທອງ-ລອງແຈ້ງ ໃຫ້ເປັນແຫຼ່ງອັນຕົ້ນຕໍ ຂອງກຳລັງດັ່ງກ່າວ.

ໂດຍເຫັນແຈ້ງ ລັກສະນະສຳຄັນ ຂອງ "ກຳລັງພິເສດ", ອຳນາດການປົກຄອງ ນິກຊັນ ໄດ້ສືບຕໍ່ຄວາມ ພະຍາຍາມ ເພື່ອເພີ່ມທະວີ ກຳລັງດັ່ງກ່າວ ໃຫ້ກາຍເປັນ ເສົາຄ້ຳຂອງ "ສົງຄາມພິເສດ", ໄດ້ໃຊ້ຈ່າຍເຂົ້າ ໃນວຽກ ງານນີ້ ແຕ່ລະປີ ໑໕໐ ເຖິງ ໒໐໐ ລ້ານໂດລາ. ພວກເຂົາໄດ້ຂະຫຍາຍ "ກຳລັງພິເສດ" ຂຶ້ນຢ່າງໄວວາ ເຖິງປະມານ ໒ ໝື່ນຄົນ (ມີບາງໄລຍະ ກໍ່ໄດ້ຂຶ້ນເຖິງ ສີ່ ໝື່ນຄົນ), ຈັດຕັ້ງກອງພັນ ແລະ ກອງພັນໃຫຍ່ ເຄື່ອນທີ່ຈຳນວນໜຶ່ງ ທີ່ ໄດ້ປະກອບ ອາວຸດຢ່າງດີ.

ມັນເປັນອັນຈະແຈ້ງວ່າ "ກຳລັງພິເສດ" ແມ່ນຜະລິດຕະພັນ ອັນພິເສດ ຂອງນະໂຍບາຍຮຸກຮານ ລ່າເມືອງ ຂຶ້ນແບບໃໝ່ ແລະ ຂອງ "ສົງຄາມພິເສດ" ຂອງອາເມລິກາ ຢູ່ປະເທດເຮົາ, ມັນແມ່ນເຄື່ອງມື ທີ່ອັນຕະລາຍ ຂອງນະ ໂຍບາຍ "ໃຊ້ຄົນທ້ອງຖິ່ນ ຕີຄົນທ້ອງຖິ່ນ", "ເອົາຄົນລາວ ຂ້າຄົນລາວ" ຂອງ "ທິດສະດີ ນິກຊັນ", ມັນຍັງແມ່ນ ກົນ ອຸບາຍ ອັນຍາວນານ ຂອງນະໂຍບາຍ ແບ່ງແຍກຈີນຈາດ ຂອງອາເມລິກາ ຢູ່ປະເທດເຮົາ.

ຍ້ອນເຫດນັ້ນ, ບັນຫາທີ່ໄດ້ວາງອອກແມ່ນ: ຢຸດເຊົາການແຊກແຊງ ແລະ ຮຸກຮານ ພ້ອມດ້ວຍທຸກການຕິດ ພັນ ທາງທະຫານ ຂອງອາເມລິກາ, ຢຸດເຊົາສົງຄາມຮຸກຮານ ຂອງອາເມລິກາ ຢູ່ປະເທດເຮົາ, ພ້ອມກັນນັ້ນ ກໍ່ຕ້ອງລົບ ລ້າງ "ກຳລັງພິເສດ" ຢ່າງສິ້ນເຊີງ. ຖ້າບໍ່ເຮັດເຊັ່ນນັ້ນ ມັນກໍ່ມີແຕ່ຈະເປີດ ຊ່ອງທາງໃຫ້ ອາເມລິກາ ສືບຕໍ່ການ ຫັນ ທາງທະຫານ ແລະ ປະຕິບັດກົນອຸບາຍຮຸກຮານ ກໍ່ສົງຄາມ ຢູ່ປະເທດເຮົາຕໍ່ໄປ.

ຫວ່າງແລ້ວນີ້, ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍພວກທ່ານ ກໍ່ໄດ້ກ່າວເຖິງບັນດາ "ລົບລ້າງກໍາລັງພິເສດ", ເຮັດຄືວ່າ "ກໍາລັງພິເສດ" ແມ່ນຂຶ້ນກັບ ສິດອໍານາດ ຂອງພວກທ່ານ. ສິ່ງທີ່ພວກທ່ານ ກ່າວມານັ້ນ ບໍ່ອາດຈະເຮັດໃຫ້ ຜູ້ຄົນທັງຫລາຍ ເຊື່ອວ່າ ເປັນຄວາມຈິງໄດ້. ພວກທ່ານ ຍັງບໍ່ກ້າຮັບຮູ້ ຢ່າງເປີດເຜີຍວ່າ "ກໍາລັງພິເສດ" ແມ່ນຂຶ້ນກັບ ອາເມລິກາ ເຊິ່ງແມ່ນ ອາເມລິກາເອງ ເປັນຜູ້ຈັດຕັ້ງ, ລ້ຽງເກືອ ແລະ ບັນຊາໂດຍກົງ. ບັນຫາມີຢູ່ວ່າ ອາເມລິກາ ຈະຍອມລົບລ້າງ "ກໍາລັງພິເສດ" ຫລືບໍ່ ? ຫລື ວ່າທາງປາກ ພວກທ່ານເວົ້າວ່າ ຈະລົບລ້າງ, ແຕ່ໃນຕົວຈິງ ອາເມລິກາ ຍັງຄົງຮັກສາມັນໄວ້ ພາຍໃຕ້ຮູບການ ປົກປິດຕ່າງກັນ. ຕາມບົດຮຽນຜ່ານມາ, ອາເມລິກາ ໄດ້ມີລ່ຽມລາຍ ປົກປິດ ອັນເລິກແລບ ເພື່ອຮັກສາ ກໍາລັງດັ່ງກ່າວໄວ້.

ໃນບັ້ນຮົບ "ພູກູດ" ປີ ໑໙໖໙-໗໐, "ກໍາລັງພິເສດ" ເຊິ່ງແມ່ນ ກໍາລັງປະຈັນບານ ໄດ້ຖືກຍາດຄ້ອນ ອັນໜັກໜ່ວງ ຂອງບັນດາກໍາລັງຮັກຊາດ. ເພື່ອກອບກູ້ເອົາ "ກໍາລັງພິເສດ" ອອກຈາກ ໄພອັນຕະລາຍ, ໃນຕອນທ້າຍ ຂອງບັ້ນຮົບນີ້, ນິກຊັນ ໄດ້ນໍາເອົາ ກົມກອງທະຫານຮາບ ແລະ ທະຫານປືນໃຫຍ່ໄທ ຈໍານວນໜຶ່ງ ຈາກປະເທດໄທ ເຂົ້າມາ ທົ່ງໄຫຫີນ-ຊຽງຂວາງ. ມັນແມ່ນ ການເປີດສາກໃຫ້ ອາເມລິກາ ນໍາເອົາກອງທະຫານຫລວງໄທ ເຂົ້າຮ່ວມຮົບ ຢູ່ປະເທດເຮົາ ຢ່າງຫລວງຫລາຍ. ເພື່ອເປີດທາງໃຫ້ ແກ່ການກະທໍາດັ່ງກ່າວ, ໃນເດືອນ ມີ ປີ ໑໙໗໐, ນິກຊັນ ໄດ້ປະກາດວ່າ: "ຍອມມີການພົວພັນ ທາງດ້ານເຊື້ອຊາດ ຢູ່ຕາມເຂດຊາຍແດນ ໄທ ແລະ ລາວ, ແຕ່ດົນນານມາແລ້ວ ໄທ ໄດ້ມີການພົວພັນ ຢ່າງແໜ້ນແຟ້ນກັບລາວ ແລະ ພວມເຂົ້າຮ່ວມ ສູ້ຮົບຢູ່ທີ່ນັ້ນ".

ຫລັງຈາກຖືກ ປະລາໄຊໃນບັ້ນຮົບ "ພູກູດ" ຢູ່ພາກເໜືອຂອງລາວ ໜຶ່ງປີ, ນິກຊັນໄດ້ໃຊ້ ກອງທະຫານ ຫຸ່ນໄຊງ່ອນ ເຊິ່ງເປັນກອງປະຈັນບານ ຂອງອາເມລິກາ ໃນສະໜາມຮົບ ອິນດູຈີນ ເພື່ອເປີດບັ້ນບຸກໂຈມຕີ ຍຸດທະສາດ ເທື່ອທີສອງ ເຂົ້າໃນພາກໃຕ້ ຂອງລາວ. ບັ້ນຮົບນີ້ ໄດ້ໃສ່ຊື່ວ່າ "ລາມເຊີນ - ໗໑໙". ປະຊາຊົນເຮົາກໍດີ ປະຊາຊົນທົ່ວໂລກ ໄດ້ຮູ້ດີ ກ່ຽວກັບສະໜາມຮົບ ອັນໃຫຍ່ຫລວງ ຂອງການ ສ່ຽງໄພທາງການທະຫານດັ່ງກ່າວ ຂອງອາເມລິກາ ແລະ ຫຸ່ນໄຊງ່ອນ. ມັນແມ່ນການຮຸກຮານ ອັນແທ້ຈິງ ເຂົ້າໃນດິນແດນ ຂອງປະເທດເຮົາ ໂດຍໃຊ້ ກໍາລັງທະຫານ ອາເມລິກາ ແລະ ຫຸ່ນໄຊງ່ອນ ນັບເປັນໝື່ນໆຄົນ, ໃຊ້ກໍາລັງທັບອາກາດ, ທະຫານປືນໃຫຍ່, ລົດຫຸ້ມເກາະ ແລະ ລົດຕັງ ອັນມະຫາສານ ແລະ ລວມສຸມ ເຂົ້າໃນບັ້ນຮົບບັ້ນໜຶ່ງ ໃນສະໜາມຮົບໜຶ່ງ. ຕໍ່ໜ້າການຮຸກຮານ ແບບອຶກກະທຶກນຶກນອງ, ເປີດເຜີຍ ແລະ ເປີດແປນ ຂອງອາເມລິກາ ແລະ ຫຸ່ນໄຊງ່ອນ, ພວກທ່ານ ບໍ່ເຫັນມີທ່າທີ ແລະ ການກະທໍາໃດ ທີ່ສະແດງ ວ່າ ຕົບມືອໍານາດ ຈະທໍປະໄຕ, ມີເອກະລາດ ເໝືອນດັ່ງພວກທ່ານເຄີຍ ອວດອ້າງມາ. ແຕ່ ກົງກັນຂ້າມ ຝ່າຍພວກທ່ານ ມີແຕ່ປະຕິບັດ ຕາມຄໍາສັ່ງຂອງ ອາເມລິກາ, ເປີດບັ້ນເຄື່ອນທັບສົມທົບຕ່າງໆ ລວມມີ ທະຫານຝ່າຍຂວາ, ທະຫານ ຂອງ "ກໍາລັງພິເສດ" ແລະ ທະຫານຫຼວງໄທ ເພື່ອບຸກໂຈມຕີເຂົ້າເຂດກວດກາ ຂອງບັນດາກໍາລັງຮັກຊາດ ຢູ່ພາກໃຕ້ ຂອງລາວ.

ພາຍຫຼັງທີ່ຖືກປະລາໄຊ ໃນສອງບັ້ນຮົບ ຍຸດທະສາດໃຫຍ່ດັ່ງກ່າວ, ນິກຊັນ ແລະ ພວກລູກມື ໄດ້ສືບຕໍ່ ເປີດບັ້ນເຄື່ອນທັບ ບຸກໂຈມຕີ ຕ່າງໆ ໃນລະດູຝົນ ແລະ ລະດູແລ້ງ ຂອງປີ ໑໙໗໑-໗໒. ເຖິງວ່າ ການຕ່າວໂຈມຕີ ເປັນ ພາກສ່ວນກໍຕາມ, ແຕ່ມັນກໍມີຂະໜາດ ແລະ ຄວາມດຸເດືອດພໍສົມຄວນ.

ສິ່ງທີ່ຄວນເອົາໃຈໃສ່ ກໍແມ່ນບັ້ນເຄື່ອນທັບ ທີ່ຍືດເຍື້ອ ແຕ່ລະດູຝົນປີ ໑໙໗໑ ຮອດ ລະດູແລ້ງປີ ໑໙໗໑-໗໒ ບຸກໂຈມຕີ ບຸກຍຶດເຂດທົ່ງໄຫຫີນ - ຊຽງຂວາງ - ເມືອງສຸຍ ດ້ວຍກໍາລັງພົມທັບ ມີຜີ ກອງພັນ ຂອງ ທະຫານຫຼວງ ໄທ ແລະ "ກໍາລັງພິເສດ" ວັງປາວ ເຊິ່ງໃນນັ້ນ ມີທະຫານຮາບ ແລະ ທະຫານປືນໃຫຍ່ໄທ ແຕ່ ໑໑ ຫາ ໑໕ ກອງພັນ ເປັນແກນສານ. ໃນບັ້ນຮົບນີ້ ບັນດາກົມກອງຂອງທະຫານຫຼວງໄທ ໄດ້ເປັນກໍາລັງຕົ້ນຕໍ ໃນການບຸກລຸກ ກໍດີ ໃນການ

ຈ້ວທ່າ. ຫຼັງຈາກຍຶດທົ່ງໄຫຫີນໄດ້ແລ້ວ, ທະຫານປືນໃຫຍ່ໄທ ທີ່ປະກອບດ້ວຍປືນໃຫຍ່ ໑໐໕ ແລະ ໑໕໕ ມມ ໄດ້ຕັ້ງເປັນກຸ່ມປືນໃຫຍ່ຢູ່ແຫ່ງນີ້. ບັ້ນເຄື່ອນທັບນີ້ ກີລົບນຮົບ "ກູກຽດ" ລ້ວນແຕ່ໄດ້ຮັບການ ຄຸ້ມກັນ ຢ່າງໃຫຍ່ຫຼວງ ຂອງເຮືອບິນ ອາເມລິກາ ບັນທຸກເຮືອບິນ ຍຸດທະສາດ ບີ-໕໒ ແລະ ໄດ້ກໍ່ຄວາມເສຍຫາຍ ອັນຫຼວງຫຼາຍ ເໝືອນກັນ.

ສະເພາະທະຫານໄທ ໄດ້ກໍ່ໂທດກຳ ອັນປ່າເຖື່ອນ ຕໍ່ປະຊາຊົນເຮົາ. ເມື່ອໄປເຖິງໃສ ພວກເຂົາກໍ່ໄດ້ ເຜົາຜານ ເຮືອນຊານບ້ານຊ່ອງ, ຂ້າຟັນລົ້ມແຫງ ແລະ ປຸ້ນສະດົມ ປະຊາຊົນເຮົາ.

ແຕ່ທ້າຍປີ ໑໙໗໒ ເປັນຕົ້ນມາ, ໃນເວລາທີ່ ຄະນະຜູ້ແທນ ບັນດາກຳລັງຮັກຊາດ ພວມເຂົ້າຮ່ວມກອງປະຊຸມ ເຈລະຈາຢູ່ທີ່ນີ້, ອາເມລິກາ ແລະ ຝ່າຍຂວາຈັນ ໄດ້ເປີດບັ້ນເຄື່ອນທັບ ທີ່ເອີ້ນວ່າ "ຕູລາ" ບຸກຍຶດ ເຂດຈຸດຮວງຂວາງ-ທົ່ງໄຫຫີນ ອີກເທື່ອໃໝ່ ດ້ວຍການໃຊ້ກຳລັງປະສົມ ຂອງທະຫານຝ່າຍຂວາ, ທະຫານຂອງ "ກຳລັງພິເສດ" ວາງປາວ ແລະ ທະຫານຫຼວງໄທ ຈຳນວນ ໗໐ ກອງພັນ ເຊິ່ງໃນນັ້ນ ມີທະຫານຮາບ ແລະ ທະຫານປືນໃຫຍ່ໄທ ໑໓ ກອງພັນ. ໃນເວລາດຽວກັນນັ້ນ, ພວກເຂົາກໍ່ໄດ້ດຳເນີນບັ້ນເຄື່ອນທັບທີ່ໃສ່ຊື່ວ່າ "ສິງຄຳ" ບຸກໂຈມຕີເຂົ້າເຂດກວດກາ ຂອງບັນດາ ກຳລັງຮັກຊາດ ຢູ່ເຂດໃຕ້ຂອງລາວ ດ້ວຍກຳລັງທະຫານຝ່າຍຂວາ, ທະຫານຂອງ "ກຳລັງພິເສດ" ແລະ ທະຫານຫຼວງ ໄທ ຈຳນວນເກືອບ ໓໐ ກອງພັນ ເຊິ່ງໃນນັ້ນ ມີທະຫານໄທ ໗ ກອງພັນ.

ສິ່ງທີ່ຄວນເນັ້ນໜັກ ແມ່ນການມີ ທະຫານຫຼວງໄທ ທີ່ມີບົດບາດນັບມື້ນັບສຳຄັນ ນັບມື້ນັບຫຼວງຫຼາຍ ໃນ"ສົງຄາມພິເສດ ເພີ່ມທະວີ" ຂອງ ນິກເຊິນ ໃນປະເທດເຮົາ. ການນຳເອົາທະຫານໄທ ເຂົ້າສູ້ຮົບໂດຍກົງ ໃນສົງຄາມໜ້າດິນ ຢູ່ໃນປະເທດເຮົານັ້ນ ແມ່ນນອນຢູ່ໃນ ເລ່ກົນ ຂອງ ນິກເຊິນ ທີ່ໝູນໃຊ້ບັ້ນເກີດ ແຫ່ງກຳລັງຄົນ ຂອງໄທ ເພື່ອຮັບໃຊ້ນະໂຍບາຍ "ໃຊ້ຄົນອາຊີ ຂ້າຄົນອາຊີ" ຂອງ "ທິດສະດີ ນິກເຊິນ".

ໃນທ້າຍປີ ໑໙໗໐, ທະຫານຫຼວງໄທຢູ່ລາວ ມີປະມານ ໑໘.໐໐໐ ຄົນ, ຈັດຕັ້ງເປັນ ໑໓ ກອງພັນທະຫານຮາບ ແລະ ທະຫານປືນໃຫຍ່. ມາເຖິງປີ ໑໙໗໑, ທະຫານຫຼວງໄທ ຢູ່ລາວໄດ້ເພີ່ມຂຶ້ນເຖິງ ໒໐.໐໐໐ ຄົນ ໃນຈຳນວນ ໒໓ ກອງພັນ ທະຫານຮາບ ແລະ ທະຫານປືນໃຫຍ່. ໃນມື້ນີ້, ທະຫານຫຼວງໄທ ຢູ່ລາວມີ ໓໒ ກອງພັນ ທະຫານປືນໃຫຍ່ ແລະ ທະຫານຮາບ ໂດຍມີຈຳນວນພົນເກືອບ ໓໐.໐໐໐ ຄົນ, ໃນນັ້ນມີ ທະຫານຮາບ ແລະ ທະຫານປືນໃຫຍ່ໄທ ໑໐ ກວ່າກອງພັນ ເປັນປະຈຳຢູ່ ຊຳທອງ-ລອງແຈ້ງ ເພື່ອເຂົ້າຮ່ວມໃນການ ປົກປັກຮັກສາແຫຼ່ງ "ກຳລັງພິເສດ" ວາງປາວ ໃນແຫ່ງນີ້. ສ່ວນກອງພັນອື່ນໆ ແມ່ນຕັ້ງຢູ່ບາງແຫ່ງ ໃນພາກເໜືອ ແລະ ພາກໃຕ້ຂອງລາວ ທີ່ພວກຂ້າພະເຈົ້າ ໄດ້ມີ ເອກະສານ ແລະ ຫຼັກຖານໃນກຳມື ຢ່າງພຽງພໍ. ມີນາຍພົນໄທ ຜູ້ໜຶ່ງມາຢູ່ລາວ ເພື່ອບັນຊາທະຫານຫຼວງໄທເຫຼົ່ານັ້ນໂດຍກົງ.

ປະຈຸບັນ, ພວກກຳອຳນາດ ປະຕິການ ບາງກອກ ໄດ້ກຽມທະຫານຫຼວງໄທ ຢ່າງໜ້ອຍ ໑໕.໐໐໐ ຄົນຕື່ມ ເພື່ອກຽມໃຫ້ ພວກກຳອຳນາດ ນິກເຊິນ ນຳເຂົ້າມາລາວ. ເມື່ອສະພາບການທາກຮຽກຮ້ອງ, ນິກເຊິນ ອາດຈະເພີ່ມຈຳນວນພົນ ຂອງທະຫານຫຼວງໄທ ຢູ່ປະເທດເຮົາ ຂຶ້ນເຖິງ ໕໕.໐໐໐ ຄົນ ໄດ້ຢ່າງງ່າຍໄວ.

ເມື່ອເປັນເຊັ່ນນັ້ນ, ນິກເຊິນ ໄດ້ສືບຕໍ່, ພວມສືບຕໍ່ ແລະ ຈະສືບຕໍ່ນຳເອົາທະຫານຫຼວງໄທ ເຂົ້າມາປະເທດເຮົາ, ໃຊ້ກຳລັງນີ້ ເປັນກຳລັງແຊກແຊງ ຂອງຄົນອາຊີ ເພື່ອສູ້ຮົບ ຕາງໜ້າອາເມລິກາ ຢູ່ປະເທດເຮົາ, ເປັນກຳລັງສຳຮອງ ຍຸດທະສາດໃໝ່ ທັງເພື່ອເພີ່ມຕື່ມ ຊ່ອຍຊູກອງທະຫານ ລູກມືຝ່າຍຂວາຈັນ ແລະ ທັງປົກປັກຮັກສາທີ່ຕັ້ງ ຍຸດທະສາດຕ່າງໆ, ພ້ອມກັນນັ້ນ ກໍ່ເປັນກຳລັງແກນສານ, ເປັນກຳລັງປະຈົນບານ ຢູ່ສະໜາມຮົບ ລາວ.

ອາເມລິກາ ແລະ ພວກກຳອຳນາດປະຕິການ ບາງກອກ ໄດ້ຈັດຕັ້ງກົມກອງທະຫານຫຼວງໄທ ເພື່ອນຳເຂົ້າມາ ໃນປະເທດເຮົາ ຄືວິທີຍົກຍ້າຍ ນາຍທະຫານຈົນສູງ ຈົນຕໍ່າ ຂອງກົມກອງປະຈຳການຕ່າງໆ ຂອງໄທ ມາເປັນກອງ

ບັນຈາແລ້ວກັບເອົາທະຫານ ຢູ່ກົມກອງອື່ນໆ ມາປະກອບເປັນກົມກອງໃໝ່. ນອກຈາກນັ້ນ, ພວກເຂົາໄດ້ຮຽກເອົາ ນັກຮົບ ແລະ ນາຍທະຫານເກົ່າມາປະກອບເຂົ້າໃນບັນດາ ກົມກອງດັ່ງກ່າວ. ບັນດາກົມກອງທະຫານໄທ ທີ່ເຂົ້າມາຮ່ວມຮົບຢູ່ປະເທດເຮົາ ແມ່ນໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ. ເມື່ອມາເຖິງລາວແລ້ວ, ພວກນາຍທະຫານດັ່ງກ່າວ ກໍໄດ້ຮັບການເລື່ອນຊັ້ນຂຶ້ນອີກຊັ້ນໜຶ່ງ, ເງິນເດືອນ ແລະ ເບ້ຍບຳລຸງພິເສດ ຂອງພວກທະຫານເຫຼົ່ານັ້ນ ຖ້າປຽບໃສ່ລາງ ທະຫານທີ່ຢູ່ກັບປະເທດ ແມ່ນໄດ້ລື່ນ ໒໐ ເຖິງ ໓໐ ເທົ່າ... ທະຫານຫຼວງໄທເຂົ້າມາລາວ ສ່ວນໜຶ່ງໄດ້ສັບຊ້ອນເຂົ້າໃນ ກອງທະຫານຝ່າຍຂວາ ແລະ ກຳລັງພິເສດ ເພື່ອເພີ່ມຈຳນວນພົນ ໃຫ້ກົມກອງເຫຼົ່ານັ້ນ, ອີກພາກສ່ວນໜຶ່ງ ແມ່ນໄດ້ຮັກສາໄວ້ ຕາມເດີມ ເພື່ອໃຊ້ເປັນກຳລັງໜູນ, ແຕ່ວ່າ ໄດ້ໃສ່ເຄື່ອງໝາຍ ຂອງທະຫານຝ່າຍຂວາວຽງຈັນ. ພາຍໃຕ້ຮູບການປົກປິດດັ່ງກ່າວ ພວກເຂົາເອີ້ນທະຫານຫຼວງໄທ ທີ່ເຂົ້າມາລາວນັ້ນວ່າ "ພວກອາສາສະໝັກ".

ໃນເວລາທີ່ຜ່ານມາ, ອາເມລິກາ ແລະ ພວກກຳອຳນາດ ປະຕິການ ບາງກອກ ກໍຄື ສະເດັດເຈົ້າ ສຸວັນນະພູມາ ແລະ ຝ່າຍພວກທ່ານ, ດ້ານໜຶ່ງ ຈຳຕ້ອງຮັບຮູ້ວ່າ ມີທະຫານໄທຢູ່ໃນປະເທດເຮົາ, ວ່າ ອາເມລິກາ ໄດ້ໃຫ້ "ການຊ່ວຍເຫຼືອ" ແກ່ພວກທະຫານເຫຼົ່ານັ້ນ ແລະ ໄທເອງກໍໄດ້ "ຊ່ວຍເຫຼືອ" ລາວຢ່າງຕັ້ງໜ້າ, ແຕ່ອີກດ້ານໜຶ່ງ ຈຳພັດປົດປ່າຍວ່າ ທະຫານໄທ ທີ່ມີຢູ່ລາວນັ້ນ ບໍ່ແມ່ນທະຫານຫຼວງ, ມັນເປັນພຽງແຕ່ ພວກອາສາສະໝັກ ທີ່ມີສັນຊາດໄທ ເຊື້ອຊາດລາວ, ໂດຍແມ່ນ ອຳນາດການປົກຄອງ ວຽງຈັນຈ້າງ ແລະ ບັນຈາ, ອາການຊ່ວຍເຫຼືອ ຂອງ ອາເມລິກາ ເປັນພຽງແຕ່ຊ່ວຍເຫຼືອໃຫ້ພວກ ອາສາສະໝັກເຫຼົ່ານັ້ນ.

ທັງໝົດ ທີ່ພວກຂ້າພະເຈົ້າ ໄດ້ຍົກຂຶ້ນ ໃນວາລະປະຊຸມ ຄັ້ງກ່ອນໆ ກໍຄື ໃນຕອນ ກ່ຽວກັບທະຫານຫຼວງໄທ ຢູ່ໃນປະເທດເຮົາ ປະຈຸບັນ ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງ ວ່າທີ່ເອີ້ນວ່າ "ພວກອາສາສະໝັກ ທີ່ມີສັນຊາດໄທ ທີ່ອຳນາດການປົກຄອງວຽງຈັນຈ້າງ ແລະ ບັນຈາ" ນັ້ນເປັນພຽງແຕ່ ເປັນການຫຼອກລວງ ແລະ ເປັນໜ້າປາກທົວເທົ່ານັ້ນ. ພວກຂ້າພະເຈົ້າຂໍຢືນຢັນອີກເທື່ອໜຶ່ງວ່າ ກຳລັງເຫຼົ່ານັ້ນ ແມ່ນກຳລັງທະຫານຫຼວງ, ແມ່ນກອງທະຫານແຈກແຈງ ຂອງອາເມລິກາ ທີ່ປະກອບດ້ວຍ ດິນອາຈີ. ເພື່ອຢືນຢັນໃຫ້ ສິ່ງດັ່ງກ່າວຕື່ມອີກ, ພວກຂ້າພະເຈົ້າ ຂໍຍົກບາງຕອນໃນລາຍງານກ່ຽວກັບບັນຫານີ້ ຂອງ "ອານຸກຳມະການ ກ່ຽວກັບສັນຍາຄວາມສະຫງົບ ແລະ ຄຳໝັ້ນສັນຍາ ຂອງອາເມລິກາ ກັບຕ່າງປະເທດ ທີ່ຂຶ້ນກັບ ຄະນະກຳມະການຕ່າງປະເທດ ຂອງສະພາສູງ ອາເມລິກາ" ທີ່ໄດ້ປະກາດ ໃນວັນທີ ໗/໕/໗໒. ລາຍງານນັ້ນ ໄດ້ໃຫ້ຮູ້ວ່າ "ແຕ່ລະປີ ອາເມລິກາຕ້ອງໃຊ້ຈ່າຍ ປະມານ ໑໐໐ ລ້ານໂດລາ ເພື່ອລ້ຽງເກືອທະຫານຫຼວງໄທ ໒໕ ກອງພັນ ຢູ່ລາວ", ແລະ ສະຫຼຸບວ່າ "ຂໍ້ບັນຍັດ ຂອງລັດຖະສະພາ ທີ່ຫ້າມບໍ່ໃຫ້ ອາເມລິກາ ອະນຸມັດເງິນໃຊ້ຈ່າຍໃຫ້ແກ່ກອງທະຫານປະເທດທີ່ ມີ ຢູ່ລາວນັ້ນ ໄດ້ຖືກຝ່າຍບໍລິຫານໃຊ້ເລ້ກົນ ຫຼອກລວງ ແລະ ລະເມີດ.

ຫວ່າງແລ້ວນີ້, ສະເດັດເຈົ້າ ສຸວັນນະພູມາ ໄດ້ປະກາດວ່າ "ທະຫານຮັບຈ້າງໄທ ຈະໄດ້ຖືກສົ່ງກັບຄືນປະເທດໄທ ພາຍຫຼັງທີ່ສົງຄາມຢູ່ລາວ ໄດ້ຢຸດເຊົາລົງ", ເພິ່ນເຮັດຄືວ່າ ບັນຫານີ້ ແມ່ນຂຶ້ນຢູ່ກັບ ສິດອຳນາດຂອງເພິ່ນ ແລະ ມັນບໍ່ແມ່ນ ບັນຫາທີ່ຈະຕ້ອງຖືກຖຽງກັນອີກ. ຕາມຄວາມຈິງແລ້ວ, ບັນຫາມີຢູ່ວ່າ ອາເມລິກາຈະຍອມປະລະ ກົນອຸບາຍໃຊ້ກອງທະຫານ ແຈກແຈງ ເຊິ່ງປະກອບດ້ວຍ ດິນອາຈີເຫຼົ່ານີ້ ເພື່ອຢຶດເອົາ ພາກສ່ວນໜຶ່ງ ຂອງ ປະເທດເຮົາໄວ້ຢ່າງຍາວນານໄດ້ຫຼືບໍ່ ? ຈະຍອມຖອນທະຫານຫຼວງໄທ ອອກຈາກປະເທດເຮົາ ໝົດ ຫຼືບໍ່ ? ຫຼື ອາຫາງປາກພວກທ່ານເວົ້າວ່າ ຈະເອົາອອກຈາກລາວ, ແຕ່ພາຍໃນ ອາເມລິກາ ແລະ ຝ່າຍພວກທ່ານ ຊ້ຳພັດສວຍໃຊ້ການຄ້າຍຄືກັນ ທາງດ້ານເຊື້ອຊາດ ລະຫວ່າງດິນໄທ ແລະ ລາວ ເພື່ອຮັກສາກຳລັງດັ່ງກ່າວ ໄວ້ໃນປະເທດເຮົາຢ່າງຍາວນານ ດ້ວຍວິທີສັບຊ້ອນທັງໝົດຫຼື ແຕ່ລະພາກສ່ວນ ຂອງກຳລັງນັ້ນ ເຂົ້າໃນກອງທັບວຽງຈັນ ຫຼືອາດດ້ວຍເລ້ກົນ ປົກປິດ ອື່ນໆ.

ບັນດາກຳລັງຮັກຊາດ ເດັດດ່ຽວທວງໃຫ້ ອາເມລິກາ ແລະ ຝ່າຍພວກທ່ານ ຕ້ອງຖອນກຳລັງ ຂອງ ໄທ ອອກຈາກລາວໃຫ້ໝົດ.

໓/- ພາຍໃຕ້ ອຳນາດການປົກຄອງ ນິກເຊິນ, ສົງຄາມດ້ວຍກອງທັບອາກາດ ຂອງອາເມລິກາ ຢູ່ປະເທດເຮົາ ໄດ້ມີລັກສະນະສົງຄາມລ້າງຜານ.

ຕົ້ນປີ ໑໙໗໑, ນິກເຊິນ ໄດ້ປະກາດວ່າ "ຂ້າພະເຈົ້າ ຈະບໍ່ຈຳກັດ ໃນການໃຊ້ກອງທັບ ອາກາດ" (ຢູ່ອິນດູຈີນ). ນັ້ນກໍແມ່ນແນວທາງການກະທຳຂອງ ນິກເຊິນ ໃນສົງຄາມ ດ້ວຍກອງທັບອາກາດ ຢູ່ປະເທດເຮົາ ນັບແຕ່ ເມື່ອເຂົາເລີ້ມເຂົ້າ ກຳອຳນາດໃນທຳນຽບຂາວ.

ເລີ່ມແຕ່ ນິກເຊິນ ຂຶ້ນກຳອຳນາດມາ, ສົງຄາມດ້ວຍກອງທັບອາກາດ ອາເມລິກາ ຢູ່ປະເທດເຮົາ ໄດ້ແບ່ງອອກເປັນສອງຂັ້ນ, ຖິ້ມລະເບີດຢ່າງກວ້າງຂວາງ ແລະ ລອບຄອບ: ໜຶ່ງ- ການຖິ້ມລະເບີດລົງໃສ່ ເຂດປົດປ່ອຍ ຢູ່ພາກເໜືອຂອງລາວ ທີ່ເອີ້ນວ່າ "ກະຖິ້ງກົ້ງ" ( Barrol Roll ) ໂດຍແມ່ນກອງບັນຊາການ ຂອງກອງທັບອາກາດ ທີ ໗ ເປັນຜູ້ບັນຊາ. ສອງ- ການຖິ້ມລະເບີດ ລົງໃສ່ເຂດປົດປ່ອຍ ຢູ່ພາກໃຕ້ຂອງລາວ ທີ່ເອີ້ນວ່າ "ເສືອເຫຼັກ"( Steel Tiger ) ໂດຍແມ່ນກອງບັນຊາການ ຂອງອາເມລິກາຢູ່ ໄຊ່ງ່ອນ ເປັນຜູ້ບັນຊາ.

ເຮືອບິນທຸກຊະນິດ ເກືອບທັງໝົດ ນັບທັງເຮືອບິນ ຍຸດທະສາດ ບ-໕໒ ຂອງກອງທັບອາກາດ ອັນໃຫຍ່ຫຼວງຂອງອາເມລິກາ ຢູ່ອາຊີ ອາຄະເນ ແລະ ຢູ່ມະຫາສະມຸດ ປາຊີຟິກ, ຢູ່ຖານທັບຕ່າງໆ ທີ່ປະເທດໄທ, ຫວຽດນາມໃຕ້, ເກາະກວາມ, ໂອກີນາວາ ແລະ ກອງທັບເຮືອທີ ໗ ໄດ້ຖືກນຳມາໃຊ້ ເຂົ້າໃນສອງຂັ້ນຖິ້ມລະເບີດນີ້. ບ່ອນໃນເວລາໃດ ກໍມີພະນັກງານ ທະຫານອາກາດ ອາເມລິກາ ປະມານ ໕໐ ພັນຄົນ (ຄິດໄລ່ເຖິງປີ ໑໙໗໐) ທີ່ຢູ່ໃນຖານທັບດັ່ງກ່າວ ໄດ້ເຂົ້າຮ່ວມໃນສົງຄາມ ດ້ວຍກອງທັບອາກາດ ຢູ່ປະເທດລາວເຮົາ.

ຈຳນວນລູກລະເບີດທີ່ ອາເມລິກາ ໄດ້ຖິ້ມລົງໃສ່ເຂດປົດປ່ອຍ ຂອງລາວໃນ ໓ ປີ ຕົ້ນຂອງອຳນາດການປົກຄອງ ນິກເຊິນ ໄດ້ຂຶ້ນເຖິງເກືອບ ໓ ລ້ານໂຕນ ເຊິ່ງເທົ່າທຽມກັບຄວາມແຮງ ຂອງລະເບີດປະລາມະນູ ໑໕໐ ໜ່ວຍ ຊະນິດທີ່ຖິ້ມລົງໃສ່ ຮີໂຣຊີມາ ໃນປີ ໑໙໔໕, ຄິດສະເລ່ຍແລ້ວ ແຕ່ລະກິໂລແມັດ ມົນທົນຂອງ ເຂດປົດປ່ອຍລາວ ຕ້ອງໄດ້ຮັບລູກລະເບີດ ຂອງ ນິກເຊິນ ເກືອບ ໑ ໂຕນ, ແຕ່ລະຄົນ ໃນເຂດນີ້ ຕ້ອງໄດ້ຮັບ ໒ ໂຕນ.

ແຕ່ລະປີ ອຳນາດການປົກຄອງ ນິກເຊິນ ໄດ້ໃຊ້ຈ່າຍເຂົ້າໃນການຖິ້ມລະເບີດດັ່ງກ່າວ ໒ ຕື້ໂດລາ ອາເມລິກາ (ຄິດສະເລ່ຍໃສ່ແຕ່ລະຄົນ ໃນເຂດປົດປ່ອຍແມ່ນ ໄດ້ຮັບ ປະມານ ໑.໓໐໐ ໂດລາຕໍ່ປີ), ການໃຊ້ຈ່າຍເຂົ້າໃນສົງຄາມ ດ້ວຍກອງທັບອາກາດ ຂອງອາເມລິກາຢູ່ລາວ ທັງແຕ່ໄດ້ເລີ່ມຕົ້ນມາ ມີກວ່າ ໑໐ ຕື້ໂດລາ.

ການຖິ້ມລະເບີດ ເພີ່ມທະວີຂອງ ນິກເຊິນ ໃນບໍ່ເທົ່າໃດ ປີມານີ້ ໄດ້ເຮັດໃຫ້ສົງຄາມ ດ້ວຍກອງທັບອາກາດ ອາເມລິກາ ກາຍເປັນສົງຄາມ ທີ່ສິ້ນເປືອງຫຼາຍທີ່ສຸດ ໃນປະຫວັດສາດ ແລະ ໄດ້ເຮັດໃຫ້ລາວ ກາຍເປັນບ່ອນທີ່ຖືກຖິ້ມລະເບີດຫຼາຍກວ່າເພື່ອນ ໃນໂລກ.

ການລ້າງຜານ ຂອງສົງຄາມ ດ້ວຍກອງທັບອາກາດດັ່ງກ່າວ ໄດ້ເພີ່ມທະວີຂຶ້ນ ພ້ອມກັນກັບຄວາມຮ້າຍແຮງ ຂອງມັນ ເພື່ອທຳລາຍໃຫ້ໄດ້ຫຼາຍທີ່ສຸດ, ເຮືອບິນຂອງອາເມລິກາ ໄດ້ດຳເນີນ ບັນຖິ້ມລະເບີດ "ຢ່າງໜາແໜ້ນ ແລະ ລອບຄອບ" (ແບບ " saturation "), ຖິ້ມລະເບີດແບບ "ໝາກະດານ" ( en quadrillago ), ແບບ "ປູພົມ" ( en tapis ), ແບບ "ຖາງໃຫ້ກ້ຽງ" ລົງໃສ່ເຂດທີ່ມີພົນລະເມືອງ ໜາແໜ້ນ, ໃສ່ພື້ນຖານເສດຖະກິດ, ໃສ່ໄຮ່ນາ ຮົ້ວສວນ ຕະຫຼອດທັງບ່ອນສອກຫຼີກ ຢູ່ໃນປ່າ ແລະ ບ່ອນຫຼົບໄພ ຂອງປະຊາຊົນ. ເຮືອບິນອາເມລິກາ ຍັງໄດ້ຖິ້ມລະເບີດລົງໃສ່ພື້ນຖານ ວັດທະນະທຳ, ສາທາລະນະສຸກ ແລະ ອື່ນໆ ຕະຫຼອດທັງ[illegible]ແລະ ດິນ, ຖິ້ມລະເບີດລົງໃສ່ເປົ້າໝາຍ

ອັນເກົ່າ ຕົວຫຼາຍເທື່ອ ຫຼາຍເທີ່ນ ຢ່າງຮ້າຍແຮງ ລະບຸບຕິດ, ແກ່ຍຶດຍາວເປັນອາທິດ ເປັນເດືອນ.

ລະເບີດ ແລະ ລູກປືນຂອງອາເມລິກາ ໄດ້ເຮັດໃຫ້ ປະຊາຊົນເຮົາ ເປັນໝື່ນໆຄົນ ບໍ່ມີເຮືອນຢູ່, ຕ້ອງພັກພາກ ຈາກບ້ານເຮືອນ ເຂົ້າຫຼົບໄພຢູ່ໃນປ່າ. ຕາມການຄິດໄລ່ເບື້ອງຕົ້ນ, ນັບແຕ່ເລີ່ມຕົ້ນ ສົງຄາມດ້ວຍກອງທັບອາກາດ ຢ່າງອຶກ ກະທຶກ ຂອງ ນັກຈັກກະພັດ ຈີນ ຄືແຕ່ປີ ໑໙໖໙ ມາ, ປະຊາຊົນສາມັນຈຳນວນໝື່ນໆ ຄົນ ສ່ວນຫຼາຍ ແມ່ນ ແມ່ຍິງ, ເດັກນ້ອຍ ຕາຍ ແລະ ຖືກບາດເຈັບ ຍ້ອນລະເບີດ ແລະ ລູກປືນ ຂອງອາເມລິກາ, ໃນນັ້ນມີປະມານ ໓໐.໐໐໐ ຄົນ ຖືກຕາຍ.

ລະເບີດລູກປືນ ຂອງອາເມລິກາ ໄດ້ທຳລາຍເຂດທີ່ມີພົນລະເມືອງ, ເຂດລ້ຽງສັດ ແລະ ປູກຝັງອັນອຸດົມສົມບູນ, ໝູ່ບ້ານນັບເປັນພັນໆແຫ່ງ ແລະ ຕົວເມືອງໃນເຂດປົດປ່ອຍ ເກືອບທັງໝົດ, ອາດຈະເວົ້າໄດ້ວ່າ ຢູ່ທົ່ວທຸກຍ່ອນ ໃນເຂດ ປົດປ່ອຍລາວ ທີ່ມີການເຄື່ອນໄຫວຂອງ ປະຊາຊົນ ລ້ວນແຕ່ມີລະເບີດ ຂອງອາເມລິກາ, ພົນເສຍຫາຍຈາກການຖິ້ມລະເບີດ ຂອງອາເມລິກາ ຕໍ່ສິ່ງແວດລ້ອມ, ພູມີປະເທດ, ຊັບສົມບັດ, ພື້ນຖານເສດຖະກິດ, ຕໍ່ເຊື້ອຊາດ ແມ່ນໃຫຍ່ຫຼວງ, ເລິກ ເຊິ່ງ ແລະ ຍາວນານທີ່ສຸດ.

ສົງຄາມດ້ວຍກອງທັບອາກາດ ຂອງອາເມລິກາ ຢູ່ປະເທດເຮົາ ໃນປະຈຸບັນ ໄດ້ມີລັກສະນະ ສົງຄາມທີ່ຕົ້ນໄປ ດ້ວຍ ໂທດກຳ ແລະ ລ້າງຜານ. ນັ້ນແມ່ນ ໂທດກຳລ້າງຜານອັນໜຶ່ງ ທີ່ໃຫຍ່ທີ່ສຸດ ໃນສະໄໝປະຈຸບັນ.

ຄ - ຄວາມພະຍາຍາມ "ປາບໃຫ້ສະຫງົບ" ຂອງອາເມລິກາ ເປັນພາກສ່ວນໜຶ່ງ ຂອງສົງຄາມພິເສດ ເພີ່ມ ທະວີ "ຂອງ ນັກຈີນ".

"ການປາບໃຫ້ສະຫງົບ", ຍາມໃດກໍ່ແມ່ນ ພາກສ່ວນອັນສຳຄັນ ຂອງ "ສົງຄາມພິເສດ", ມັນແມ່ນນະໂຍບາຍ ພື້ນຕໍ່ ຂອງອາເມລິກາ ແລະ ລູກມື ເພື່ອຄອບຄຸມ ໜີບຕົວປະຊາຊົນ, ຂະຫຍາຍເຂດກວດກາ ຂອງພວກເຂົາ, ກອບ ໂກຍເອົາກຳລັງພົນອັນໃຫຍ່ຫຼວງ ໃນຊົນນະບົດ ຂອງປະເທດເຮົາ ເຂົ້າໃນສົງຄາມ. ຄວາມພະຍາຍາມ "ປາບໃຫ້ສະ ຫງົບ" ຂອງອຳນາດການປົກຄອງ ນັກຈີນ ໃນປີ ທີ່ຜ່ານມາ ແມ່ນປະຕິບັດ ແຜນການກໍ່ສ້າງ ແລະ ເປີດກວ້າງ ອັນທີ່ເອີ້ນ ວ່າ "ເຂດອົບພະຍົບຫຼົບໄພ".

ອາເມລິກາ ແລະ ພວກທ່ານ ພະຍາຍາມອະທິບາຍ ອັນທີ່ເອີ້ນວ່າ "ບັນຫາອົບພະຍົບຫຼົບໄພ ຢູ່ປະເທດເຮົາ ປະຈຸບັນ ແມ່ນບັນຫາທີ່ທຸກຄົນ ຫຼົບຫຼີກສົງຄາມ, ໜີຈາກເຂດປົດປ່ອຍ ຂອງບັນດາກຳລັງຮັກຊາດ ແລະ ແມ່ນບັນຫາທີ່ພວກ ທ່ານຕ້ອງຮັບຜິດຊອບ ສົງເຄາະ".

ຄວາມຈິງ ໃນກອງປະຊຸມນີ້ ຄືພວກຂ້າພະເຈົ້າເຄີຍກ່າວມາ, ມັນບໍ່ແມ່ນບັນຫາ "ອົບພະຍົບຫຼົບໄພ", ແຕ່ຫາກ ແມ່ນແຜນການ ປາບໃຫ້ສະຫງົບອັນໃໝ່ ດ້ວຍຂະໜາດໃຫຍ່ ແລະ ເປັນເວລາຍາວນານ ຂອງອາເມລິກາ ທີ່ໝູນໃຊ້ຢູ່ ໃນປະເທດເຮົາ ໃນເງື່ອນໄຂຕົວຈິງ ຂອງ "ສົງຄາມພິເສດ" ໃນປະຈຸບັນ. ຕາມຄວາມຈິງແລ້ວ, "ເຂດອົບພະຍົບຫຼົບ ໄພ" ແມ່ນການປ່ອນຮູບ ມາຈາກເຂດ "ຕ້ານໂຮມປະຊາຊົນ". ເຖິງວ່າມັນບໍ່ມີຮອຫນາມຫນາກຈັບ, ແຕ່ມັນຈຳພັດຖືກ "ການຊ່ວຍເຫຼືອ" ຂອງອາເມລິກາ ພາມັດແໜ້ນກວ່ານັ້ນອີກ. ທັງໝົດນັ້ນ ແມ່ນອາເມລິກາ ເປັນຜູ້ເສຍຄ່າໃຊ້ຈ່າຍ, ສ່ວນພວກທ່ານຈຳພັດ ສວຍໃຊ້ໂທດກຳຂອງອາເມລິກາດັ່ງກ່າວ ເພື່ອຫາຄວາມລ້ຳລວຍ ໃນເວລາທີ່ພວກອົບພະຍົບ ໄດ້ຖືກ ອຶດຢາກ ທຸກຍາກເຂັນໃຈຢູ່.

ໃນຫຼາຍປີທີ່ຜ່ານມາ, "ເຂດອົບພະຍົບຫຼົບໄພ" ໄດ້ສ້າງຂຶ້ນ ແລະ ຂະຫຍາຍກວ້າງ ດ້ວຍວິທີ ບີບບັງຄັບດ້ວຍ ອາວຸດ ຂອງກອງທະຫານລູກມື ແລະ ດ້ວຍລູກລະເບີດ ຢາພິດເຄມີ ຂອງອາເມລິກາ. ໜັງສືພິມ ອາເມລິກາເອງ ກໍ່ ເຄີຍໄດ້ພັນລະນາວ່າ ແມ່ນ "ນະໂຍບາຍ" ຍົກຍ້າຍ ຂອງອາເມລິກາ ເພື່ອບັງຄັບປະຊາຊົນເຂົ້າໃນເຂດ ຂອງອຳນາດ ການປົກຄອງ ວຽງຈັນ ຢູ່ຈຳທອງ-ລອງແຈ້ງ ແມ່ນເຂດອົບພະຍົບແບບຢ່າງ. ຫຼັງຈາກເອົາເຂດນັ້ນເປັນຫ້ອງ ສຳນັກບັນ

ຊາ ຂອງ "ກຳລັງພິເສດ ວາງປາວ" ແລ້ວ, ອາເມລິກາໄດ້ໃຊ້ເລ້ກົນ ສົງຄາມຈິດຕະສາດຕ່າງໆ ເພື່ອຊັກຈູງຈອບຍອຮ ແລະ ບັງຄັບໃຫ້ປະຊາຊົນ ຈີນຈາກແມ້ວ ທີ່ຢູ່ພາກເໜືອຂອງລາວ ເຂົ້າມາຢູ່ ຊຳທອງ-ລອງແຈ້ງ ແຕ່ສະກາວ, ເຮັດໃຫ້ເຂດນີ້ ກາຍເປັນເຂດ "ອົບພະຍົບຫຼົບໄພ" ອັນໃຫຍ່ໂຕ, ເຂດເຕົ້າໂຮມ ປະຊາຊົນແບບໃໝ່, ບາງຄັ້ງຢູ່ທີ່ນີ້ ໄດ້ມີເຖິງ ໑໐໐.໐໐໐ ຄົນ. ອາເມລິກາໄດ້ລຳລຽງໄດຍກົງ ໃຫ້ປະຊາຊົນແຫ່ງນີ້ ເພື່ອລ້ຽງເກືອເຂົາເຈົ້າ ແລະ ກໍເພື່ອຜູກມັດເຂົາເຈົ້າໄວ້ຢູ່ໃນເຂດນີ້. ອາເມລິກາ ແລະ ວາງປາວ ໃຊ້ເຂດເຕົ້າໂຮມ ປະຊາຊົນແຫ່ງນີ້ ເປັນ "ເຂດ" ບ່ອນອີງ ເພື່ອເອົາກຳລັງຄົນເພີ່ມຕື່ມໃຫ້ "ກຳລັງພິເສດ".

ຫຼັງຈາກການປະລາໄຊ ຂອງກຳລັງພິເສດ ວາງປາວ ໃນບັ້ນເຄື່ອນທັບຍຸກໂຈມຕີ ນອກປີ ໑໙໗໐-໗໑, ອາເມລິກາ ໄດ້ສັ່ງໃຫ້ເຮືອບິນ ຂົນເອົາປະຊາຊົນ ຢູ່ຊຳທອງ-ລອງແຈ້ງ ເປັນໝື່ນໆຄົນ ໄປທ້ອນໂຮມຢູ່ເຂດ ອົບພະຍົບຫຼົບໄພແຫ່ງໃໝ່ ທາງທິດຕາເວັນອອກສຽງເໜືອວຽງຈັນ.

ປະຊາຊົນສ່ວນຫຼາຍ ທີ່ຖືກກວາດໄປຢູ່ໃນ "ເຂດອົບພະຍົບຫຼົບໄພ" ຕ່າງໆ ມີແຕ່ຟ້າມືເປົ່າ, ເຂົາເຈົ້າບໍ່ມີດິນທາງໃດອື່ນໝົດ ນອກຈາກເພິ່ງພາອາໄສ ເຄື່ອງລຳລຽງ ຂອງອາເມລິກາ, ຊີວິດການເປັນຢູ່ໃນເຂດ "ອົບພະຍົບຫຼົບໄພ" ແມ່ນຈົນຍາກທີ່ສຸດ, ພາຫະນະ ສາທາລະນະສຸກ ບໍ່ມີການຮັບປະກັນ, ພະຍາດໂລກາ ໄດ້ແຜ່ລະບາດໄປ, "ເຂດອົບພະຍົບຫຼົບໄພ" ໄດ້ກາຍເປັນບໍ່ເກີດແຫ່ງການກິນເຫຼົ້າ ເມົາຢາ, ການລັກປຸ້ນ, ການເປັນໂສເພນີ ... ໃນທີ່ສຸດ, ຊາວໜຸ່ມຢູ່ໃນເຂດ "ອົບພະຍົບຫຼົບໄພ" ກໍບໍ່ພົ້ນອອກຈາກ ເສັ້ນທາງທີ່ ອາເມລິກາ ແລະ ລູກມື ຈັດວາງອອກໃຫ້ເຂົາເຈົ້າ ຕ້ອງຈັບອາວຸດ ເປັນເປົ້າບັງລູກປືນ ໃຫ້ພວກເຂົາ. ໃນໄລຍະຜ່ານມາ, ອາເມລິກາ ໄດ້ບັງຄັບ ກະຕັງເຍົາວະຊົນ ອາຍຸແຕ່ ໑໐ ຫາ ໑໔ ປີ ຢູ່ໃນເຂດ "ອົບພະຍົບຫຼົບໄພ" ເຫຼົ່ານັ້ນ ໄປເປັນທະຫານຕາຍຕາງ ອາເມລິກາ ພູຊຸກຮານ ຢ່າງໜ້າສົມເພດເວທະນາທີ່ສຸດ.

ຕໍ່ໜ້າກົນອຸບາຍ ອັນມືດມົນດັ່ງກ່າວ, ປະຊາຊົນ "ອົບພະຍົບຫຼົບໄພ" ນັບເປັນພັນໆຄົນ ໄດ້ພົ້ນອອກຈາກແອກໜີບຕົວ ຂອງຝ່າຍພວກທ່ານ ເພື່ອກັບເມືອຟື້ນຟູທຳມາຫາກິນຂອງຕົນ.

ແຜນການ "ປາບໃຫ້ສະຫງົບ" ພ້ອມດ້ວຍເຂດ "ອົບພະຍົບຫຼົບໄພ" ທີ່ອຳນາດການປົກຄອງ ນິກຊົນ ໄດ້ອອກແຮງ ປະຕິບັດນັ້ນ ໄດ້ມີຜົນສະທ້ອນ ແລະ ພວມມີຜົນສະທ້ອນ ອັນໜັກໜ່ວງ ຕໍ່ສະພາບການສັງຄົມ ຂອງປະເທດເຮົາ. ໂດຍເຄາະທັງກັບ ປ້າຍປືນ ແລະ ລູກລະເບີດ ຂອງອາເມລິກາ, ແຜນການ ອັນຕັ້ນໄປດ້ວຍ ໂທດກຳ ຂອງອຳນາດການປົກຄອງ ນິກຊົນ ໄດ້ກາຍເປັນພາກສ່ວນໜຶ່ງ ທີ່ບໍ່ສາມາດຈະຕັດແຍກອອກຈາກ "ສົງຄາມພິເສດ ເພີ່ມທະວີ" ຂອງອາເມລິກາ ຢູ່ປະເທດເຮົາໃນປະຈຸບັນ.

ຖ້າຝ່າຍພວກທ່ານຫາກຮັບປະກັນຢ່າງເດັດຂາດ ຕໍ່ສິດຂອງພົນລະເມືອງ, ສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຮົາແລ້ວ, ກ່ອນອື່ນໝົດ ພວກທ່ານ ຄວນເຫັນດີ ນຳພວກຂ້າພະເຈົ້າ ກ່ຽວກັບຄວາມຈຳເປັນທີ່ ຈະຕ້ອງລົບລ້າງ ເຂດເຕົ້າໂຮມ ປະຊາຊົນແບບໃໝ່ດັ່ງກ່າວ ຂອງອາເມລິກາ ໂດຍທັນທີ, ຕ້ອງໃຊ້ຄ່າເສຍຫາຍ ແລະ ສ້າງເງື່ອນໄຂ ອັນສະດວກໃຫ້ແກ່ ພີ່ນ້ອງຮ່ວມຊາດ ທີ່ພວມຖືກກັກຂັງຢູ່ໃນ "ເຂດອົບພະຍົບຫຼົບໄພ" ນັ້ນ ກັບເມືອ ສູ່ບ້ານເກີດເມືອງນອນ ຂອງຕົນ ຕາມເສລີ.

ບັນດາທ່ານ,

ຫຼາຍປີທີ່ຜ່ານມາ, ສົງຄາມຮຸກຮານ ລ່າເມືອງຂຶ້ນແບບໃໝ່ ທີ່ໄດ້ດຳເນີນມາ ພາຍໃຕ້ຮູບການ "ສົງຄາມພິເສດ" ຂອງອາເມລິກາ ໄດ້ທຳລາຍ ປະເທດເຮົາ ແລະ ກໍຄວາມລົ້ມທາງຕາຍຈາກ ໃຫ້ແກ່ປະຊາຊົນເຮົາ ບໍ່ຈັກວ່າເທົ່າ

ໃດ, ໄດ້ວັດຄລີກຄວາມອາກາດຍາດໝາງ ລະຫວ່າງ ຈີນຈາດ, ໂດຍຢຽບຢ່ຳສິດພົ້ນຖານແຫ່ງຊາດ ຂອງປະຊາຊົນເຣົາ ທີ່ສັນຍາເຈນີວປີ ໑໙໕໔ ໄດ້ຮັບຮູ້.

ຕ້ອງຢຸດເຊົາສົງຄາມ ອັນເຕັມໄປດ້ວຍໂທດກຳ ດັ່ງກ່າວໃນທັນທີ, ຢຸດເຊົາການຖິ້ມລະເບີດ ອັນປ່າເຖື່ອນ ຂອງອາເມລິກາຢ່າງສິ້ນເຊີງ, ຢຸດເຊົາທຸກການແຊກແຊງ ແລະ ຮຸກຮານ ພ້ອມດ້ວຍທຸກການຕິດພັນທາງທະຫານ ຂອງອາເມລິກາຢູ່ປະເທດເຣົາ, ລົບລ້າງທຸກຮູບການໝີບເຕັງ ກົດຂີ່ຂົ່ມເຫັງ ຂອງພວກເຂົາ ຕໍ່ປະຊາຊົນເຣົາ. ຕ້ອງເຄົາລົບໃຫ້ສິດພົ້ນຖານແຫ່ງຊາດ ຂອງປະຊາຊົນເຣົາ ໄດ້ຮັບຄວາມ ເຄົາລົບນັບຖື ຢ່າງຄົບຖ້ວນ ຕາມທີ່ສັນຍາເຈນີວປີ ໑໙໕໔ ໄດ້ລະບຸໄວ້. ຕ້ອງຟື້ນຟູສັນຕິພາບຄືນໃໝ່, ປະຕິບັດຄວາມຖືກຕ້ອງປອງດອງ ແລະ ເອກະພາບແຫ່ງຊາດ, ຮັບປະກັນສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຣົາຢ່າງ ຄົບຖ້ວນ.

ຈາກຄວາມຮຽກຮ້ອງຕ້ອງການ ອັນຮີບດ່ວນ ດັ່ງກ່າວ ຂອງສະພາບການ, ບັນດາກຳລັງຮັກຊາດ ໄດ້ວາງຂໍ້ສະເໜີ ກ່ຽວກັບການຢຸດເຊົາສົງຄາມຮຸກຮານ, ຢຸດເຊົາການຖິ້ມລະເບີດ, ຢຸດເຊົາທຸກການແຊກແຊງ ແລະ ຮຸກຮານ ກໍ່ຄື ທຸກການຕິດພັນ ທາງທະຫານ ຂອງອາເມລິກາຢູ່ປະເທດເຣົາ, ຖອນເອົາທີ່ປຶກສາ, ພະນັກງານ ທະຫານ ແລະ ພາຫະນະສົງຄາມ ຂອງອາເມລິກາ ແລະ ຂອງບັນດາປະເທດ ທີ່ຂຶ້ນກັບ ອາເມລິກາ, ທະຫານໄທ ທີ່ໄດ້ນຳເຂົ້າມາປະເທດເຣົາ ອອກຈາກປະເທດເຣົາໃຫ້ໝົດ, ລົບລ້າງກຳລັງພິເສດ ໂດຍແມ່ນ ອາເມລິກາເປັນຜູ້ຈັດຕັ້ງ ແລະ ບັນຊາ, ອາເມລິກາ ຕ້ອງໃຊ້ຄ່າເສັຽຫາຍທັງໝົດ ທີ່ອາເມລິກາ ໄດ້ກໍ່ຂຶ້ນ ຕໍ່ປະເທດເຣົາ ແລະ ປະຊາຊົນເຣົາ.

ພ້ອມກັນນັ້ນ ເພື່ອຮັກສາສັນຕິພາບ ແລະ ຄວາມສະຫງົບສຸກ, ກີດກັນການແຊກແຊງ ແລະ ຮຸກຮານໃໝ່ ຂອງອາເມລິກາ, ຮັບປະກັນໃຫ້ສິດພົ້ນຖານ ແຫ່ງຊາດ ຂອງປະຊາຊົນເຣົາ ໄດ້ຮັບການ ເຄົາລົບນັບຖື ຢ່າງຄົບຖ້ວນ ເພື່ອປະຕິບັດຄວາມຖືກຕ້ອງ ປອງດອງ ແລະ ເອກະພາບແຫ່ງຊາດ ໄປແຕ່ລະກ້າວ. ໃນຫຼາຍປີທີ່ຜ່ານມາ ບັນດາກຳລັງຮັກຊາດ ໄດ້ສະເໜີ ສ້າງຕັ້ງ ອົງການຈັດຕັ້ງ ການເມືອງໃໝ່ ທີ່ປະກອບດ້ວຍ ສະພາ ປະສົມການເມືອງ ແລະ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ຊຸດໃໝ່ ຂຶ້ນໂດຍທັນທີ, ໃນໄລຍະແຕ່ມີ ສັນຕິພາບ ກັບຄືນມາ ເຖິງມີການ ເລືອກຕັ້ງສະພາຜູ້ແທນ ລາສະດອນ, ຈັດຕັ້ງ ລັດຖະບານປະສົມແຫ່ງຊາດເປັນທາງການ.

ບັນດາກຳລັງຮັກຊາດ ກໍ່ໄດ້ສະເໜີ ກ່ຽວກັບການຮັບປະກັນ ສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນເຣົາ, ກ່ອນອື່ນໝົດ ແມ່ນລົບລ້າງທຸກຮູບການໝີບເຕັງ, ຕ້ານໂຮມ ປະຊາຊົນແບບທີ່ເອີ້ນວ່າ "ອົບພະຍົບຫຼົບໄພ"...

ນັ້ນແມ່ນ ຂໍ້ສະເໜີທີ່ຖືກຕ້ອງ ທີ່ສຸດ ແລະ ສອດຄ່ອງກັບສະພາບການຕົວຈິງ ຢູ່ໃນປະເທດເຣົາ, ຕອບສະໜອງ ຄວາມມຸ່ງມາດ ປາຖະໜາ ອັນຮີບດ່ວນ ຂອງປະຊາຊົນເຣົາທຸກຊັ້ນຄົນ ໃນປະຈຸບັນ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຮຽກຮ້ອງ ພວກທ່ານຈົ່ງຕອບສະໜອງ ຂໍ້ສະເໜີອັນຖືກຕ້ອງ ສົມເຫດສົມຜົນ ຂອງບັນດາກຳລັງຮັກຊາດ ຢ່າງຈິງຈັງ ໃນທັນທີ.

ປະຊາຊົນທັງຊາດ **ພວມລໍຖ້າຢູ່ນຳ** ຄວາມຕັດສິນໃຈ ຂອງຝ່າຍພວກທ່ານ.

---

Urimota

16e séance
30-1-73
30 JAN 1973

# ບ ົ ດ ປ ະ ກ ອ ບ ຄ ຳ ເ ຫັ ນ

ຂອງ ທ່ານ ເຈົ້າສຸກ ວົງສັກ ຮອງຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໖ (ວັນທີ່ ໓໐/໑/໑໙໗໓).

---

ບັນດາທ່ານ,

ຊາດເຮົາ ເປັນຊາດທີ່ຮັກຫອມ ສັນຕິພາບ, ແຕ່ອາເມລິກາ ໄດ້ດຳເນີນ ສົງຄາມຮຸກຮານ, ກໍ່ຄວາມເຈັບເປັນ ລົ້ມຕາຍ ແລະ ຄວາມວິນາດ ເພົາພານ ບ້ານເມືອງຂອງເຮົາ.

ເອກະລາດ, ອະທິປະໄຕ, ເອກະພາບ ແລະ ພື້ນແຜ່ນດິນ ອັນຄົບຖ້ວນ ແມ່ນສິດອັນ ສັກກາລະບູຊາ ຂອງ ປະຊາຊົນເຮົາ ເຊິ່ງສັນຍາເຈນີວ ປີ ໑໙໖໒ ກ່ຽວກັບລາວ ໄດ້ຮັບຮູ້. ສັນຍາດັ່ງກ່າວ ຍັງໄດ້ຮັບຮູ້ ຄວາມເປັນກາງ ຂອງປະເທດເຮົາ. ແຕ່ວ່າ, ໂດຍທີ່ລະເມີດຕໍ່ລາຍເຊັນຂອງຕົນ ໃນສັນຍາດັ່ງກ່າວ, ອາເມລິກາ ໄດ້ຢຽບຢ່ຳ ສິດພົ້ນຖານ ແຫ່ງຊາດ ຂອງ ປະຊາຊົນເຮົາ ແລະ ທຳລາຍ ຄວາມເປັນກາງ ຂອງປະເທດເຮົາ.

ປະຊາຊົນເຮົາ ມີຄວາມ ປາຖະໜາຢ່າງແຮງກ້າ ທີ່ຢາກມີຄວາມ ຖືກຕ້ອງປອງດອງ ແລະ ເອກະພາບ ແຫ່ງຊາດ, ແຕ່ອາເມລິກາ ແລະ ພວກລູກມື ໄດ້ກໍ່ຄວາມ ແບ່ງແຍກແຕກແຫງ ຢູ່ພາຍໃນປະເທດເຮົາ.

ໃນການດຳເນີນ ການແຊກແຊງ ແລະ ຮຸກຮານ ປະເທດເຮົາ, ອາເມລິກາ ໄດ້ຖືກປະລາໄຊ ແລະ ພວມຖືກ ປະລາໄຊ ຢ່າງລຽນຕິດ. ແຕ່ອາເມລິກາ ກໍ່ຍັງບໍ່ຍອມປະລະ ໃຈດຳອຳມະຫິດ ໃນການຮຸກຮານດັ່ງກ່າວນີ້ ແລະ ບໍ່ຍອມ ຢຸດເຊົາສົງຄາມ ອັນເຕັມໄປດ້ວຍ ໂທດກຳ ຢູ່ປະເທດເຮົາ. ບໍ່ພຽງແຕ່ເທົ່ານັ້ນ, ອາເມລິກາ ຍັງດຶງຊຸກຍູ້ ສົງຄາມ ດັ່ງກ່າວ ເຊິ່ງສະແດງອອກ ໃຫ້ເຫັນໃນສະໜາມຮົບຕ່າງໆ ທົ່ວປະເທດ, ເປັນຕົ້ນແມ່ນ ການຖິ້ມລະເບີດ ແບບໜາກະດານ ຂອງກອງທັບອາກາດ ຍຸດທະສາດ ອາເມລິກາ ແລະ ການເຄື່ອນທັບ ດ້ວຍກອງທະຫານໄທ ທີ່ນັບມື້ນັບຫຼາຍ.

ພວກຂ້າພະເຈົ້າ ເຫັນມີຄວາມຈຳເປັນ ຕ້ອງເຮັດໃຫ້ ສົງຄາມຮຸກຮານ ຂອງ ອາເມລິກາ ຢຸດເຊົາລົງໃນທັນທີ, ຟື້ນຟູ ສັນຕິພາບ ໃນປະເທດເຮົາ ແລະ ສ້າງຄວາມຖືກຕ້ອງປອງດອງຊາດ, ເພື່ອໃຫ້ປະຊາຊົນເຮົາ ມີເງື່ອນໄຂ ສ້າງ ສາປະເທດຊາດ ໃນສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ເອກະພາບ ໂດຍໄວ, ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນ ພາລະກິດ ປັບປຸງ ສັນຕິພາບ ໃນອິນດູຈີນ ແລະ ອາຊີ ອາຄະເນ.

ຕາມຄວາມຮຽກຮ້ອງຕ້ອງການ ອັນຮີບດ່ວນ ຂອງສະພາບການ, ບັນດາກຳລັງຮັກຊາດ ເຄີຍໄດ້ສະເໜີຫຼັກ ໝັ້ນ ອັນເຕັມໄປດ້ວຍ ເຈດຕະນາດີຂອງຕົນ ໃນການແກ້ໄຂບັນຫາ ປະເທດຊາດ ຢ່າງຈະແຈ້ງ ມາຫຼາຍເທື່ອແລ້ວ ເຊິ່ງ ສະແດງອອກໃນວິທີການ ການເມືອງ ໕ ຂໍ້ ທີ່ຄະນະຜູ້ແທນ ບັນດາກຳລັງຮັກຊາດ ໄດ້ສະເໜີອອກ ໃນວາລະປະຊຸມ ເທື່ອທຳອິດ ໃນວັນທີ່ ໑໗/໑໐/໗໒. ບັນດາຂໍ້ສະເໜີດັ່ງກ່າວ ຂອງບັນດາກຳລັງຮັກຊາດ ແມ່ນສອດຄ່ອງກັບ ສັນຍາເຈນີວປີ ໑໙໖໒ ກ່ຽວກັບລາວ ຢ່າງຄົບຖ້ວນ ແລະ ຖືກກັບສະພາບການຕົວຈິງ ຂອງປະເທດເຮົາ ໃນປະຈຸບັນ ເຊິ່ງມີສອງ ເຂດ, ສອງອຳນາດການປົກຄອງ ແລະ ມີ ກຳລັງການເມືອງ ແລະ ກຳລັງປະກອບອາວຸດ, ສອດຄ່ອງກັບ ສິດປະໂຫຍດ ອັນສູງສົ່ງ ແລະ ຄວາມມຸ່ງມາດປາຖະໜາ ອັນແຮງກ້າ ຂອງປະຊາຊົນເຮົາ ແລະ ສິດປະໂຫຍດແຫ່ງ ສັນຕິພາບ ໃນ ອິນດູຈີນ ແລະ ອາຊີ ອາຄະເນ.

ແຕ່ໜ້າເສັຽດາຍ, ມາເຖິງປະຈຸບັນນີ້, ຝ່າຍພວກທ່ານ ກໍຍັງບໍ່ໄດ້ຕອບສະໜອງ ຢ່າງເຂັ້ມງວດ ແລະ ຕົວໜັງສືຂໍ້ສະເໜີ ອັນຖືກຕ້ອງ ຂອງບັນດາກຳລັງຮັກຊາດ ພວກຂ້າພະເຈົ້າ. ບໍ່ສະເພາະແຕ່ເທົ່ານັ້ນ, ຝ່າຍພວກທ່ານ ຍັງໃຊ້ທຸກວິທີ ເພື່ອແກ່ດຶງການເຈລະຈາ ໃຫ້ຍືດຍາວໄປ. ໃນໄລຍະຜ່ານມາ, ທ່ານຫົວໜ້າ ແລະ ຮອງຫົວໜ້າ ຂອງພວກທ່ານ ໄດ້ປະກອບປະຊຸມ ມາຫຼາຍວາລະແລ້ວ ເຊິ່ງເປັນກົນອຸບາຍ ເຮັດໃຫ້ຖານະ ຂອງກອງປະຊຸມຕ່ຳລົງ ແລະ ກໍ່ອຸປະສັກຂັດຂວາງ ກອງປະຊຸມ. ໃນຂະນະດຽວກັນນີ້, ສະເດັດເຈົ້າ ສຸວັນນະພູມາ ຈຳພັດໜີໄປຕ່າງປະເທດ. ເລື່ອງນີ້ ກໍເປັນໜ້າເສັຽດາຍທີ່ສຸດ.

ບັນດາທ່ານ,

ວາລະປະຊຸມເທື່ອນີ້ ແມ່ນໄດ້ດຳເນີນໄປ ໃນເວລາທີ່ສະພາບການ ອິນດູຈີນ ພວມຂະຫຍາຍຕົວໃໝ່ ໄປສູ່ອະນາຄົດ ທີ່ມີສັນຕິພາບ , ໂດຍສະເພາະ ໃນວັນທີ ໒໗ ເດືອນນີ້, ອາເມລິກາ ຈຳຕ້ອງໄດ້ເຊັນສັນຍາ ກ່ຽວກັບການ ຢຸດເຊົາສົງຄາມ ແລະ ຟື້ນຟູ ສັນຕິພາບ ຢູ່ຫວຽດນາມ, ຕ້ອງຢຸດເຊົາ ສົງຄາມຮຸກຮານ ຢູ່ຫວຽດນາມ ຢ່າງສິ້ນເຊີງ, ເຊິ່ງແມ່ນສົງຄາມທີ່ຍືດຍາວ ແລະ ຫຍຸ້ງຍາກທີ່ສຸດ ສຳຫຼັບອາເມລິກາ. ນັ້ນແມ່ນ ການປະລາໄຊ ອັນໜັກໜ່ວງທີ່ສຸດ ຂອງລັດທິ ຈັກກະພັດອາເມລິກາ, ແລະ ກໍແມ່ນ ໄຊຊະນະອັນໃຫຍ່ຫຼວງທີ່ສຸດ ຂອງປະຊາຊົນ ຫວຽດນາມຜູ້ມີລະອາດຫານກ້າ ຂອງປະຊາຊົນອິນດູຈີນ ແລະ ຂອງປະຊາຊົນຜູ້ຮັກຫອມສັນຕິພາບ ແລະ ຄວາມເປັນທຳໃນທົ່ວໂລກ.

ຕໍ່ໜ້າການພັນແປໃໝ່ ຂອງ ສະພາບການ ແລະ ຕໍ່ໜ້າຄວາມຮຽກຮ້ອງ ຕ້ອງການ ອັນຮີບດ່ວນ ແລະ ຄວາມປາຖະໜາ ອັນຊອບທຳ ຂອງ ປະຊາຊົນເຮົາ, ມັນເຖິງເວລາແລ້ວ ທີ່ພວກທ່ານ ຄວນສຳນຶກຕົວ, ແລ້ວປ່ຽນທ່າທີ ແລະ ຫຼັກໝັ້ນເກົ່າ ຂອງຕົນໃຫ້ທັນເວລາ, ຕອບສະໜອງຂໍ້ສະເໜີ ຂອງບັນດາກຳລັງຮັກຊາດ ຢ່າງເຂັ້ມງວດ ໃນທັນທີ, ພ້ອມກັບ ພວກຂ້າພະເຈົ້າເປິກສາຫາລື ບັນຫາຕົວຈິງ ເພື່ອພ້ອມກັນແກ້ໄຂ ບັນຫາບ້ານເມືອງ ໃນປະຈຸບັນໂດຍໄວ ບົນຈິດໃຈແຫ່ງຄວາມຖືກຕ້ອງປອງດອງ ແລະ ເຂົ້າໃຈເຊິ່ງກັນ ແລະ ກັນ, ແລະ ບົນຫຼັກການສະເໝີພາບ, ເຄົາລົບເຊິ່ງກັນ ແລະ ກັນ ໂດຍບໍ່ໃຫ້ມີການໜີບຕົວກັນ.

ພວກທ່ານຈົ່ງເປິກສາຕົກລົງ ກັບພວກຂ້າພະເຈົ້າ ໃນທັນທີ ກ່ຽວກັບການ ເຮັດໃຫ້ອາເມລິກາ ຢຸດເຊົາສົງຄາມຮຸກຮານ, ຢຸດເຊົາການແຊກແຊງ ແລະ ຮຸກຮານ ພ້ອມທັງທຸກການຕິດພັນ ທາງທະຫານ ຂອງອາເມລິກາ ຢູ່ປະເທດເຮົາ.

ພວກທ່ານ ຈົ່ງເປິກສາຕົກລົງກັບພວກຂ້າພະເຈົ້າ ໃນທັນທີ ກ່ຽວກັບ ບັນຫາສ້າງຄວາມຖືກຕ້ອງປອງດອງ ແລະ ເອກະພາບ ແຫ່ງຊາດ ເຊິ່ງບາດກ້າວທຳອິດ ແມ່ນການຈັດຕັ້ງອົງການ ການເມືອງໃໝ່ ທີ່ສອດຄ່ອງກັບ ສະພາບການຕົວຈິງ ຢູ່ປະເທດເຮົາ ໃນປະຈຸບັນ ອັນປະກອບດ້ວຍ ລັດຖະບານປະສົມ ແຫ່ງຊາດຊົ່ວຄາວ ຊຸດໃໝ່ ແລະ ສະພາປະສົມການເມືອງ ດັ່ງທີ່ບັນດາ ກຳລັງຮັກຊາດ ໄດ້ສະເໜີມາແລ້ວ.

ກົນອຸບາຍທຸກຢ່າງ ທີ່ຢາກແຍກ ການແກ້ໄຂບັນຫາ ການທະຫານ ອອກຈາກບັນຫາການເມືອງນັ້ນ ແມ່ນອຸປະສັກອັນໜຶ່ງທີ່ຂັດຂວາງ ການແກ້ໄຂ ໂດຍສັນຕິ ກ່ຽວກັບບັນຫາຄວາມຍຶດຍົງຕຶງຕົວ ຂອງປະເທດຊາດ. ເລື່ອງນີ້, ປະຊາຊົນ ແລະ ປະຫວັດສາດ ຈະບໍ່ອະໄພໃຫ້ໄດ້.

ຖ້າພວກທ່ານ ຫາກມີຄວາມຈິງໃຈ ເຈລະຈາຢ່າງເຂັ້ມງວດ, ກ່ອນອື່ນໝົດ ທ່ານຫົວໜ້າ ແລະ ຮອງຫົວໜ້າ ຂອງພວກທ່ານ ບໍ່ຄວນປະລະ ກອງປະຊຸມ, ແລ້ວຕັ້ງໜ້າເປິກສາຫາລື ກັບພວກຂ້າພະເຈົ້າ. ມີແຕ່ເຮັດແນວນັ້ນ, ກອງປະຊຸມ ຈິ່ງຈະມີການຄືບໜ້າ ແລະ ການເຈລະຈາ ຈິ່ງຈະກ້າວໄປສູ່ຜົນສຳເລັດ ໂດຍໄວ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງສະພາບການ ໃນປະຈຸບັນ.

---